ຄູ່ມືສຶກສາ ບົດຮຽນວັນສະບາໂຕຊັ້ນຜູ້ໃຫຍ່

ສະບັບອ່ານງ່າຍ ແລະ ຫຍໍ້

# ດານີເອນ

ໂດຍ: ເອລີອາສ໌ ບຣາຊິວ ເດີ ຊູຊາ

ມັງກອນ, ກຸມພາ, ມີນາ

2020

# ສາລະບານ

ບົດທີ


1. ກ່ອນອື່ນ ພວກເຮົາຈະອ່ານ ຈາກນັ້ນພວກເຮົາກໍຈະເຂົ້າໃຈ (28 ທັນວາ-1 ມັງກອນ)
2. ຈາກເຢຣູຊາເລັມໄປຫາບາບີໂລນ (4-10 ມັງກອນ)
3. ພຣະເຈົ້າສະແດງໃຫ້ເຫັນອານາຄົດ (11-17 ມັງກອນ)
4. ຈາກເຮືອນຄົວໄປສູ່ພະລາດຊະວັງ (18-24 ມັງກອນ)
5. ຈາກຫົວໃຈທີ່ຈອງຫອງປ່ຽນເປັນຫົວໃຈທີ່ຖ່ອມ (25-31 ມັງກອນ)
6. ກະສັດທີ່ຖືກທຳລາຍໂດຍໃຈທີ່ຈອງຫອງ (1-7 ກຸມພາ)
7. ຈາກຖ້ຳສິງໂຕໄປສູ່ຖ້ຳຂອງທູດສະຫວັນ (8-14 ກຸມພາ)
8. ຈາກທະເລທີ່ເຕັມໄປດ້ວຍພາຍຸໄປສູ່ເໝກເທິງສະຫວັນ (15-21 ກຸມພາ)
9. ຈາກຄວາມເປິເປື້ອນສູ່ຄວາມສະອາດບໍລິສຸດ (22-28 ກຸມພາ)
10. ຄວາມສຸກສະບາຍ ແລະ ຄວາມຫວັງຂອງດານີເອນ (29 ກຸມພາ - 6 ມີນາ)
11. ຈາກສົງຄາມໄປສູ່ໄຊຊະນະ (7-13 ມີນາ)
12. ຈາກພາກເໜືອແລະພາກໃຕ້ໄປສູ່ດິນແດນທີ່ສວຍງາມ (14-20 ມີນາ)
13. ຈາກດິນໄປສູ່ດາວເທິງຟ້າ (21-27 ມີນາ)

# ດານີເອນ ຜູ້ສົ່ງຂ່າວສານພິເສດສຳລັບຍຸກສຸດທ້າຍ

ພຣະທຳດານີເອນ ຄືຫົວຂໍ້ຂອງບົດຮຽນວັນສະບາໂຕໃນງວດນີ້. ມັນຄືພຣະທຳທີ່ມີຄວາມໝາຍຢ່າງຫຼວງຫຼາຍສຳລັບພວກເຮົາ. ພວກເຮົາກຳລັງດຳເນີນຊີວິດຢູ່ໃນຊ່ວງ “ເວລາແຫ່ງການສິ້ນສຸດ” (ດານີເອນ 12:9). ພຣະທຳດານີເອນກໍໃຫ້ຫຼັກຖານທີ່ມີພະລັງອຳນາດສຳລັບຄວາມເຊື່ອຂອງເຮົາໃນພຣະເຈົ້າ. ນອກຈາກນັ້ນ ມັນຍັງເປັນຫຼັກຖານທີ່ສຳຄັນສຳລັບຄວາມເຊື່ອຂອງເຮົາໃນພຣະເຢຊູ ສຳລັບຄວາມຕາຍຂອງພຣະອົງເທິງໄມ້ກາງແຂນ ແລະການສະເດັດກັບມາຂອງພຣະອົງ.

ດານີເອນ ບົດທີ 2,7,8 ແລະ 11 ກໍສະແດງໃຫ້ພວກເຮົາເຫັນອານາຈັກຕ່າງໆທີ່ຈະປົກຄອງເທິງໂລກນີ້: ອານາຈັກບາບີໂລນ, ມີເດຍ-ເປີເຊຍ, ກຣີກ, ໂຣມ ແລະ ອານາຈັກນິລັນດອນຂອງພຣະເຈົ້າ. ໃນທຸກມື້ນີ້ ພວກເຮົາເຫັນວ່າທຸກສິ່ງທຸກຢ່າງໄດ້ເກີດຂຶ້ນໃນປະຫວັດສາດຕາມທີ່ດານີເອນໄດ້ກ່າວໄວ້ທັງໝົດ. ອານາຈັກໂຣມໄດ້ສືບຕໍ່ຕັ້ງຢູ່ດັ່ງທີ່ດານີເອນໄດ້ບອກພວກເຮົາເຊັ່ນກັນ. ໃນພຣະທຳດານີເອນ 2:33,41 ອານາຈັກໂຣມັນໃນຍຸກສຸດທ້າຍກໍຄື ຕີນ ແລະ ນິ້ວຕີນຂອງຮູບປັ້ນໃຫຍ່. ຕີນແລະນິ້ວຕີນນັ້ນ ກໍສະແດງໃຫ້ພວກເຮົາເຫັນເຖິງອານາຈັກໂຣມັນໃນເວລານີ້ ເຊິ່ງກໍຄືປະເທດທີ່ແບ່ງແຍກກັນໃນທະວີບຢູໂຣບແລະໂບດໂຣມັນກາໂຕລິກ. ດັ່ງນັ້ນ ພວກເຮົາສາມາດເຫັນໄດ້ວ່າ ຄຳພະຍາກອນ ຫຼື ຂ່າວສານພິເສດຂອງດານີເອນນັ້ນໄດ້ກາຍເປັນຈິງ. ຄົນທີ່ມີຊີວິດຢູ່ໃນສະໄໝຂອງອານາຈັກບາບີໂລນ, ກຣີກ ຫຼື ໃນຍຸກຂອງອານາຈັກໂຣມເບື້ອງຕົ້ນນັ້ນກໍບໍ່ຮູ້ວ່າ ດານີເອນໄດ້ພະຍາກອນປະຫວັດສາດມະນຸດເອົາໄວ້ຢ່າງຖືກຕ້ອງ. ແຕ່ພວກເຮົາໃນເວລານີ້ກໍຮູ້ໄດ້.

ແມ່ນແລ້ວ ພວກເຮົາສາມາດເຫັນໄດ້ວ່າ ດານີເອນນັ້ນກໍກ່າວໄວ້ຢ່າງຖືກຕ້ອງກ່ຽວກັບອານາຈັກສາມແຫ່ງນີ້. ດັ່ງນັ້ນ ພວກເຮົາຈຶ່ງມີເຫດຜົນຫຼາຍຂຶ້ນທີ່ຈະເຊື່ອເພີ່ມຂຶ້ນກ່ຽວກັບອານາຈັກຂອງພຣະເຈົ້າໃນອະນາຄົດ. ອານາຈັກຈະເລີ່ມຂຶ້ນຫຼັງຈາກການສະເດັດມາຄັ້ງທີສອງ.

ແນ່ນອນວ່າ ພຣະທຳດານີເອນນັ້ນເປັນພຣະທຳທີ່ມີພະລັງ. ພຣະທຳເຫຼັ້ມນີ້ກໍເຮັດໃຫ້ຄວາມເຊື່ອຂອງພວກເຮົາເຂັ້ມແຂງ. ໃນຖານະທີ່ເປັນຄຣິສຕຽນເຊເວັນເດ

ອັດເວັນຕິດ ພວກເຮົາກໍພົບເຫດຜົນໃນພຣະທໍາດານີເອນສໍາລັບວຽກງານຄຣິສຕະຈັກຂອງເຮົາ ແລະ ເຫດຜົນທີ່ພວກເຮົາຢູ່ໃນໂລກນີ້. ໃນດານີເອນ 8:14, ພວກເຮົາອ່ານວ່າ: “ເຫດການນີ້ຈະດໍາເນີນຕໍ່ໄປເປັນເວລາ 2,300ວັນ ໃນລະຫວ່າງນີ້ຈະບໍ່ມີການຖວາຍເຄື່ອງບູຊາຍາມແລງແລະຍາມເຊົ້າ. ແລ້ວພຣະວິຫານກໍຈະໄດ້ຖືກສ້າງຂຶ້ນໃໝ່” ພຣະຄໍາພີຕອນນີ້ສະແດງໃຫ້ເຫັນສິ່ງດຽວທີ່ດານີເອນ 7:22,26,27 ສະແດງໃຫ້ພວກເຮົາເຫັນ. ຫຼັງຈາກວຽກງານຂອງພຣະເຈົ້າໃນຖານະເປັນຜູ້ພິພາກສາຈົບລົງ ພຣະອົງກໍຊົງສະແດງຄວາມພໍພຣະໄທຕໍ່ປະຊາຊົນຂອງພຣະອົງ. ແລ້ວພຣະອົງກໍຈະສົ່ງຈັດຕັ້ງອານາຈັກອັນຕະຫຼອດໄປເປັນນິດຂອງພຣະອົງ. ອານາຈັກຕ່າງໆຢູ່ໃນໂລກນີ້ຈະບໍ່ຄົງຢູ່ຕະຫຼອດໄປ. ແຕ່ອານາຈັກຂອງພຣະເຈົ້ານັ້ນຈະຄົງຢູ່.

ແມ່ນແລ້ວ ພຣະທໍາດານີເອນກໍສະແດງໃຫ້ພວກເຮົາເຫັນ “ພາບລວມ” ຂອງປະຫວັດສາດມະນຸດ. ແຕ່ພຣະທໍາເຫຼັ້ມນີ້ກໍຍັງສະແດງໃຫ້ພວກເຮົາເຫັນວ່າ ພຣະເຢຊູຊົງຢູ່ໃກ້ກັບພວກເຮົາແຕ່ລະຄົນແນວໃດ. ຄວາມຝັນຂອງກະສັດເນບູກາດເນດສາ ແລະເລື່ອງຂອງດານີເອນໃນຖໍ້າສິງກໍສະແດງໃຫ້ພວກເຮົາເຫັນວ່າ ພຣະເຈົ້ານັ້ນຊົງຢູ່ໃກ້ຊິດກັບພວກເຮົາຫຼາຍ. ດັ່ງທີ່ດານີເອນໄດ້ບອກກະສັດເບັນຊັດຊາເຣທີ່ຊົ່ວຮ້າຍວ່າ ພຣະເຈົ້າຊົງເປັນ “ອົງຊົງຄວບຄຸມທຸກສິ່ງທີ່ທ່ານເຮັດນັ້ນ” (ດານີເອນ 5:23).

ພຣະທໍາດານີເອນກໍຖືກຂຽນຂຶ້ນຫຼາຍໆຮ້ອຍປີກ່ອນ. ພຣະທໍາເຫຼັ້ມນີ້ກໍສືບຕໍ່ເປັນດັ່ງທີ່ເຄີຍເປັນໃນເມື່ອກ່ອນ. ນັ້ນກໍຄືເປັນເລື່ອງທີ່ຍິ່ງໃຫຍ່ກ່ຽວກັບພຣະເຢຊູ ແລະ ກ່ຽວກັບຄວາມຮັກຂອງພຣະອົງສໍາລັບພວກເຮົາ.

ເອລີອາດສ໌ ບຣາຊິວ ເດີ ຊູຊາ (**Elias Brasil de Souza**) ຜູ້ຂຽນບົດຮຽນວັນສະບາໂຕງວດນີ້ ເປັນຫົວໜ້າສະຖາບັນຄົ້ນຄວ້າພຣະຄໍາພີ (BRI) ຢູ່ທີ່ສໍານັກງານໃຫຍ່ຂອງໂບດເຊເວັນເດແອັດເວັນຕິດ. ເພິ່ນໄດ້ຈົບການສຶກສາປະລິນຍາເອກໃນຂະແໜງພຣະຄໍາພີເດີມຈາກມະຫາວິທະຍາໄລແອນດຣິວ ປະເທດສະຫະລັດອາເມລິກາ.

# ບົດທີ 1

## ກ່ອນອື່ນນັ້ນ ພວກເຮົາຈະອ່ານ ແລ້ວພວກເຮົາກໍຈະເຂົ້າໃຈ

**(28 ທັນວາ - 1 ມັງກອນ)**

**ບ່າຍວັນສະບາໂຕ: 28 ທັນວາ**

**ອ່ານສຳລັບບົດຮຽນອາທິດນີ້:**

**ລູກາ 24:25-27; ດານີເອນ 7:6; ຈົດເຊັນບັນຊີ 14:34; ເອເຊກຽນ 4:5,6; ດານີເອນ 9:23.**

**ຂໍ້ຄວນຈຳ:** *'ຟີລິບຈຶ່ງແລ່ນຫຍັບເຂົ້າໃກ້ ແລະ ໄດ້ຍິນເພິ່ນກຳລັງອ່ານໜັງສືຂອງຜູ້ທຳນວາຍເອຊາຍາຢູ່ ຟີລິບຈຶ່ງຖາມເພິ່ນວ່າ ທີ່ທ່ານອ່ານຢູ່ນັ້ນ ທ່ານເຂົ້າໃຈບໍ່?' (ກິດຈະການ 8:30)*

ໃນບົດຮຽນງວດນີ້ ພວກເຮົາຈະມາສຶກສາພຣະທຳດານີເອນ. ໃນຖານະທີ່ເປັນຄຣິສຕຽນເຊເວັນເດແອັດເວັນຕິດ ການເລີ່ມຕົ້ນຂອງເຮົາໃນການເປັນໂບດນັ້ນກໍມາຈາກພຣະທຳເຫຼັ້ມນີ້. ມັນເປັນເລື່ອງສຳຄັນທີ່ຈະຈື່ກົດບາງຢ່າງທີ່ສຳຄັນໃນຂະນະທີ່ພວກເຮົາອ່ານພຣະທຳດານີເອນ. ກົດເຫຼົ່ານີ້ຈະຊ່ວຍໃນການສຶກສາຄົ້ນຄ້ວາຂອງເຮົາ.

ກ່ອນອື່ນນັ້ນ ພວກເຮົາຈະຕ້ອງຈື່ຢູ່ສະເໝີວ່າ ພຣະທຳດານີເອນແມ່ນເວົ້າກ່ຽວກັບພຣະເຢຊູ. ພຣະຄຳພີທັງໝົດກໍກ່າວກ່ຽວກັບພຣະອົງເຊັ່ນດຽວກັນ.

ປະການທີສອງ ພວກເຮົາຈະຕ້ອງເບິ່ງວິທີການ ຫຼື ຮູບແບບທີ່ດານີເອນໄດ້ໃຊ້ເພື່ອຂຽນພຣະທຳເຫຼັ້ມນີ້ຂຶ້ນມາ. ມັນຊ່ວຍໃຫ້ພວກເຮົາເຂົ້າໃຈຄວາມໝາຍຂອງພຣະທຳເຫຼັ້ມນີ້.

ປະການທີສາມ ພວກເຮົາຈະຕ້ອງເຂົ້າໃຈວ່າ ເປັນຫຍັງດານີເອນຈຶ່ງໄດ້ຂຽນຄໍາພະຍາກອນເຫຼົ່ານີ້. ຄໍາພະຍາກອນຕ່າງໆນີ້ກໍເປັນຂ່າວສານທີ່ພິເສດຈາກພຣະເຈົ້າ.

ປະການທີສີ່ ພວກເຮົາຈະຕ້ອງເຂົ້າໃຈວ່າ ຄໍາພະຍາກອນເວລາຂອງດານີເອນນັ້ນບອກພວກເຮົາວ່າ ເມື່ອໃດສິ່ງຕ່າງໆນັ້ນຈຶ່ງຈະເກີດຂຶ້ນໃນອານາຄົດ.

ປະການທີຫ້າ ພວກເຮົາຈະຕ້ອງຈື່ວ່າ ພຣະທໍາດານີເອນນັ້ນ ບໍ່ພຽງແຕ່ບອກຂໍ້ມູນພວກເຮົາກ່ຽວກັບອານາຄົດເທົ່ານັ້ນ. ຂ່າວສານຂອງດານີເອນກໍຍັງມີຄວາມຈິງທີ່ສໍາຄັນສໍາລັບຊີວິດຂອງເຮົາໃນປະຈຸບັນນີ້ເຊັ່ນດຽວກັນ.

## ວັນອາທິດ 29 ທັນວາ

## <u>ພຣະທໍາດານີເອນສະແດງໃຫ້ພວກເຮົາເຫັນພຣະເຢຊູ (ລູກາ 24:25-27)</u>

**ພຣະຄໍາພີສະແດງໃຫ້ພວກເຮົາເຫັນພຣະເຢຊູແນວໃດ? ສໍາລັບຄໍາຕອບ ໃຫ້ອ່ານລູກາ 24:25-27; ໂຢຮັນ 5:39; ແລະ 2ໂກລິນໂທ 1:19-20.**

ພຣະຄໍາພີກໍກ່າວເຖິງພຣະເຢຊູທັງໝົດ. ພວກເຮົາເຫັນຄວາມຈິງນີ້ໃນທຸກໆບ່ອນໃນພຣະທໍາດານີເອນ. ບົດທີ1 ສະແດງໃຫ້ພວກເຮົາເຫັນປະສົບການຂອງດານີເອນ. ປະສົບການຂອງດານີເອນນັ້ນກໍຄືກັນກັບປະສົບການຂອງພຣະເຢຊູໃນຫຼາຍໆທາງ.

ຢູ່ໃນພຣະທໍາເຫຼັ້ມນີ້ ດານີເອນໄດ້ຢືນສູ້ກັບຄວາມຊົ່ວຮ້າຍ. ບົດທີ2 ເຮັດໃຫ້ເຮົາເຫັນຮູບຂອງກ້ອນຫີນ. ຫີນກ້ອນນີ້ສະແດງເຖິງອານາຈັກຂອງພຣະເຢຊູທີ່ຈະມາແທນທີ່ອານາຈັກຕ່າງໆເທິງໂລກນີ້. ບົດທີ3 ສະແດງໃຫ້ພວກເຮົາເຫັນພຣະເຢຊູໃນເຕົາຮ້ອນໜຶ່ງທີ່ເຕັມໄປດ້ວຍໄຟ. ບົດທີ4 ສະແດງໃຫ້ພວກເຮົາເຫັນວ່າ ພຣະເຈົ້າໄດ້ປົດກະສັດເນບູກາດເນັດສາອອກຈາກການປົກຄອງອານາຈັກຂອງເພິ່ນໃນຊ່ວງເວລາໜຶ່ງ. ບົດທີ5 ສະແດງໃຫ້ພວກເຮົາເຫັນຈຸດສຸດທ້າຍຂອງກະສັດ ເບັນຊັດຊາເຣແລະອານາຈັກບາບີໂລນ. ບົດທີ6 ສະແດງໃຫ້ພວກເຮົາເຫັນ ຜູ້ນໍາທີ່ຊົ່ວ

ຮ້າຍທີ່ວາງແຜນທຳລາຍດານີເອນ. ບົດທີ7 ສະແດງໃຫ້ພວກເຮົາເຫັນວ່າ ພຣະເຢຊູຊົງເປັນບຸດມະນຸດ. (ດານີເອນ 7:13). ບົດທີ8 ສະແດງໃຫ້ພວກເຮົາເຫັນວ່າ ພຣະເຢຊູຊົງເປັນລູກແກະທີ່ຖືກຂ້າ. ບົດທີ10-12 ສະແດງໃຫ້ເຫັນວ່າ ພຣະເຢຊູເປັນດັ່ງມີກາເອນ ພຣະອົງໄດ້ຊ່ອຍປະຊາຊົນຂອງພຣະເຈົ້າຈາກຄວາມຕາຍ, ດັ່ງນັ້ນ ພຣະທຳດານີເອນນັ້ນກໍກ່າວ ເຖິງພຣະເຢຊູທັງໝົດ.

## ວັນຈັນ 30 ທັນວາ

## <u>ພາກສ່ວນຕ່າງໆຂອງພຣະທຳດານີເອນ (ດານີເອນ ບົດທີ 2-7)</u>

ດານີເອນໄດ້ຂຽນບົດທີ 2-7 ເປັນພາສາອາຣາເມອິກ. ບົດເຫຼົ່ານີ້ກໍສະແດງໃຫ້ເຫັນໂຄງຮ່າງ ຫຼື ແບບແຜນທີ່ພິເສດ.

A. ຄວາມຝັນຂອງເນບູກາດເນັດສາກ່ຽວກັບອານາຈັກ 4 ແຫ່ງ (ດານີເອນ ບົດທີ2)

B. ພຣະເຈົ້າຊົງຊ່ອຍໝູ່ຂອງດານີເອນຈາກເຕົາອົບທີ່ເຕັມໄປດ້ວຍໄຟ (ດານີເອນ ບົດທີ3)

C. ພຣະເຈົ້າຊົງພິພາກສາກະສັດເນບູກາດເນັດສາ (ດານີເອນ ບົດທີ4)

C’. ພຣະເຈົ້າຊົງພິພາກສາກະສັດເບັນຊັດຊາເຣ (ດານີເອນ ບົດທີ5)

B’. ພຣະເຈົ້າຊົງຊ່ອຍດານີເອນໃຫ້ພົ້ນຈາກຖໍ້າສິງ (ດານີເອນ ບົດທີ6)

A’. ຄວາມຝັນຂອງດານີເອນກ່ຽວກັບ 4 ອານາຈັກ (ດານີເອນ ບົດທີ7)

ແບບແຜນນີ້ຊ່ອຍໃຫ້ພວກເຮົາເຫັນແນວຄິດທີ່ສຳຄັນທີ່ສຸດໃນດານີເອນບົດທີ2-7. ພຣະເຈົ້າຊົງຄວບຄຸມແຜ່ນດິນໂລກນີ້. ພຣະເຈົ້າຊົງແຕ່ງຕັ້ງໃຫ້ກະສັດທັງຫຼາຍມີອຳນາດ ແລະ ກໍຊົງຖອນພວກເຂົາອອກຈາກຕຳແໜ່ງນັ້ນ.

ພຣະເຈົ້າຊົງໃຊ້ແຜນການອັນດຽວກັນນີ້ໃນພຣະທຳດານີເອນ ເຊັ່ນດຽວກັນ. ດານີເອນໄດ້ສະແດງເຖິງຄຳພະຍາກອນ ຫຼື ຂ່າວສານກ່ຽວກັບເວລາ 4ຢ່າງ. ພຣະເຈົ້າຊົງປະທານຂ່າວສານອັນດຽວກັນໃນຄຳພະຍາກອນແຕ່ລະຄຳ. ຄຳພະຍາກອນແຕ່ລະຄຳນັ້ນກໍແຕກຕ່າງກັນໜ້ອຍໜຶ່ງ. ແຕ່ຄຳພະຍາກອນທັງ4ຢ່າງ ກໍສະແດງໃຫ້ເຫັນເວລາອັນດຽວກັນໃນປະຫວັດສາດ. ພວກເຮົາສາມາດເຫັນແບບແຜນນີ້ ໃນຕາຕະລາງລຸ່ມນີ້. ແບບແຜນນີ້ກໍສະແດງໃຫ້ພວກເຮົາເຫັນວ່າພຣະເຈົ້າຊົງຄວບຄຸມທຸກຢ່າງໄວ້.

| **ດານີເອນ ບົດທີ 2** | **ດານີເອນ ບົດທີ 7** | **ດານີເອນ ບົດທີ 8, 9** | **ດານີເອນ ບົດທີ10-12** |
|---|---|---|---|
| ບາບີໂລນ | ບາບີໂລນ | | |
| ມີເດຍ-ເປີເຊຍ | ມີເດຍ-ເປີເຊຍ | ມີເດຍ-ເປີເຊຍ | ມີເດຍ-ເປີເຊຍ |
| ກຣີກ | ກຣີກ | ກຣີກ | ກຣີກ |
| ໂລມ | ໂລມ | ໂລມ | ໂລມ |
| ພຣະເຈົ້າຊົງຈັດຕັ້ງອານາຈັກຂອງພຣະອົງ | ປະຊາຊົນຂອງພຣະເຈົ້າພິພາກສາຄົນຊົ່ວທີ່ຕາຍໄປແລ້ວ ໃນໄລຍະເວລາ1000ປີ | ພຣະເຈົ້າຊົງຊຳລະຄວາມຜິດບາບອອກຈາກພຣະວິຫານຢູ່ໃນສະຫວັນ | ມີຄາເອນຢືນຂຶ້ນ |

## ຂ່າວສານສຳລັບຍຸກສຸດທ້າຍໃນພຣະທຳດານີເອນ (ດານີເອນ 7:6)

ຄຳພະຍາກອນກ່ຽວກັບຍຸດສຸດທ້າຍກໍມີສ່ວນຕ່າງໆທີ່ພິເສດ ທີ່ຄຳພະຍາກອນທົ່ວໄປຈະບໍ່ມີ. ພວກເຮົາຈະມາເບິ່ງຊື່ຂອງແຕ່ລະສ່ວນດັ່ງລຸ່ມນີ້:

**ນິມິດ ແລະ ຄວາມຝັນ.** ໃນຄຳພະຍາກອນສຳລັບຍຸກສຸດທ້າຍນັ້ນ ພຣະເຈົ້າຊົງໃຊ້ຄວາມຝັນເພື່ອສື່ສານເຖິງຂ່າວສານຂອງພຣະອົງໃຫ້ກັບຜູ້ປະກາດຂອງພຣະອົງ. ໃນຄຳທຳນວາຍທຳມະດາທົ່ວໄປ ພຣະເຈົ້າໄດ້ຊົງພຣະຄຳຂອງພຣະອົງມາສູ່ຜູ້ປະກາດພຣະຄຳ. ພຣະຄຳຂອງພຣະເຈົ້ານັ້ນ ສາມາດລວມເຖິງ ນິມິດ ຫຼື ຄວາມຝັນ.

**ຮູບພາບທີ່ພັນລະນາ.** ໃນຄຳພະຍາກອນທົ່ວໄປ ພວກເຮົາຈະເຫັນຕົວຢ່າງຮູບພາບຈຳນວນບໍ່ຫຼາຍ. ຮູບພາບທີ່ພັນລະນາໃນຄຳພະຍາກອນທົ່ວໄປກໍມາຈາກຊີວິດຈິງຂອງເຮົາ. ແຕ່ໃນຄຳພະຍາກອນຂອງຍຸກສຸດທ້າຍນັ້ນ ພຣະເຈົ້າໄດ້ໃຊ້ສະແດງຮູບພາບພັນລະນາທີ່ເກີນຈິນຕະນາການຂອງເຮົາ.

**ຄວາມຮູ້ ແລະ ອຳນາດພິເສດຂອງພຣະເຈົ້າ.** ຄຳພະຍາກອນຂອງຍຸກສຸດທ້າຍບໍ່ໄດ້ຂຶ້ນກັບການເລືອກຂອງມະນຸດ. ບໍ່ວ່າພວກເຮົາຈະເລືອກເຮັດສິ່ງໃດກໍຕາມ ຄຳພະຍາກອນສຳລັບຍຸດສຸດທ້າຍກໍຍັງຈະເກີດຂຶ້ນຕາມທີ່ພຣະເຈົ້າບອກວ່າຈະເກີດ.

**ອ່ານໂຢນາ 3:3-10, ໂຮເຊອາ 3:4,5; ອາໂມດ 8:11; ແລະ ເສກາລີຢາ 9:1. ຄຳພະຍາກອນເຫຼົ່ານີ້ເປັນຄຳພະຍາກອນທົ່ວໄປຫຼືບໍ່? ຫຼື ເປັນຄຳພະຍາກອນສຳລັບຍຸກສຸດທ້າຍ? ໃຫ້ທ່ານອະທິບາຍ. ພຣະທຳດານີເອນ 7:6 ເດເປັນຄຳພະຍາກອນແບບໃດ?**

## ກົດຂອງເວລາໜຶ່ງປີ-ໜຶ່ງມື້ (ເອເຊກຽນ 4:5,6)

ພວກເຮົາຈະມາສຶກສາຄຳພະຍາກອນເວລາໃນພຣະທຳ ດານີເອນ ບົດທີ 2,7,8 ແລະ 11. ພວກເຮົາຈະເຫັນວ່າ ແຕ່ລະບົດນັ້ນສະແດງໃຫ້ພວກເຮົາເຫັນປະຫວັດສາດຈາກສະໄໝຂອງດານີເອນໄປຮອດຍຸກສຸດທ້າຍ. ແຕ່ວ່າ ແຕ່ລະບົດນັ້ນສະແດງໃຫ້ພວກເຮົາເຫັນມຸມມອງທີ່ແຕກຕ່າງແລະໄດ້ໃຫ້ຂໍ້ມູນໃໝ່ແກ່ເຮົາ.

**ໃຫ້ເຮົາສຶກສາກົດຂອງເວລາໜຶ່ງປີເທົ່າໜຶ່ງມື້ໃນພຣະທຳຈົດເຊັນບັນຊີ 14:34 ແລະ ເອເສກຽນ 4:5,6. ເວລາ1ມື້ນັ້ນເທົ່າກັບເວລາເທົ່າໃດໃນຄຳພະຍາກອນຂອງເວລາ?**

ມື້ໜຶ່ງໃນຂ່າວສານກ່ຽວກັບເວລານີ້ກໍເທົ່າກັບ ເວລາ1ປີໃນຊີວິດຈິງ. ຖ້າຫາກພວກເຮົານຳໃຊ້ກົດນີ້ ຄຳພະຍາກອນກ່ຽວກັບມື້ນັ້ນກໍເທົ່າກັບ 2,300 ປີ (ດານີເອນ 8:14). ໃນທາງດຽວກັນຄຳພະຍາກອນກ່ຽວກັບເວລາ 70 ອາທິດກໍຄື 490 ປີ (ດານີເອນ 9:24-27).

ກົດຂອງເວລາໜຶ່ງປີຄືໜຶ່ງມື້ຖືກຕ້ອງດ້ວຍເຫດຜົນ 3ຢ່າງ. (1) ຄວາມຝັນຂອງດານີເອນເປັນຮູບພາບທີ່ພັນລະນາພາບ. ດັ່ງນັ້ນ ເວລາໃນຄວາມຝັນຂອງເພິ່ນກໍຄືງເປັນຄຳທີ່ພັນລະນາຮູບພາບເຊັ່ນດຽວກັນ. (2) ຄວາມຝັນຕ່າງໆກໍສະແດງເຖິງສິ່ງຕ່າງໆທີ່ເກີດຂຶ້ນມາຈາກສະໄໝຂອງດານີເອນຈົນຮອດຍຸກສຸດທ້າຍ. ດັ່ງນັ້ນ ເວລາໃນຂໍ້ຄວາມເຫຼົ່ານີ້ຄວນຈະກົງກັບສິ່ງຕ່າງໆທີ່ເກີດຂຶ້ນ. (3) ດານີເອນໃຫ້ຫຼັກຖານວ່າ ກົດທີ່ບອກວ່າເວລາ1ປີ ເທົ່າກັບ1ມື້ນັ້ນຖືກຕ້ອງ. ຕົວຢ່າງໜຶ່ງທີ່ຊັດເຈນກໍມາຈາກຄຳພະຍາກອນສຳລັບເວລາ70ອາທິດ. ມັນໄດ້ເລີ່ມຂຶ້ນຈາກສະໄໝຂອງກະສັດອາກຕາເຊເຊັດ ແລະ ຈົບລົງເມື່ອພຣະເຢຊູໄດ້ມາເປັນພຣະຜູ້ຊ່ອຍໃຫ້ລອດ. ດັ່ງນັ້ນ ພວກເຮົາຈະເຫັນວ່າ ວິທີການທີ່ດີທີ່ສຸດທີ່ຈະເຂົ້າໃຈຂໍ້ຄວາມ ຫຼື ຂ່າວສານກ່ຽວກັບເວລາເຫຼົ່ານີ້ກໍຄືການນຳໃຊ້ກົດຂອງເວລາ ໜຶ່ງປີເທົ່າກັບໜຶ່ງມື້.

## <u>ບົດຮຽນຊີວິດຈາກດານີເອນສໍາລັບຍຸກສະໄໝຂອງພວກເຮົາ (ດານີເອນ 9:23)</u>

ພວກເຮົາຈະຕ້ອງເບິ່ງບົດຮຽນ3ຢ່າງທີ່ດານີເອນສາມາດສອນພວກເຮົາໄດ້. 1) ພຣະເຈົ້າຊົງຄວບຄຸມຊີວິດຂອງພວກເຮົາ. ເຖິງແມ່ນວ່າສິ່ງຕ່າງໆອາດຈະຜິດພາດໄປ ພຣະເຈົ້າກໍຊົງຄວບຄຸມຢູ່. ພຣະອົງຊົງທໍາງານໃນຊີວິດຂອງເຮົາເພື່ອເຮັດສິ່ງທີ່ດີທີ່ສຸດ. ພຣະເຈົ້າຊົງຄວບຄຸມປະຫວັດສາດ. ບາງເວລາ ພວກເຮົາກໍຮູ້ສຶກໃຈຮ້າຍກັບຄວາມຊົ່ວຮ້າຍຕ່າງໆທີ່ພວກເຮົາເຫັນໃນຊີວິດ. ແຕ່ຂ່າວສານຈາກພຣະທໍາດານີເອນນັ້ນກໍຈະແຈ້ງ. ພຣະເຈົ້າຍັງຊົງຄວບຄຸມທຸກຢ່າງ. ທ່ານນາງເອເລັນຈີໄວທ໌ກ່າວວ່າ ປຶ້ມປະຫວັດສາດທັງຫຼາຍພະຍາຍາມເຮັດໃຫ້ພວກເຮົາເຊື່ອວ່າປະເທດ ແລະອານາຈັກຕ່າງໆນັ້ນກໍເພິ່ງພາອໍານາດຂອງມະນຸດເພື່ອທີ່ຈະຈະເລີນກ້າວໜ້າ. ປຶ້ມປະຫວັດສາດທັງຫຼາຍກໍຕ້ອງການໃຫ້ທ່ານເຊື່ອວ່າສິ່ງຕ່າງໆທີ່ເກີດຂຶ້ນເທິງໂລກນີ້ແມ່ນຍ້ອນອໍານາດ ແລະ ຄວາມປາດຖະໜາຂອງມະນຸດ. ແຕ່ພຣະຄໍາພີກໍສະແດງໃຫ້ພວກເຮົາເຫັນຄວາມຈິງ. ພຣະຄໍາພີສະແດງໃຫ້ພວກເຮົາເຫັນວ່າ ພຣະເຈົ້າຊົງກະທໍາຕາມແຜນການຂອງພຣະອົງ. ພຣະເຈົ້າຊົງອົດທົນແລະມິດງຽບຢູ່ໃນຂະນະທີ່ພຣະອົງນັ້ນຊົງກະທໍາວຽກງານໃນມະນຸດ ເພື່ອທີ່ຈະເຮັດໃຫ້ແຜນການຂອງພຣະອົງເກີດຂຶ້ນ (ຄັດຈາກປຶ້ມ Education ການສຶກສາ)

ພຣະເຈົ້າຊົງປະທານຕົວຢ່າງໜຶ່ງສໍາລັບຄົນໃນສະໄໝຍຸກສຸດທ້າຍຂອງພຣະອົງ. ດານີເອນແລະໝູ່ຂອງເພິ່ນກໍເປັນຕົວຢ່າງສໍາລັບເຮົາ. ພວກເຂົາໄດ້ສະແດງໃຫ້ພວກເຮົາເຫັນວ່າ ພວກເຮົາສາມາດຊື່ສັດຕໍ່ພຣະເຈົ້າແນວໃດເມື່ອປະຊາຊົນຢູ່ອ້ອມຂ້າງເພິ່ນບໍ່ເຊື່ອຟັງເພິ່ນ.

**ອ່ານດານີເອນ 9:23; ດານີເອນ 10:11,12; ແລະ ມັດທາຍ 10:29-31. ຂໍ້ພຣະຄໍາພີເຫຼົ່ານີ້ບອກຫຍັງພວກເຮົາກ່ຽວກັບວ່າພຣະເຈົ້າຊົງຫ່ວງໃຍແບບໃດ.**

## ຂໍ້ຄິດເພີ່ມເຕີມ

ພຣະຄຳພີກໍລຽບງ່າຍສຳລັບທຸກໆຄົນທີ່ສຶກສາພຣະທຳດ້ວຍການອະທິຖານ. ທຸກຄົນທີ່ສັດຊື່ທີ່ຊອກສະແຫວງຫາຄວາມຈິງນັ້ນກໍຈະພົບມັນ. ແສງສະຫວ່າງແລະຄວາມສຸກກໍສ່ອງໃສ່ຄົນເຫຼົ່ານັ້ນທີ່ຕ້ອງການເຮັດສິ່ງທີ່ດີ ເພງສັນລະເສີນ 97:11. ໂບດຈະກາຍເປັນໂບດທີ່ບໍລິສຸດກໍຕໍ່ເມື່ອສະມາຊິກໂບດນັ້ນສະແຫວງຫາຄວາມຈິງ. ພວກມເຂົາຈະຊອກຫາມັນຄືກັບຊອກຫາຂຸມຊັບທີ່ຖືກຊ້ອນໄວ້. (ປື້ມທ່ານນາງເອເລັນຈີໄວທ໌)

'ໃຫ້ທ່ານສຶກສາປະຫວັດສາດຂອງດານີເອນແລະໝູ່ຂອງເພິ່ນ. ພວກເຂົາອາໄສຢູ່ໃນບ່ອນທີ່ຊາຕານ ພະຍາຍາມເຮັດໃຫ້ພວກເຂົາເຮັດບາບຢູ່ຕະຫຼອດເວລາ. ແຕ່ດານີເອນແລະໝູ່ຂອງເພິ່ນກໍໃຫ້ກຽດພຣະເຈົ້າ. ພວກເຂົາໄດ້ຖວາຍກຽດແດ່ພຣະອົງໃນຊີວິດປະຈຳວັນຂອງພວກເຂົາ. ພວກເຂົາຕັດສິນໃຈທີ່ຈະຢູ່ຫ່າງຈາກຄວາມຊົ່ວຮ້າຍທັງໝົດ. ພວກເຂົາປະຕິເສດທີ່ຈະຍ່າງເຂົ້າສູ່ທາງຂອງຄວາມບາບ. ພວກເຂົາຄົງຄວາມຊື່ສັດຂອງເຂົາຕໍ່ພຣະເຈົ້າ ແລະ ພຣະອົງກໍຊົງປະທານພຣະພອນອັນອຸດົມຮັ່ງມີໃຫ້ແກ່ເຂົາ.' (ປື້ມທ່ານນາງເອເລັນຈີໄວທ໌)

## ຄຳຖາມຄົ້ນຄວ້າ

1. ພຣະທຳດານີເອນສະແດງໃຫ້ພວກເຮົາເຫັນວ່າ ພຣະເຈົ້າຊົງຄວບຄຸມທຸກສິ່ງທຸກຢ່າງທີ່ເກີດຂຶ້ນ. ນອກຈາກນັ້ນ ພຣະອົງກໍຮູ້ວ່າທຸກສິ່ງທຸກຢ່າງນັ້ນກໍຈະຈົບລົງ. ການຮູ້ສິ່ງນີ້ໃຫ້ຄວາມສະບາຍໃຈແລະຄວາມຫວັງອັນໃດໃຫ້ແກ່ພວກເຮົາ? ພຣະຜູ້ເປັນເຈົ້າກໍຮູ້ຄວາມຄິດທຸກຢ່າງຂອງທ່ານເຊັ່ນດຽວກັນ. ນັ້ນກໍສະແດງໃຫ້ເຫັນວ່າ ພຣະອົງຊົງໃກ້ຊິດທ່ານຫຼາຍຊ່ຳໃດ. ແນວຄິດນີ້ໃຫ້ຄວາມສະບາຍໃຈແກ່ທ່ານແນວໃດ?
2. ໃນຊັ້ນຮຽນນັ້ນ ໃຫ້ທ່ານສົນທະນາລົມກັນກ່ຽວກັບປະເພດຕ່າງໆຂອງຄຳພະຍາກອນຄື ຄຳພະຍາກອນສຳລັບຍຸກສຸດທ້າຍ ແລະ ຄຳພະຍາກອນ

ທົ່ວໄປ. ທ່ານເຫັນຕົວຢ່າງຂອງຄຳພະຍາກອນສອງປະເພດນີ້ ອັນໃດແດ່ໃນພຣະຄຳພີ?

---

# ບົດທີ 2

## ຈາກເຢຣູຊາເລັມໄປຫາບາບີໂລນ

### (4-10 ມັງກອນ 2020)

**ບ່າຍວັນສະບາໂຕ** **4 ມັງກອນ**

**ອ່ານສຳລັບບົດຮຽນອາທິດນີ້:**

**2 ກະສັດ 21:10-16; 2 ກະສັດ 24:18-20; ແລະ ເຢເລມີຢາ 3:13; ດານີເອນ 1:7-20; ຄາລາເຕຍ 2:19, 20; ມັດທາຍ 16:24-26; ແລະ 2 ໂກລິນໂທ 4:17; ດານີເອນ 1:17-21; ໂຢບ 38:36; ສຸພາສິດ 2:6; ຢາໂກໂບ 1:5.**

**ຂໍ້ຄວນຈຳ:** *"ພຣະເຈົ້າໄດ້ໃຫ້ພວກຊາຍໜຸ່ມສີ່ຄົນນີ້ມີຄວາມຮູ້ ແລະຄວາມຊຳນິຊຳນານໃນດ້ານວັນນະຄະດີແລະສະຕິປັນຍາເປັນຢ່າງດີ. ນອກຈາກນີ້ ພຣະອົງຍັງໄດ້ໂຜດໃຫ້ດານີເອນຊຳນານໃນການແປນິມິດ ແລະ ແກ້ຄວາມຝັນຕ່າງໆອີກດ້ວຍ." (ດານີເອນ 1:17)*

ວິລະບູລຸດທີ່ແທ້ຈິງໃນພຣະທຳດານີເອນນັ້ນກໍຄືພຣະເຈົ້າ. ຂໍໃຫ້ທ່ານຈື່ຄວາມຈິງເລື່ອງນີ້ໃນຂະນະທີ່ພວກເຮົາສືບຕໍ່ສຶກສາພຣະທຳດານີເອນ. ມັນເປັນເລື່ອງງ່າຍທີ່ຈະຄິດວ່າ ເລື່ອງຕ່າງໆໃນພຣະທຳດານີເອນທັງໝົດແມ່ນກ່ຽວກັບດານີເອນແລະໝູ່ຂອງເພິ່ນສາມຄົນ. ແຕ່ພຣະເຈົ້າໄດ້ນຳພາຊາຍສີ່ຄົນນີ້. ພຣະອົງຊົງປົກປັກ

ຮັກສາພວກເຂົາຈາກອຳນາດແຫ່ງຄວາມຊົ່ວຮ້າຍໃນນະຄອນບາບີໂລນ. ໃນນະຄອນບາບີໂລນນັ້ນ ດານີເອນແລະໝູ່ຂອງເພີນໄດ້ພົບປະກັບຄົນທີ່ມີສາດສະໜາທີ່ແຕກຕ່າງກັນ. ຄົນເຫຼົ່ານີ້ກໍມີວິທີການໃຊ້ຊີວິດທີ່ແຕກຕ່າງກັນ. ແມ່ນແລ້ວ ສິ່ງເຫຼົ່ານີ້ກໍເຮັດໃຫ້ດານີເອນແລະໝູ່ຂອງເພິ່ນມີຄວາມຫຍຸ້ງຍາກໃນການຕິດຕາມພຣະເຈົ້າໃນບາງເວລາ. ແຕ່ສິ່ງເຫຼົ່ານີ້ກໍຄືການທົດສອບຄວາມເຊື່ອ. ດານີເອນແລະໝູ່ຂອງເພິ່ນກໍຜ່ານການທົດສອບນີ້. ພວກເຂົາສະແດງອອກໃຫ້ທຸກຄົນເຫັນວ່າ ພວກເຂົານັ້ນ "ຮູ້ຈັກພຣະເຢຊູ" (2 ຕີໂມທຽວ 1:12). ພຣະເຢຊູຄືຜູ້ດຽວທີ່ພວກເຂົາ "ໄດ້ເຊື່ອແລະໄວ້ວາງໃຈ" (2 ຕີໂມທຽວ 1:12).

## ວັນອາທິດ 5 ມັງກອນ

## ພຣະເຈົ້າຊົງເປັນຜູ້ຄວບຄຸມ (2 ກະສັດ 21:10-16)

ໃຫ້ທ່ານເບິ່ງຂໍ້ພຣະຄຳພີທີ່ເລີ່ມຕົ້ນພຣະທຳດານີເອນໃຫ້ລະອຽດ. ທ່ານຈະເຫັນເຫດຜົນອັນແທ້ຈິງທີ່ເນບູກາດເນັດຊາໄດ້ຮັບໄຊຊະນະ. ແມ່ນແລ້ວ ປະຊາຊົນຂອງພຣະເຈົ້າໄດ້ແພ້ສົງຄາມກັບກະສັດເນບູກາດເນັດຊາ. ແຕ່ກະສັດເນບູກາດເນັດຊາກໍບໍ່ໄດ້ຮັບໄຊຊະນະຍ້ອນວ່າເພິ່ນເຂັ້ມແຂງກວ່າ. ເພິ່ນໄດ້ຮັບໄຊຊະນະກໍເພາະວ່າ "ອົງພຣະຜູ້ເປັນເຈົ້າໄດ້ໃຫ້ກະສັດເນບູກາດເນັດຊາຈັບກະສັດເຢໂຮຍອາກິມ" (ດານີເອນ 1:2). ເປັນຫຍັງ ພຣະເຈົ້າຈຶ່ງປ່ອຍໃຫ້ກະສັດເນບູກາດເນັດຊາໄດ້ຮັບໄຊຊະນະ. ຫຼາຍປີກ່ອນໜ້ານັ້ນ ພຣະເຈົ້າໄດ້ຊົງຕັກເຕືອນປະຊາຊົນຂອງພຣະອົງ. ພຣະອົງຊົງບອກເຂົາເຖິງສິ່ງທີ່ຈະເກີດຂຶ້ນຖ້າຫາກພວກເຂົາລະເມີດຂໍ້ກົດລົງພິເສດຂອງພຣະອົງ. ປະຊາຊົນຂອງພຣະອົງຈະກາຍເປັນຊະເລີຍ. ຕອນນີ້ ດານີເອນກໍໄດ້ເຫັນພຣະຄຳຂອງພຣະເຈົ້າກາຍເປັນຈິງ.

**ເປັນຫຍັງ ພຣະເຈົ້າຈຶ່ງເຮັດໃຫ້ຢູດາແລະເຢຣູຊາເລັມຢູ່ພາຍໃຕ້ການຄວບຄຸມຂອງບາບີໂລນ? ສຳລັບຄຳຕອບໃຫ້ທ່ານອ່ານ 2 ກະສັດ 21:10-16; 2 ກະສັດ 24:18-20; ແລະ ເຢເລມີຢາ 3:13.**

ພຣະທຳດານີເອນນັ້ນສະແດງເຖິງຮູບພາບອັນຍິ່ງໃຫຍ່ຂອງພຣະເຈົ້າ. ພຣະເຈົ້າທີ່ພວກເຮົາຮັບໃຊ້ນັ້ນກໍຄວບຄຸມປະຫວັດສາດຂອງມະນຸດ. ພຣະອົງຊົງມີກຳລັງຢ່າງຫຼວງຫຼາຍ. ແຕ່ພຣະອົງກໍຍັງມັກສະແດງຄວາມເມດຕາຂອງພຣະອົງຕໍ່ປະຊາຊົນຂອງພຣະອົງ. ພຣະອົງຊົງຊ່ວຍພວກເຮົາໃນເວລາທີ່ມີຄວາມຂາດເຂີນ. ດັ່ງທີ່ທ່ານຈະເຫັນນັ້ນ ຄົນທີ່ຊົ່ວຮ້າຍກໍພະຍາຍາມທີ່ຈະທຳລາຍດານີເອນແລະໝູ່ຂອງເພິ່ນ. ເປັນຫຍັງຈຶ່ງເປັນແບບນັ້ນ? ກໍເພາະວ່າ ດານີເອນແລະໝູ່ຂອງເພິ່ນນັ້ນກໍເຊື່ອຟັງພຣະເຈົ້າ. ດັ່ງນັ້ນ ພຣະເຈົ້າຈຶ່ງຊ່ວຍເຫຼືອດານີເອນແລະໝູ່ຂອງເພິ່ນ. ພຣະເຈົ້າຈະເຮັດສິ່ງດຽວກັນນີ້ສຳລັບປະຊາຊົນຂອງພຣະອົງໃນຍຸກສຸດທ້າຍ.

**ເປັນຫຍັງພວກເຮົາຈຶ່ງສາມາດໄວ້ວາງໃຈໃຫ້ພຣະເຈົ້າຊ່ວຍເຫຼືອເຮົາໃນເວລາທີ່ພວກເຮົາຈຳເປັນ?**

## ວັນຈັນ 6 ມັງກອນ

## <u>ຄວາມເຊື່ອທີ່ບໍ່ຖືກປະຖິ້ມ</u>

**ໃຫ້ທ່ານອ່ານກ່ຽວກັບປະສົບການຂອງດານີເອນແລະໝູ່ຂອງເພິ່ນໃນດານີເອນບົດທີ 1. ພວກເຂົາກຳລັງຕົກຢູ່ໃນບັນຫາອັນໃດ? ແມ່ນຫຍັງທີ່ເຮັດໃຫ້ການຊື່ສັດໝັ້ນຄົງຕໍ່ພຣະເຈົ້ານັ້ນຍາກໃນເວລານີ້?**

ກະສັດໄດ້ສັ່ງໃຫ້ຊາຍໜຸ່ມເຫຼົ່ານີ້ກິນອາຫານຈາກໂຕະຂອງກະສັດ. ເມື່ອຄົນໆໜຶ່ງກິນອາຫານຈາກໂຕະຂອງກະສັດ ມັນກໍສະແດງໃຫ້ເຫັນວ່າຄົນໆນັ້ນຈົ່ງຮັກພັກດີຕໍ່ກະສັດ. ຫຼາຍໆເທື່ອອາຫານເຫຼົ່ານີ້ກໍມັກຈະຖືກຖວາຍແກ່ພະຕ່າງໆກ່ອນ. ດັ່ງນັ້ນ ຈະເກີດຫຍັງຂຶ້ນຖ້າຫາກດານີເອນແລະໝູ່ຂອງເພິ່ນກິນອາຫານເຫຼົ່ານີ້? ພວກເຂົາກໍຈະສະແດງວ່າ ພວກເຂົານັ້ນນະມັດສະການພະຕ່າງໆຂອງກະສັດແລະຍອມຮັບສາສະໜາຂອງເພິ່ນ.

ດັ່ງນັ້ນ ດານີເອນແລະໝູ່ຂອງເພິ່ນກໍພົບກັບບັນຫາ. ພວກເຂົາຈະສາມາດຊື່ສັດຕໍ່ພຣະເຈົ້າ ແລະ ຮັບໃຊ້ກະສັດໃນເວລາດຽວກັນຫຼືບໍ່? ມີແຕ່ການອັດສະຈັນ

ເທົ່ານັ້ນທີ່ສາມາດຊ່ວຍຊາຍໜຸ່ມເຫຼົ່ານີ້ໃຫ້ລອດຈາກຄວາມຕາຍໄດ້. ແມ່ນຫຍັງເຮັດໃຫ້ບັນຫານີ້ໜັກຂຶ້ນຕື່ມອີກ? ນະຄອນບາບີໂລນເຕັມໄປດ້ວຍພຣະວິຫານທີ່ສວຍງາມແລະສວນທີ່ມີຊື່ສຽງ. ກະສັດນຳສະເໜີໂອກາດໃຫ້ດານີເອນແລະໝູ່ຂອງເພິ່ນທີ່ຈະມີຊີວິດທີ່ດີຖ້າຫາກພວກເຂົາຕ້ອງການ. ແລ້ວຊາຍໜຸ່ມເຫຼົ່ານີ້ກໍສາມາດຢຸດເປັນຂ້າທາດຊາວເຮັບເຣີໄດ້. ພວກເຂົາສາມາດກາຍເປັນຜູ້ນຳຂອງເຊື້ອກະສັດໄດ້. ຊາຍໜຸ່ມກຸ່ມນີ້ຈະປະຖິ້ມຄວາມເຊື່ອຂອງພວກເຂົາຫຼືບໍ່? ພວກເຂົາຈະເລືອກທີ່ຈະດຳເນີນຊີວິດໃນທາງທີ່ງ່າຍໄປສູ່ຄວາມສຳເລັດຫຼືບໍ່?

**ທ່ານຄິດວ່າຊາຍໜຸ່ມເຫຼົ່ານີ້ມີເຫດຜົນອັນໃດແດ່ທີ່ຈະປະຖິ້ມຄວາມເຊື່ອຂອງພວກເຂົາ? ທ່ານປະສົບກັບສະພາບການອັນດຽວກັນນີ້ໃນທາງໃດແດ່?**

## ວັນອັງຄານ 7 ມັງກອນ

## <u>ການຕັດສິນໃຈທີ່ໜັກແໜ້ນ (ດານີເອນ 1:7-20)</u>

**ອ່ານດານີເອນ 1:7-20. ແມ່ນຫຍັງເກີດຂຶ້ນໃນຂໍ້ພຣະຄຳພີເຫຼົ່ານີ້? ພວກເຮົາເຫັນກົດທີ່ສຳຄັນອັນໃດໃນນີ້?**

ຜູ້ຊາຍທີ່ຮັບຜິດຊອບຊາຍໜຸ່ມສີ່ຄົນນີ້ກໍປ່ຽນຊື່ຂອງພວກເຂົາ. ດັ່ງນັ້ນ ລາວກໍສາມາດປ່ຽນເມນູອາຫານໄດ້ເຊັ່ນດຽວກັນ. ໃຫ້ເຮົາມາເບິ່ງພາກສ່ວນທີ່ສຳຄັນຫຼາຍກວ່າເລື່ອງນີ້. ຢ່າງທຳອິດ ພວກເຮົາເຫັນວ່າດານີເອນເຂົ້າໃຈເຖິງອັນຕະລາຍທີ່ມີຢູ່. ຊາຍຜູ້ທີ່ຮັບຜິດຊອບພວກເຂົານັ້ນກໍຕົກຢູ່ໃນຄວາມສ່ຽງ ຖ້າຫາກລາວຍອມຊ່ວຍດານີເອນ ແລະໝູ່ຂອງເພິ່ນ. ດັ່ງນັ້ນ ດານີເອນຈຶ່ງຂໍເຮັດການທົດສອບຢ່າງໜຶ່ງ. ດານີເອນແລະໝູ່ຂອງເພິ່ນນັ້ນຈະກິນອາຫານທີ່ມີປະໂຫຍດຕໍ່ສຸຂະພາບເປັນເວລາ 10ມື້. ແລ້ວເຈົ້າໜ້າທີ່ຈະສາມາດເຫັນໄດ້ວ່າ ອາຫານທີ່ດານີເອນແລະໝູ່ຂອງເພິ່ນກິນນັ້ນມີຜົນຮ້າຍ ຫຼື ດີຕໍ່ພວກເຂົາ. ຢ່າງທີສອງຄື ດານີເອນນັ້ນໝັ້ນໃຈຢ່າງແຮງວ່າແຜນການຂອງເພິ່ນຈະສຳເລັດ. ໄລຍະເວລາ10ມື້ ກໍເປັນເວລາທີ່ສັ້ນ ແຕ່ດານີເອນກໍໄວ້ວາງໃຈໃນພຣະເຈົ້າ. ດັ່ງນັ້ນ ດານີເອນຈຶ່ງຮູ້ວ່າ ແຜນການຂອງເພິ່ນນັ້ນຈະສຳເລັດ. ຢ່າງທີສາມ ດານີເອນເລືອກທີ່ຈະກິນໝາກໄມ້ແລະຜັກ. ອາຫານນີ້ກໍ

ກົງກັບອາຫານທີ່ພຣະເຈົ້າໄດ້ໃຫ້ອາດາມແລະເອວາກິນ (ອ່ານປະຖົມມະການ 1:29). ຈະມີອາຫານໃດດີໄປກວ່ານີ້ອີກ?

**ດານີເອນມີສິດທີ່ຈະເລືອກ. ການເລືອກຂອງເພິ່ນໄດ້ເປີດທາງໃຫ້ພຣະເຈົ້າຊ່ວຍເພິ່ນແນວໃດ (ອ່ານດານີເອນ 1:9)? ດານີເອນສອນຫຍັງພວກເຮົາກ່ຽວກັບເຫດຜົນທີ່ພວກເຮົາຈຳເປັນທີ່ຈະຕ້ອງເລືອກສິ່ງທີ່ດີ? ຄວາມໄວ້ວາງໃຈຂອງເຮົາໃນພຣະເຈົ້າຊ່ວຍພວກເຮົາໃຫ້ເລືອກສິ່ງດີໆໄດ້ແນວໃດ?**

## ວັນພຸດ 8 ມັງກອນ

### <u>ສົມບູນ ແລະ ມີປັນຍາ (ຄາລາເຕຍ 2:19,20)</u>

**ມັນເປັນໄປໄດ້ບໍ່ສຳລັບພວກເຮົາທີ່ຈະຊື່ສັດໝັ້ນຄົງຕໍ່ພຣະເຈົ້າຕະຫຼອດເວລາ? ສຳລັບຄຳຕອບໃຫ້ທ່ານອ່ານຄາລາເຕຍ 2:19,20; ມັດທາຍ 16:24-26; ແລະ 2 ໂກລິນໂທ 4:17.**

ພຣະເຈົ້າໃຫ້ກຽດດານີເອນແລະໝູ່ຂອງເພິ່ນ. ຫຼັງຈາກການທົດສອບ 10 ມື້ໄດ້ຜ່ານໄປແລ້ວ ພວກເຂົາເປັນແບບໃດ? ແນ່ນອນວ່າ ພວກເຂົາກໍມີໜ້າຕາດີກວ່ານັກຮຽນທີ່ພາກັນກິນອາຫານຂອງກະສັດ. ດັ່ງນັ້ນ ພຣະເຈົ້າໃຫ້ລາງວັນແກ່ດານີເອນແລະໝູ່ຂອງເພິ່ນ. “ພຣະເຈົ້າໄດ້ໃຫ້ພວກຊາຍໜຸ່ມສີ່ຄົນນີ້ມີຄວາມຮູ້ແລະຄວາມຊຳນິຊຳນານໃນດ້ານວັນນະຄະດີ ແລະ ມີສະຕິປັນຍາເປັນຢ່າງດີ. ນອກຈາກນີ້ພຣະອົງຍັງໄດ້ໂຜດໃຫ້ດານີເອນຊຳນິຊຳນານໃນການແປນິມິດ ແລະແກ້ຄວາມຝັນຕ່າງໆອີກດ້ວຍ” (ດານີເອນ 1:17). ຕໍ່ມາ ຂອງປະທານຂອງດານີເອນກໍຈະເປັນສ່ວນທີ່ສຳຄັນສຳລັບວຽກງານຂອງເພິ່ນໃນຖານະເປັນຜູ້ສົ່ງສານພິເສດຂອງພຣະເຈົ້າ.

ພຣະເຈົ້າຊົງປະທານສະຕິປັນຍາໃຫ້ແກ່ພວກເຮົາເຊັ່ນດຽວກັນ. ພຣະອົງຊົງຊ່ວຍພວກເຮົາໃຫ້ແກ້ໄຂບັນຫາຂອງຊີວິດ. ປະສົບການຂອງດານີເອນແລະໝູ່ຂອງເພິ່ນກໍສອນພວກເຮົາວ່າ ພວກເຮົາສາມາດບໍລິສຸດແລະສັດຊື່ຕໍ່ພຣະເຈົ້າໃນຊີວິດ

ຂອງເຮົາ. ເລື່ອງຂອງດານີເອນສະແດງໃຫ້ພວກເຮົາເຫັນວ່າ ພວກເຮົາບໍ່ຈຳເປັນຕ້ອງໜີອອກຈາກຊີວິດນີ້ເພື່ອທີ່ຈະຮັບໃຊ້ພຣະເຈົ້າໃຫ້ດີຂຶ້ນ. ດານີເອນແລະໝູ່ຂອງເພິ່ນກໍອາໄສຢູ່ໃນດິນແດນທີ່ເຕັມໄປດ້ວຍຄຳຂີ້ຕົວະຫຼອກລວງ. ຄົນທີ່ຢູອ້ອມຂ້າງດານີເອນກໍເຊື່ອໃນຄຳເຫຼົ່ານີ້. ແຕ່ດານີເອນແລະໝູ່ຂອງເພິ່ນກໍສັດຊື່ໝັ້ນຄົງຕໍ່ພຣະເຈົ້າ.

**ພວກເຮົາກໍພົບກັບບັນຫາໃນຊີວິດນີ້ຄືກັບດານີເອນ ແລະໝູ່ຂອງເພິ່ນ. ຢູ່ອ້ອມຂ້າງເຮົາກໍເຕັມໄປດ້ວຍຄົນທີ່ບໍ່ໄດ້ເຊື່ອຄວາມຈິງຂອງພຣະຄຳພີ. ທ່ານເຫັນຄຳຂີ້ຕົວະຫຼອກຫຼວງ ແລະສິ່ງທີ່ຮ້າຍແຮງອັນໃດແດ່ໃນການດຳເນີນຊີວິດຢູ່ຂອງຄົນທີ່ຢູ່ອ້ອມຂ້າງທ່ານ? ທ່ານໄດ້ຕໍ່ສູ້ກັບສິ່ງເຫຼົ່ານີ້ບໍ? ຫຼື ທ່ານພຽງແຕ່ເຮັດໄປຕາມສິ່ງເຫຼົ່ານີ້?**

**ວັນພະຫັດ 9 ມັງກອນ**

**<u>ບົດທົດສອບສຸດທ້າຍ (ດານີເອນ 1:17-21)</u>**

**ອ່ານເລື່ອງກ່ຽວກັບດານີເອນແລະໝູ່ຂອງເພິ່ນໃນດານີເອນ 1:17-21. ແມ່ນຫຍັງຄືສາເຫດທີ່ເຮັດໃຫ້ພວກເຂົາປະສົບຜົນສຳເລັດ? (ອ່ານພຣະທຳ ໂຢບ 38:36; ສຸພາສິດ 2:6; ແລະ ຢາໂກໂບ 1:5 ສຳລັບຄຳຕອບ)**

ປະສົບການຂອງດານີເອນແລະໝູ່ຂອງເພິ່ນກໍເປັນຕົວຢ່າງທີ່ສຳຄັນແລະມີຄວາມໝາຍຢ່າງຍິ່ງ. ມັນສະແດງໃຫ້ພວກເຮົາເຫັນວ່າ ພຣະເຈົ້າຊົງສາມາດເຮັດສິ່ງໃດເພື່ອປະຊາຊົນຂອງພຣະອົງເມື່ອພວກເຂົາໄວ້ວາງໃຈໃນພຣະອົງ. ດັ່ງນັ້ນພວກເຮົາຈຶ່ງບໍ່ຄວນຢ້ານກົວຜູ້ໃດ. ຫຼາຍຄົນອາດຈະພະຍາຍາມທີ່ຈະເຮັດໃຫ້ເຮົາເຈັບປວດຍ້ອນຄວາມເຊື່ອຂອງເຮົາ. ພວກເຮົາສາມາດແນ່ໃຈໄດ້ວ່າ ພຣະເຈົ້າຈະດູແລພວກເຮົາໃນເວລາທີ່ມີຄວາມຍາກລຳບາກ. ສິ່ງທີ່ສຳຄັນທີ່ຈະຕ້ອງຈື່ກໍຄື ໃຫ້ພວກເຮົານັ້ນມີການເລືອກທີ່ດີໃນຊ່ວງເວລາອັນຍາກລຳບາກນັ້ນ.

ດານີເອນບົດທີ1 ກໍສອນພວກເຮົາເຖິງບົດຮຽນທີ່ສຳຄັນຫຼາຍກ່ຽວກັບພຣະເຈົ້າ. (1) ພຣະເຈົ້າຊົງຄວບຄຸມປະຫວັດສາດ. (2) ພຣະເຈົ້າຊົງປະທານສະຕິປັນຍາ ພຣະອົງຊ່ວຍໃຫ້ພວກເຮົາເລືອກສິ່ງທີ່ດີໃນເວລາທີ່ມີບັນຫາ. (3) ພຣະເຈົ້າຊົງໃຫ້ກຽດແກ່ຄົນທີ່ໄວ້ວາງໃຈໃນພຣະອົງ.

ດານີເອນ ບົດທີ 1 ກໍຈົບລົງດ້ວຍຂໍ້ພຣະຄຳພີນີ້: "ດານີເອນໄດ້ຮັບໃຊ້ໃນຣາດຊະການເລື້ອຍມາຈົນເຖິງສະໄໝຂອງເຈົ້າໄຊຣັດກະສັດແຫ່ງເປີເຊຍ (ດານີເອນ 1:21). ໄຊຣັດເປັນກະສັດແຫ່ງເປີເຊຍ. ພຣະເຈົ້າຊົງເລືອກໄຊຣັດໃຫ້ປົດປ່ອຍຊາວຢິວອອກຈາກບາບີໂລນ. ໄຊຣັດໄດ້ອະນຸຍາດໃຫ້ປະຊາຊົນຂອງພຣະເຈົ້າໃຫ້ກັບໄປເຢຣູຊາເລັມ. ແມ່ນແລ້ວ ສິ່ງຕ່າງໆເບິ່ງຄືບໍ່ດີປານໃດສຳລັບຊາວຢິວໃນຕອນເລີ່ມຕົ້ນຂອງດານີເອນ ບົດທີ 1. ແຕ່ເມື່ອຮອດຕອນທ້າຍຂອງບົດແລ້ວ ພວກເຮົາກໍເຫັນຄວາມຫວັງ. ແມ່ນແລ້ວ ພວກເຮົາຈະມີຊ່ວງເວລາທີ່ຍາກລຳບາກໃນຊີວິດ. ພວກເຮົາຈະທຸກທໍລະມານແລະຮູ້ສຶກເຈັບປວດ ແຕ່ພຣະເຈົ້າກໍນຳຄວາມຫວັງມາສູ່ຄອບຄົວຂອງເຮົາຢູ່ສະເໝີ."

## ວັນສຸກ 10 ມັງກອນ

"ຊາວບາບີໂລນກໍເຮັດໃຫ້ຊີວິດຂອງດານີເອນແລະໝູ່ຂອງເພິ່ນນັ້ນຍາກລຳບາກ. ພວກເຂົາໂອ້ອວດກ່ຽວກັບການຊະນະສົງຄາມຕໍ່ສູ້ຊາວຢິວ. ຊາວຢິວນັ້ນເປັນນັກໂທດໃນເມືອງບາບີໂລນແມ່ນບໍ? ກະສັດເນບູກາດເນັດຊາໄດ້ນຳເຄື່ອງທີ່ມີຄ່າຕ່າງໆອອກມາຈາກພຣະວິຫານຂອງພຣະເຈົ້າເຊັ່ນດຽວກັນ. ເພິ່ນໄດ້ເອົາໄປໃສ່ໃນວິຫານຂອງພະຕ່າງໆຂອງເພິ່ນເອງ. ກະສັດຂອງອິດສະຣາເອນເອງກໍຕົກເປັນນັກໂທດໃນບາບີໂລນເຊັ່ນດຽວກັນ. ຊາວບາບີໂລນນັ້ນໂອ້ອວດກ່ຽວກັບສິ່ງເຫຼົ່ານີ້. ພວກເຂົາກ່າວວ່າສິ່ງເຫຼົ່ານີ້ຄືຫຼັກຖານວ່າ ສາດສະໜາຂອງພວກເຂົາແລະວິທີການໃຊ້ຊີວິດຂອງພວກເຂົານັ້ນດີກວ່າ. ດານີເອນແລະໝູ່ຂອງເພິ່ນຈະຕ້ອງຢູ່ກັບຄວາມອັບອາຍນີ້. ແມ່ນແລ້ວ ປະຊາຊົນຂອງພຣະເຈົ້າກໍເຮັດໃຫ້ຕົນເອງໄດ້ຮັບຄວາມທຸກທໍລະມານແລະຄວາມອັບອາຍ. ໃນເວລາດຽວກັນນີ້ ພຣະເຈົ້າໄດ້ໃຊ້ປະສົບການອັນຮ້າຍແຮງນີ້ເພື່ອສອນບົດຮຽນໜຶ່ງໃຫ້ແກ່ນະຄອນບາບີໂລນ. ພຣະ

ເຈົ້າເທົ່ານັ້ນທີ່ຄວບຄຸມທຸກຢ່າງ. ກົດຂອງພຣະອົງກໍບໍລິສຸດ. ພຣະບັນຍັດຂອງພຣະອົງຈະຕ້ອງໄດ້ມີການຖືກປະຕິບັດ. ພຣະເຈົ້າສະແດງໃຫ້ຊາວບາບີໂລນເຫັນວ່າສິ່ງໃດຈະເກີດຂຶ້ນເມື່ອປະຊາຊົນທັງຫຼາຍເຊື່ອຟັງກົດພຣະບັນຍັດຂອງພຣະອົງ. ພຣະເຈົ້າປະທານຂ່າວສານນີ້ໃຫ້ແກ່ດານີເອນແລະໝູ່ຂອງເພິ່ນ. ພວກເຂົາຄືຜູ້ຮັບໃຊ້ທີ່ສັດຊື່ຂອງພຣະເຈົ້າ. ພຣະເຈົ້າຊົງເລືອກພວກເຂົາໃຫ້ກ່າວແທນພຣະອົງ ເພາະວ່າພວກເຂົາມີຄວາມສັດຊື່. ມັນເປັນທາງດຽວທີ່ພຣະເຈົ້າຊົງເຮັດພາລະກິດຂອງພຣະອົງ.” (ທ່ານນາງເອເລັນ ຈີ ໄວທ໌)

## <u>ຄຳຖາມຄົ້ນຄວ້າ</u>

1. ຊາວບາບີໂລນຮູ້ສຶກວ່າ ພະຂອງຂອງພວກເຂົາກໍແຂງແກ່ງກວ່າພຣະເຈົ້າຂອງຊົນຊາດອິດສະຣາເອນ. ທ່ານຄິດວ່າຄວາມຈິງອັນໃດໄດ້ຊ່ວຍໃຫ້ດານີເອນແລະໝູ່ຂອງເພິ່ນຮັກສາຄວາມເຂັ້ມແຂງໃນເວລານີ້? ເປັນຫຍັງຈຶ່ງເປັນເລື່ອງສຳຄັນຫຼາຍທີ່ຈະຮູ້ຄວາມຈິງຂອງພຣະຄຳພີ?
2. ເປັນຫຍັງ ພວກເຮົາຈຶ່ງຈຳເປັນຕ້ອງສະແດງອອກເຖິງຄວາມເຊື່ອຂອງເຮົາໃຫ້ແກ່ປະຊາຊົນທີ່ພວກເຮົາຮັບໃຊ້ແລະຕ້ອງການຢາກຈະຢາກຊ່ວຍໃຫ້ພົ້ນ? ຄວາມເຊື່ອຂອງເຮົານັ້ນໃຫ້ຄົນອື່ນເຫັນວ່າ ພຣະເຈົ້າຊົງເປັນໃຜແລະເປັນແບບໃດ?

# ບົດທີ 3

## ພຣະເຈົ້າຊົງສຳແດງໃຫ້ເຫັນອະນາຄົດ

**(11-17 ມັງກອນ 2019)**

**ບ່າຍວັນສະບາໂຕ 11 ມັງກອນ**

**ອ່ານສຳລັບບົດຮຽນອາທິດນີ້**

**ດານີເອນ 2:1-16; ດານີເອນ 2:17-23; ດານີເອນ 2:24-30; ດານີເອນ 2:31-49.**

**ຂໍ້ຄວນຈຳ:** *"ພຣະອົງຊົງພຣະປັນຍາ ແລະ ຊົງເດຊານຸພາບ ຂໍສັນລະເສີນພຣະນາມຂອງພຣະເຈົ້າຕະຫລອດໄປເປັນນິດ" (ດານີເອນ 2:20).*

ໃນແມ່ນ້ຳທີ່ຢູ່ບໍລິເວນເກາະກຣີນແລນນັ້ນ ກໍມີກ້ອນນ້ຳທີ່ແຂງໂຕຢາຍຢູ່ໃນນ້ຳຢ່າງຫຼວງຫຼາຍ. ພວກມັນມີຂະໜາດທີ່ແຕກຕ່າງກັນ. ບາງເທື່ອກ້ອນນ້ຳແຂງເຫຼົ່ານີ້ກໍລອຍໄປໃນທິດທາງທີ່ແຕກຕ່າງກັນໃນເວລາດຽວກັນ. ສິ່ງທີ່ເກີດຂຶ້ນກໍຄື ລົມໄດ້ຍູ້ເອົານ້ຳກ້ອນໆທີ່ນ້ອຍໄປທາງດຽວກັນ. ສ່ວນນ້ຳກໍເຄື່ອນຍ້າຍນ້ຳກ້ອນແຜ່ນໃຫຍ່ໄປໃນອີກທິດທາງໜຶ່ງ. ວິທີການທີ່ນ້ຳກ້ອນເຫຼົ່ານີ້ເຄື່ອນຍ້າຍກໍເປັນຮູບທີ່ພັນລະນາພາບ. ມັນສະແດງໃຫ້ພວກເຮົາເຫັນວ່າ ອານາຈັກຕ່າງໆໄດ້ລຸກຂຶ້ນ ແລະ ລົ້ມລົງໃນປະຫວັດສາດມະນຸດແນວໃດ. ທ່ານນາງເອເລັນຈີໄວທ໌ກ່າວວ່າ "ບັນດາດວງດາວທັງຫຼາຍກໍເຄື່ອນຍ້າຍເປັນວົງກົມພິເສດຢູ່ນອກໂລກ." ແຜນການຂອງພຣະເຈົ້າກໍຄືກັບດວງດາວເຫຼົ່ານີ້. ພຣະເຈົ້າຈະບໍ່ຟ້າວຟັ່ງ ຫຼື ເລັ່ງແຜນການຂອງພຣະອົງ. ພຣະອົງຈະບໍ່ຊັກຊ້າກັບສິ່ງທີ່ພຣະອົງໄດ້ກ່າວວ່າຈະເຮັດ. ຄຳສັນຍາຂອງພຣະອົງນັ້ນກໍເກີດຂຶ້ນຕາມເວລາທີ່ກຳນົດໄວ້. ອານາຈັກຕ່າງໆກໍລຸກຂຶ້ນມີອຳນາດແລະກໍລົ້ມລົງ. ທຸກສິ່ງທຸກຢ່າງໃນປະຫວັດສາດ ເບິ່ງຄືກັບມັນໄດ້ເກີດຂຶ້ນຍ້ອນອຳນາດຂອງມະນຸດ. ແຕ່ພຣະທຳດານີເອນບົດທີ2ນັ້ນ ກໍສະແດງໃຫ້ພວກເຮົາເຫັນວ່າ ພຣະເຈົ້າ

ຊົງຄວບຄຸມປະຫວັດສາດຂອງມະນຸດ. ພຣະອົງຊົງເຄື່ອນຍ້າຍປະຫວັດສາດຂອງມະນຸດໄປສູ່ຈຸດຈົບອັນສຸດທ້າຍ.

## ວັນອາທິດ 2 ມັງກອນ

## ອຳນາດ ແລະ ສະຫງ່າລາສີຂອງພຣະເຈົ້າ (ດານີເອນ 2:1-16)

**ໃຫ້ທ່ານອ່ານກ່ຽວກັບຄວາມຝັນທີ່ພຣະຜູ້ເປັນເຈົ້າຊົງມອບໃຫ້ແກ່ກະສັດເນບູກາດເນັດສາ ໃນດານີເອນ 2:1-16. ດານີເອນແລະຫມູ່ຂອງເພິ່ນຕົກຢູ່ໃນອັນຕະລາຍອັນໃດ ຍ້ອນຄວາມຝັນນີ້?**

ກະສັດກໍໃຈຮ້າຍໃຫ້ກັບພວກທີ່ປຶກສາປະຈໍາກະສັດ. ເພິ່ນໄດ້ສັ່ງໃຫ້ ອາຣີໂອກຜູ້ບັນຊາການທະຫານຍາມປະຈໍາກະສັດໃຫ້ປະຫານພວກທີ່ປຶກສາທັງໝົດໃນນະຄອນບາບີໂລນ. ດັ່ງນັ້ນ ຈຶ່ງເຫັນວ່າ ກະສັດເນບູກາດເນັດຊາ ໄດ້ສັ່ງຂ້າທີ່ປຶກສາທັງຫຼາຍ. ໃນຊ່ວງເວລາທີ່ ດານີເອນແລະໝູ່ຂອງເພິ່ນໄດ້ຮຽນຈົບ. ກະສັດໄດ້ມອບວຽກໃຫ້ແກ່ດານີເອນແລະໝູ່ຂອງເພິ່ນເປັນທີ່ປຶກສາໃນພະລາດຊະວັງຂອງເພິ່ນ. ສະນັ້ນ ດານີເອນ ແລະ ໝູ່ຂອງລາວ ກໍຈະຖືກຂ້າເຊັ່ນດຽວກັນ. ພາສາຂອງພຣະຄໍາພີ ສະແດງໃຫ້ພວກເຮົາເຫັນບາງສິ່ງບາງຢ່າງທີ່ໜ້າສົນໃຈ. ການປະຫານຊີວິດນັ້ນກໍເລີ່ມຂຶ້ນທັນທີ. ດານີເອນແລະໝູ່ເພື່ອນກໍຢູ່ໃນລໍາດັບຕໍ່ໄປທີ່ຈະຖືກຂ້າ. ແຕ່ດານີເອນໄດ້ໄປຫາອາຣີໂອກ ແລະ "ໃຊ້ຄໍາເວົ້າຢ່າງລະມັດລະວັງ" (ດານີເອນ 2:14). ອາຣີໂອກກໍໄດ້ຊ່ອຍດານີເອນ. ແລ້ວດານີເອນກໍຂໍໃຫ້ກະສັດໃຫ້ເວລາເພິ່ນໃນການແກ້ຄວາມຝັນນັ້ນ. ກະສັດຈຶ່ງຕໍ່ເວລາໃຫ້ດານີເອນ. ບັນດາທີ່ປຶກສາ ຫຼື ໝໍມົນທັງຫຼາຍກໍໄດ້ຂໍເວລາເພິ່ນນໍາກະສັດເຊັ່ນດຽວກັນ. ທ່ານເຫັນບໍວ່າກະສັດ ບໍ່ໄດ້ຕໍ່ເວລາໃຫ້ກັບໝໍມົນທັງຫຼາຍ? ນັ້ນເປັນເພາະວ່າ ກະສັດບໍ່ໄດ້ໄວ້ໃຈພວກເຂົາ. ແຕ່ເພິ່ນໄວ້ວາງໃຈດານີເອນ. ດານີເອນກໍເຫັນດີກັບບັນດາໝໍມົນຢ່າງໜຶ່ງ. ນັ້ນກໍຄືວ່າບໍ່ມີມະນຸດຜູ້ໃດສາມາດແກ້ປິດສະໜານີ້ໄດ້.

## ຄຳອະທິຖານສອງຢ່າງຂອງດານີເອນ (ດານີເອນ 2:17-23)

ດານີເອນແລະໝູ່ຂອງລາວໄດ້ພາກັນອະທິຖານ. ພວກເຂົາໄດ້ຂໍໃຫ້ພຣະເຈົ້າຊ່ອຍເຫຼືອ. ພວກເຮົາກໍຄວນອະທິຖານໃນເວລາທີ່ພວກເຮົາມີບັນຫາໃຫຍ່.

**ໃຫ້ທ່ານອ່ານກ່ຽວກັບຄຳອະທິຖານສອງຢ່າງໃນ ດານີເອນ 2:17-23. ດານີເອນແລະໝູ່ຂອງເພິ່ນນັ້ນໄດ້ພາກັນອະທິຖານໃນສອງຄຳອະທິຖານນັ້ນວ່າແນວໃດ?**

ດານີເອນ ບົດທີ 2 ກໍກ່າວເຖິງຄຳອະທິຖານສອງຢ່າງ. ໃນຄຳອະທິຖານທີໜຶ່ງ ດານີເອນໄດ້ຂໍໃຫ້ພຣະເຈົ້າ ສຳແດງຄວາມຝັນແລະໄດ້ອະທິບາຍຄວາມຝັນນັ້ນ (ດານີເອນ 2:17-19). ດານີເອນບໍ່ໄດ້ຂຽນຄຳອະທິຖານນີ້ລົງໃສ່ເຈ້ຍໄວ້. ແຕ່ພຣະຄຳພີບອກພວກເຮົາວ່າ ດານີເອນໄດ້ຂໍໃຫ້ໝູ່ຂອງເພິ່ນນັ້ນອະທິຖານ. "ລາວບອກພວກໝູ່ໃຫ້ພາວັນນາອະທິຖານ ຂໍຄວາມເມດຕາຈາກພຣະເຈົ້າທີ່ຢູ່ເທິງສະຫວັນ ແລະ ຂໍໃຫ້ພຣະອົງອະທິບາຍເລື່ອງເລິກລັບນີ້ໃຫ້ແກ່ພວກຕົນເພື່ອວ່າ ພວກຕົນຈະບໍ່ຖືກຂ້າຮ່ວມກັບພວກທີ່ປຶກສາຄົນອື່ນໆໃນນະຄອນບາບີໂລນ." (ດານີເອນ 2:18). ດານີເອນແລະໝູ່ຂອງເພິ່ນກໍອະທິຖານ. ພຣະເຈົ້າຊົງຕອບຄຳອະທິຖານຂອງເຂົາ. ພຣະເຈົ້າຊົງສະແດງໃຫ້ດານີເອນເຫັນຄວາມຝັນນັ້ນ ແລະກໍອະທິບາຍຄວາມຝັນນັ້ນໃຫ້ດານີເອນເຂົ້າໃຈ. ພວກເຮົາສາມາດໄວ້ໃຈໄດ້ວ່າພຣະເຈົ້າຈະຕອບຄຳອະທິຖານຂອງເຮົາເຊັ່ນກັນ. ພຣະອົງຈະປະທານ "ຄວາມເມດຕາ" (ດານີເອນ 2:18) ເມື່ອເຮົາຂໍພຣະອົງ. ພຣະເຈົ້າຂອງດານີເອນກໍຄືພຣະເຈົ້າຂອງເຮົາເຊັ່ນດຽວກັນ.

ດານີເອນແລະໝູ່ຂອງເພິ່ນກໍມີຄວາມສຸກຫຼາຍ. ພວກເຂົາໄດ້ອະທິຖານອີກເທື່ອໜຶ່ງ. ໃນຄຳອະທິຖານນີ້ ພວກເຂົາໄດ້ຂອບຄຸນພຣະເຈົ້າທີ່ພຣະອົງຊົງຄວບຄຸມປະຫວັດສາດ ແລະ ອຳນາດການປົກຄອງຕ່າງໆ. ຄຳອະທິຖານຂອງດານີເອນກໍຊ່ອຍພວກເຮົາໃຫ້ຈື່ທີ່ຈະຂອບຄຸນພຣະເຈົ້າ ແລະ ສັນລະເສີນພຣະອົງສຳລັບຂອງປະທານທີ່ມາຈາກພຣະອົງ. ຄຳອະທິຖານຂອງດານີເອນກໍຍັງສະແດງໃຫ້ພວກເຮົາ

ເຫັນວ່າ ເພິ່ນໄດ້ຄິດເຖິງພຣະເຈົ້າ. ດານີເອນເຊື່ອວ່າ ພຣະເຈົ້າຊົງຮັກເພິ່ນ. ພຣະເຈົ້າຕ້ອງການສິ່ງທີ່ດີທີ່ສຸດສຳລັບດານີເອນ. ເມື່ອພວກເຮົາອະທິຖານຕໍ່ພຣະເຈົ້າ ພວກເຮົາກໍສາມາດໄວ້ວາງໃຈພຣະເຈົ້າໃຫ້ເຮັດສິ່ງທີ່ດີທີ່ສຸດສຳລັບພວກເຮົາເຊັ່ນດຽວກັນ. ດັ່ງນັ້ນ ພວກເຮົາຄວນສັນລະເສີນແລະຂອບຄຸນພຣະເຈົ້າຢູ່ສະເໝີ.

**ວັນອັງຄານ 14 ມັງກອນ**

## <u>ຮູບປັ້ນ ພາກທີ1 (ດານີເອນ 2:24-30)</u>

**ດານີເອນກ່າວສິ່ງໃດໃນ ດານີເອນ 2:24-30? ເປັນຫຍັງຄຳເວົ້າຂອງເພິ່ນຈຶ່ງສຳຄັນທີ່ຈະໃຫ້ພວກເຮົາຈົດຈຳ? (ອ່ານໂຢຮັນ 5:15 ເພີ່ມເຕີມ)**

ພຣະເຈົ້າຊົງຕອບຄຳອະທິຖານຂອງດານີເອນແລະໝູ່ຂອງເພິ່ນ. ພຣະເຈົ້າຊົງບອກພວກເຂົາເຖິງຄວາມຝັນ ແລະອະທິບາຍຄວາມຝັນນັ້ນ. ແລ້ວດານີເອນຈຶ່ງໄດ້ເລົ່າສິ່ງເຫຼົ່ານີ້ໃຫ້ກະສັດຟັງ. ທ່ານເຫັນບໍ່ວ່າ ດານີເອນໄດ້ຍ້ອງຍໍພຣະເຈົ້າ ແລ້ວກະສັດຈຶ່ງເຫັນວ່າພຣະເຈົ້າຜູ້ສະຖິດຢູ່ໃນສະຫວັນເທົ່ານັ້ນທີ່ສາມາດສະແດງໃຫ້ຄົນຮູ້ເຖິງຂໍ້ເລິກລັບຕ່າງໆ.

**ໃຫ້ທ່ານອ່ານກ່ຽວກັບຄວາມຝັນຂອງກະສັດໃນດານີເອນ 2:31-49. ຄວາມຝັນນີ້ບອກວ່າອານາຈັກຂອງ ເນບູກາດເນັດຊາຈະລົ້ມລົງແນວໃດ?**

ຄວາມຝັນນີ້ກໍກ່ຽວກັບຮູບປັ້ນຮູບໜຶ່ງ. ຫົວຂອງມັນເຮັດຈາກ "ຄຳຢ່າງດີທີ່ສຸດ ເອິກ ແລະ ແຂນເປັນເງິນ; ແອວ ແລະ ກະສະໂພກ ເປັນທອງສຳລິດ ຂາເປັນເຫຼັກ; ຕີນສ່ວນໜຶ່ງເປັນເຫຼັກ ແລະ ອີກສ່ວນໜຶ່ງເປັນດິນໜຽວ." (ດານີເອນ 2:32, 33). ຮູບປັ້ນນີ້ຖືກທຸບລົງເປັນປ່ຽງໆ. ແລ້ວດານີເອນກໍອະທິບາຍກ່ຽວກັບໂລຫະຕ່າງໆທີ່ຢູ່ໃນຮູບປັ້ນນີ້. ເພິ່ນບອກວ່າ ໂລຫະແຕ່ລະສ່ວນນັ້ນໝາຍເຖິງອານາຈັກທີ່ແຕກຕ່າງກັນໃນປະຫວັດສາດໃນອານາຄົດ. ອານາຈັກແຕ່ລະອານາຈັກຈະມາແທນທີ່ອານາຈັກທີ່ມາກ່ອນ. ຂ່າວສານຂອງນິມິດນີ້ກໍມີຄວາມຈະແຈ້ງ. ບາບີໂລນຈະຈົບລົງ. ມັນຈະຖືກແທນທີ່ໂດຍອານາຈັກອີກອານາຈັກໜຶ່ງ. ອານາຈັກນັ້ນກໍຈະຖືກ

ແທນທີ່ດ້ວຍອານາຈັກອື່ນໆເຊັ່ນດຽວກັນ. ແລ້ວພຣະເຈົ້າຈະແທນທີ່ອານາຈັກທັງໝົດເຫຼົ່ານີ້ ດ້ວຍອານາຈັກຂອງພຣະອົງ. ອານາຈັກຂອງພຣະເຈົ້າ ເທົ່ານັ້ນທີ່ຈະຕັ້ງໝັ້ນຄົງຢູ່ຕະຫຼອດໄປ.

**ໃຫ້ເຮົາເບິ່ງວ່າບໍ່ມີສິ່ງໃດທີ່ຢູ່ຍັ້ງຢືນໝັ້ນຄົງຢູ່ຕະຫຼອດໄປ. ແນວຄິດນີ້ສອນອັນໃດກັບພວກເຮົາກ່ຽວກັບຄວາມຫວັງທີ່ພວກເຮົາມີໃນພຣະເຢຊູ? (ໃຫ້ທ່ານອ່ານໂຢຮັນ 6:54 ແລະ 2 ໂກລິນໂທ 4:18 ເພື່ອຫາຄຳຕອບ)**

## ວັນພຸດ 15 ມັງກອນ

**<u>ຮູບປັ້ນ ພາກທີ 2 (ດານີເອນ 2:31-49)</u>**

**ໃຫ້ທ່ານອ່ານເລື່ອງຄວາມຝັນນັ້ນແລະຄຳອະທິບາຍຂອງມັນອີກເທື່ອໜຶ່ງ (ດານີເອນ 2:31-49). ຄຳອະທິບາຍນີ້ສະແດງໃຫ້ພວກເຮົາເຫັນອັນໃດກ່ຽວກັບພຣະເຈົ້າ? ພຣະອົງຊົງຮູ້ເຖິງອະນາຄົດຫຼາຍຊ່ຳໃດ?**

ດານີເອນ ບົດທີ2 ກໍຊ່ອຍໃຫ້ພວກເຮົາເຂົ້າໃຈຂໍ້ມູນໃນດານີເອນ ບົດທີ 7,8, ແລະ 11. ດານີເອນບົດທີ 2ຄື ຄຳພະຍາກອນ ຫຼືຂ່າວສານພິເສດ. ມັນໄດ້ສະແດງໃຫ່ພວກເຮົາເຫັນສິ່ງທີ່ຈະເກີດຂຶ້ນໃນອະນາຄົດພາຍໜ້າ.

***ຫົວທີ່ເປັນຄຳ*** ກໍຄືຄຳພັນລະນາເຖິງນະຄອນບາບີໂລນ (ປີ 626 ກ່ອນຄ.ສ ຫາ ປີ 539 ກ່ອນຄ.ສ)

**ເອິກແລະແຂນ** ທີ່ເປັນເງິນນັ້ນເປັນຄຳທີ່ພັນລະນາເຖິງອານາຈັກມີເດຍ-ເປີເຊຍ (ປີ 539 ກ່ອນຄ.ສ ຫາປີ 331 ກ່ອນຄ.ສ)

**ແອວແລະສະໂພກ** ທີ່ເປັນທອງສຳລິດນັ້ນ ກໍເປັນຄຳພັນລະນາພາບຂອງກຣີກ (ປີ 331-168 ກ່ອນ ຄ.ສ) ເອເຊກຽນ 27:13 ບອກວ່າ ຊາວກຣີກກໍຄ້າຂາຍເຄື່ອງຕ່າງໆທີ່ເຮັດຈາກທອງແດງ.

**ຂາ**ທີ່ເປັນເຫຼັກ ສະແດງໃຫ້ພວກເຮົາເຫັນກຸງໂລມ (ປີ 168 ກ່ອນ ຄ.ສ ຫາ ປີ ຄ.ສ 476).

**ຕີນ**ທີ່ເປັນເຫຼັກປົນດິນໜຽວນັ້ນກໍສະແດງເຖິງ ທະວີບເອີລົບທີ່ແຍກອອກຈາກກັນ ຫຼັງຈາກອານາຈັກໂລມໄດ້ ແຕກຫັກໄປ (ປີ ຄ.ສ 476-ການສະເດັດກັບມາຄັ້ງທີສອງຂອງພຣະເຢຊູ). ກະສັດຫຼາຍອົງໄດ້ພະຍາຍາມເຕົ້າໂຮມທະວີບເອີລົບໃຫ້ຢູ່ພາຍໃຕ້ອຳນາດດຽວກັນ. ແຕ່ກໍບໍ່ມີສິ່ງໃດທີ່ຈະເຕົ້າໂຮມພວກເຂົາຄືນໄດ້ຕະຫຼອດເວລາຜ່ານມາ. ດານີເອນໄດ້ສະແດງໃຫ້ພວກເຮົາເຫັນວ່າ ທະວີບເອີລົບຈະຄົງຢູ່ແບບນີ້ຈົນກວ່າ ພຣະເຈົ້າຈະຕັ້ງອານາຈັກອັນຕະຫຼອດໄປເປັນນິດຂອງພຣະອົງ.

**ວັນພະຫັດ 16 ມັງກອນ**

## <u>ກ້ອນຫີນ (ດານີເອນ 2:34, 35, 44, 45)</u>

**ອ່ານດານີເອນ 2:34, 35, 44, 45. ຂໍ້ພຣະຄຳພີເຫຼົ່ານີ້ສອນຫຍັງພວກເຮົາກ່ຽວກັບໂລກນີ້? ປະຫວັດສາດຂອງມະນຸດຈະສິ້ນສຸດລົງແບບໃດ?**

ຄວາມຝັນກໍບອກພວກເຮົາເຖິງສິ່ງຕ່າງໆທີ່ຈະເກີດຂຶ້ນໃນຍຸກສຸດທ້າຍ (ດານີເອນ 2:28). ອານາຈັກເຫຼັກ (ແລະ ດິນໜຽວ) ກໍມີພະລັງອຳນາດແລະຮັ່ງມີ. ແຕ່ພວກມັນກໍເລັກນ້ອຍ ເມື່ອປຽບທຽບກັບອານາຈັກຫີນ. ເຫຼັກ ແລະດິນໜຽວ ກໍເປັນຄຳທີ່ພັນລະນາອານາຈັກຂອງມະນຸດ. ແຕ່ກ້ອນຫີນທີ່ຢູ່ໃນຄວາມຝັນກໍບໍ່ແມ່ນກ້ອນຫີນທີ່ມະນຸດສ້າງ. ຄວາມຝັນນັ້ນສະແດງໃຫ້ພວກເຮົາເຫັນວ່າ ອານາຈັກຫີນນັ້ນຈະດຳລົງຢູ່ຕະຫຼອດໄປ. ກ້ອນຫີນນັ້ນ ແມ່ນສັນຍາລັກຂອງພຣະເຈົ້າ (ພະບັນຍັດສອງ 32:4; 1 ຊາມູເອນ 2:2; ເພງສັນລະເສີນ 18:31). ນອກຈາກນັ້ນ ກ້ອນຫີນກໍຍັງເປັນຄຳທີ່ພັນລະນາພຣະເຢຊູ (ເພງສັນລະເສີນ 118:22; 1 ເປໂຕ 2:4,7). ດັ່ງນັ້ນ ກ້ອນຫີນນັ້ນຈຶ່ງເປັນຄຳພັນລະນາທີ່ດີທີ່ສຸດສຳລັບອານາຈັກອັນຕະຫຼອດໄປເປັນນິດຂອງພຣະເຈົ້າ.

ຄູສອນພຣະຄຳພີບາງຄົນກໍໂຕ້ຖຽງວ່າ ພຣະເຢຊູໄດ້ເລີ່ມຕົ້ນອານາຈັກຫີນຂອງພຣະອົງໃນເວລາທີ່ພຣະອົງ ປະຕິບັດວຽກງານຂອງພຣະອົງເທິງໂລກນີ້. ຕໍ່ມາຜູ້ຕິດຕາມພຣະເຢຊູກໍໄດ້ແບ່ງປັນຂ່າວປະເສີດກ່ຽວກັບພຣະເຢຊູໄປທຸກບ່ອນ. ດັ່ງນັ້ນ ຜູ້ຊ່ຽວຊານພຣະຄຳພີບາງຄົນກໍຄິດວ່າ ອານາຈັກຍຸກຫີນທົ່ວໂລກໄດ້ເລີ່ມຕົ້ນຂຶ້ນເມື່ອຜູ້ຕິດຕາມຂອງພຣະເຢຊູໄດ້ເລີ່ມຕົ້ນແບ່ງປັນຂ່າວປະເສີດ. ແຕ່ອານາຈັກຫີນກໍເລີ່ມຕົ້ນຂຶ້ນຫຼັງຈາກອານາຈັກເຫຼັກສີ່ແຫ່ງແລະ ອານາຈັກທີ່ແບ່ງແຍກນັ້ນຈົບລົງ. ດັ່ງນັ້ນ ອານາຈັກຫີນກໍບໍ່ສາມາດເກີດຂຶ້ນໄດ້ໃນຊ່ວງເວລາຂອງພຣະເຢຊູເພາະອານາຈັກໂຣມກຳລັງມີອຳນາດຢູ່ໃນເວລານັ້ນ

## ວັນສຸກ 17 ມັງກອນ

## <u>ຂໍ້ຄິດເພີ່ມເຕີມ</u>

"ໃນສາຍຕາຂອງມະນຸດ ປະຫວັດສາດທີ່ຜ່ານມາອາດເບິ່ງຄືວ່າມີຄວາມຫວຸ້ນວາຍສັບສົນ... ແຕ່ດານີເອນນັ້ນສະແດງໃຫ້ພວກເຮົາເຫັນວ່າ ພຣະເຈົ້າຊົງຢູ່ເບື້ອງຫຼັງທຸກສິ່ງທຸກຢ່າງທີ່ພວກເຮົາເຫັນ. ພຣະເຈົ້າຊົງຫຼຽວລົງມາຈາກສະຫວັນເບິ່ງສິ່ງທັງໝົດທີ່ເກີດຂຶ້ນໃນໂລກນີ້. ພຣະອົງຊົງບັນດົນຈິດໃຈແລະແນວຄິດຂອງຜູ້ນຳທັງຫຼາຍ. ພຣະອົງຊົງເຮັດໃຫ້ສິ່ງຕ່າງໆນັ້ນເກີດຂຶ້ນ. ພຣະອົງຊົງກະທຳສິ່ງທີ່ດີທີ່ສຸດ. "Daniel A Reader's Guide ໂດຍທ່ານ ວິລຽມຊີ)

### <u>ຄຳຖາມຄົ້ນຄວ້າ</u>

1. ມັນເປັນການດີທີ່ຮູ້ວ່າ ພຣະເຈົ້າຊົງຄວບຄຸມທຸກສິ່ງທຸກຢ່າງທີ່ເກີດຂຶ້ນຢູ່ເທິງໂລກນີ້, ມີຄວາມທຸກທໍລະມານຢ່າງຫຼວງຫຼາຍໃນໂລກນີ້. ແຕ່ພຣະເຈົ້າຈະນຳຄວາມທຸກທັງໝົດນີ້ໄປສູ່ຈຸດຈົບ. ພວກເຮົາສາມາດເຮັດສິ່ງໃດເພື່ອຊ່ວຍຢຸດຕິຄວາມທຸກທໍລະມານທີ່ພວກເຮົາເຫັນຢູ່ອ້ອມຮອບໂຕເຮົາ.
2. ກະສັດເນບູກາດເນັດຊາໄດ້ສ້າງຄວາມເຈັບປວດແກ່ປະຊາຊົນຂອງພຣະເຈົ້າຢ່າງຫຼວງຫຼາຍ. ຄັນຊັ້ນແລ້ວ ເປັນຫຍັງດານີເອນຈຶ່ງເຮັດວຽກຢ່າງໃກ້ຊິດກັບກະສັດອົງນີ້ ແລະກໍຍັງຊື່ສັດຕໍ່ເພິ່ນ?

3. ກ້ອນຫີນໃນດານິເອນບົດທີ2 ກໍສະແດງເຖິງອຳນາດຂອງພຣະເຢຊູທີ່ຈະປົກຄຸມທົ່ວໂລກ. ສິ່ງນີ້ຈະເກີດຂຶ້ນຫຼັງຈາກການສະເດັດກັບມາເທົ່ານັ້ນ. ແລ້ວເປັນຫຍັງ ການສະເດັດກັບມາຄັ້ງທີສອງຈຶ່ງເປັນຄຳອະທິບາຍທີ່ດີຢ່າງດຽວສຳລັບສິ່ງທີ່ກ້ອນຫີນເຮັດໃນວາລະສຸດທ້າຍ?

# ບົດທີ 4

## ຈາກເຕົາທີ່ຮ້ອນໄປສູ່ພະລາດຊະວັງ

**(18-24 ມັງກອນ 2019)**

**ບ່າຍວັນສະບາໂຕ 18 ມັງກອນ**

**<u>ອ່ານສໍາລັບບົດຮຽນອາທິດນີ້</u>**

**ດານີເອນ 3:1-15; ພະນິມິດ 13:11-18; ອົບພະຍົບ 20:3-6; ດານີເອນ 3:19-27.**

**ຂໍ້ຄວນຈໍາ:** *"ຖ້າພຣະເຈົ້າອົງທີ່ພວກຂ້ານ້ອຍຮັບໃຊ້ຢູ່ສາມາດ ຊ່ອຍພວກຂ້ານ້ອຍໃຫ້ພົ້ນຈາກເຕົາໄຟ ແລະ ຈາກອໍານາດຂອງທ່ານໄດ້ ແລ້ວ ພຣະອົງກໍຈະຊ່ອຍ." (ດານີເອນ 3:17)*

ດ້ວຍຄໍາເວົ້ານີ້ (ດານີເອນ 3:17), ໝູ່ຂອງດານີເອນສາມຄົນໄດ້ສະແດງຄວາມເຊື່ອຂອງເຂົາຕໍ່ອານາຈັກ ບາບີໂລນທັງໝົດ. ຊາຍໜຸ່ມສາມຄົນນີ້ໄດ້ສະແດງໃຫ້ເຫັນວ່າ ພຣະເຈົ້າທີ່ພວກເຂົານະມັດສະການນັ້ນຄື ພຣະເຈົ້າອົງດຽວທີ່ແທ້ຈິງ ແລະເປັນອົງດຽວທີ່ມີຊີວິດ. ການຢືນຢັດສໍາລັບພຣະເຈົ້າຂອງໝູ່ດານີເອນກໍໄດ້ສະແດງອອກເຖິງຄວາມເຊື່ອຂອງພວກເຂົາ. ຊາຍສາມຄົນນີ້ໄດ້ສະແດງໃຫ້ເຫັນຄວາມຮັກຂອງພວກເຂົາສໍາລັບພຣະເຈົ້າ. ຊາຍສາມຄົນນີ້ສະແດງໃຫ້ຊາວບາບີໂລນເຫັນວ່າ ບໍ່ມີສິ່ງໃດທີ່ຈະເຮັດໃຫ້ພວກເຂົາກົ້ມລົງ ແລະ ກາບໄຫວ້ຮູບປັ້ນນັ້ນ. ເລື່ອງນີ້ກໍມີບົດຮຽນຫຼາຍຢ່າງທີ່ມີຄ່າໃຫ້ກັບພວກເຮົາໃນຍຸກສຸດທ້າຍນີ້. (ທ່ານນາງເອເລັນຈີໄວທ໌)

ໃນຕອນສຸດທ້າຍ ພວກເຮົາຈະຕ້ອງມີຈຸດຢືນສໍາລັບຄວາມເຊື່ອຂອງພວກເຮົາ. ພຣະຄໍາສະແດງໃຫ້ພວກເຮົາເຫັນວ່າຈະມີການທົດສອບການນະມັດສະການຢູ່ທົ່ວ

ໂລກ. ຊີວິດຂອງເຮົາຈະຕົກຢູ່ໃນອັນຕະລາຍຄືກັບໝູ່ຂອງດານີເອນສາມຄົນ. ດັ່ງນັ້ນ ພວກເຮົາຈຶ່ງຈຳເປັນຕ້ອງສຶກສາພຣະທຳດານີເອນ ບົດທີ3. ພຣະຄຳພີບົດນີ້ສະແດງໃຫ້ພວກເຮົາເຫັນປະສົບການທີ່ພວກເຮົາຈະມີໃນຍຸກສຸດທ້າຍ.

**ວັນອາທິດ 19 ມັງກອນ**

## <u>ຮູບປັ້ນທອງຄຳ (ດານີເອນ 3:1-7)</u>

**ອ່ານກ່ຽວກັບຮູບປັ້ນທອງຄຳໃນດານີເອນ 3:1-7. ແມ່ນຫຍັງເຮັດໃຫ້ກະສັດສ້າງຮູບປັ້ນນີ້ຂຶ້ນມາ?**

ດັ່ງທີ່ພວກເຮົາໄດ້ເຫັນ ກະສັດເນບູກາດເນັດຊາໄດ້ຝັນກ່ຽວກັບຮູບປັ້ນຮູບໜຶ່ງ. ຕໍ່ມາເພິ່ນຈຶ່ງໄດ້ສ້າງຮູບປັ້ນຍັກໜຶ່ງຂຶ້ນມາ. ຮູບປັ້ນນີ້ເຮັດດ້ວຍຄຳຕັ້ງແຕ່ຫົວຈົນຮອດຕີນ. ເປັນຫຍັງກະສັດຈຶ່ງສ້າງຮູບປັ້ນນີ້? ອາດຈະເປັນເພາະວ່າ ເພິ່ນບໍ່ຕ້ອງການໃຫ້ອານາຈັກຂອງເພິ່ນຫລົ້ມ. ກະສັດບໍ່ພໍໃຈທີ່ຈະເປັນພຽງແຕ່ຫົວຂອງຮູບປັ້ນທີ່ເຮັດດ້ວຍຄຳ. ເພິ່ນຕ້ອງການໃຫ້ອານາຈັກຂອງເພິ່ນນັ້ນຄົງຢູ່ຕະຫລອດໄປ. ດັ່ງນັ້ນ ເພິ່ນຈຶ່ງສ້າງຮູບປັ້ນທັງໝົດດ້ວຍດ້ວຍທອງຄຳ. ນັ້ນກໍສະແດງໃຫ້ປະຊາຊົນຂອງເພິ່ນເຫັນວ່າ ອານາຈັກຂອງເພິ່ນຈະບໍ່ມີມື້ສິ້ນສຸດ.

ກະສັດກໍເຕັມໄປດ້ວຍຄວາມອວດອົ່ງທະນົງໂຕ. ຄວາມອວດອົ່ງນີ້ກໍເຮັດໃຫ້ພວກເຮົາຈື່ກຸ່ມຄົນທີ່ໄດ້ສ້າງຫໍບາເບວຂຶ້ນມາ. ພວກເຂົາເຫຼົ່ານັ້ນກ້າທີ່ຈະທ້າທາຍອຳນາດຂອງພຣະເຈົ້າໂດຍການສ້າງຫໍຄອຍທີ່ຈະພະຍາຍາມໄປເຖິງສະຫວັນໄດ້. ກະສັດເນບູກາດເນັດຊາກໍຊົ່ວຮ້າຍຄືກັບຄົນເຫຼົ່ານີ້. ເພິ່ນບໍ່ສາມາດຢູ່ກັບແນວຄິດທີ່ວ່າອານາຈັກຂອງເພິ່ນເອງຈະສິ້ນສຸດລົງ. ດັ່ງນັ້ນ ກະສັດຈຶ່ງໄດ້ສ້າງຮູບປັ້ນເພື່ອສະແດງເຖິງອຳນາດຂອງຕົນເອງ. ແລະຮູບປັ້ນນັ້ນກໍຍັງເປັນບົດທົດສອບສຳລັບປະຊາຊົນຂອງເພິ່ນ. ມັນສະແດງໃຫ້ກະສັດເຫັນວ່າ ໃຜຊື່ສັດແລະຈົ່ງຮັກພັກດີຕໍ່ກະສັດແລະໃຜບໍ່ຊື່ສັດ.

**ກະສັດເນບູກາເນັດຊາໄດ້ຕົກລົງໄປສູ່ກັບດັກແຫ່ງຄວາມອວດອົ່ງທະນົງໂຕ. ພວກເຮົາສາມາດເຮັດສິ່ງໃດ ເພື່ອໃຫ້ພົ້ນຈາກກັບດັກອັນດຽວກັນນີ້?**

## ວັນຈັນ 20 ມັງກອນ

## <u>ຄຳສັ່ງຂອງກະສັດທີ່ບອກໃຫ້ນະມັດສະການ (ດານີເອນ 3:8-15)</u>

**ປຽບທຽບສິ່ງທີ່ເກີດຂຶ້ນໃນດານີເອນ 3:8-15 ກັບສິ່ງທີ່ເກີດຂຶ້ນໃນພະນິມິດ 13:11-18. ແມ່ນຫຍັງໄດ້ເກີດຂຶ້ນໃນສະໄໝຂອງດານີເອນ ເຊິ່ງຈະເກີດຂຶ້ນໃນອະນາຄົດໃນຍຸດສຸດທ້າຍ?**

ພວກເຮົາກຳລັງດຳເນີນຊີວິດຢູ່ໃນຊ່ວງຍຸກສຸດທ້າຍຂອງປະຫວັດສາດ. ພະນິມິດ ບົດທີ13 ກໍປະກາດວ່າ ຄົນໃນໂລກນີ້ຈະຖືກສັ່ງໃຫ້ນະມັດສະການອຳນາດຂອງສັດຮ້າຍແລະຮູບປັ້ນຂອງມັນ. ຮູບປັ້ນກໍຄືພະປອມ. ອຳນາດຂອງສັດຮ້າຍໃນທະເລໄດ້ຮັບການຊ່ວຍເຫຼືອຈາກສັດຮ້າຍເທິງບົກ. ອຳນາດຂອງສັດຮ້າຍທະເລໄດ້ບັງຄັບໃຫ້ "ຄົນທັງໝົດທັງນ້ອຍແລະໃຫຍ່ ທັ່ງຮັ່ງມີແລະຍາກຈົນ ທັງເສລີແລະຂ້ອຍຂ້າ ໄດ້ຮັບເຄື່ອງໝາຍໄວ້ທີ່ມືຂວາ ຫຼື ທີ່ໜ້າຜາຂອງພວກເຂົາ." (ພະນິມິດ 13-16)

ທ່ານເຫັນບໍວ່າ ໃນພະນິມິດບົດທີ13ນັ້ນ ກຸ່ມຄົນ6ກຸ່ມໄດ້ພາກັນນະມັດສະການຮູບປັ້ນຂອງສັດຮ້າຍຈາກທະເລ? ພວກເຂົາຄື (1) ກຸ່ມຄົນທີ່ຄົນອື່ນເຫັນວ່າບໍ່ສຳຄັນ. (2) ກຸ່ມຄົນທີ່ຍິ່ງໃຫຍ່. (3) ກຸ່ມຄົນທີ່ຮັ່ງມີ. (4) ກຸ່ມຄົນທີ່ທຸກຍາກ. (5) ຄົນທີ່ມີອິດສະຫຼະພາບ ແລະ (6) ກຸ່ມຂ້າທາດ. ເລກຂອງສັດຮ້າຍທະເລນັ້ນຄື 666. ດານີເອນ 3:1 ສະແດງໃຫ້ເຫັນວ່າ ເນບູກາເນັດຊາໄດ້ສ້າງໃຫ້ຮູບປັ້ນຂອງເພິ່ນນັ້ນ ສູງ 60 ກິວບິດ (26.4ແມັດ) ແລະ ກວ້າງ 6 ກິວບິດ (2.6ແມັດ). ຮູບປັ້ນຄຳຂອງເນບູກາດເນັດຊາເປັນຮູບທີ່ພັນລະນາພາບ. ມັນສະແດງໃຫ້ເຫັນວ່າບາບີໂລນໃນຍຸດກາສຸດທ້າຍນັ້ນຈະເຮັດສິ່ງໃດໃນບັ້ນປາຍ. ດັ່ງນັ້ນ ພວກເຮົາຈຶ່ງຄວນໃສ່ໃຈໃນສິ່ງທີ່ເກີດຂຶ້ນໃນເລື່ອງນີ້. ມັນສະແດງໃຫ້ເຫັນວ່າ ພຣະເຈົ້າຊົງຄວບຄຸມສິ່ງຕ່າງໆທີ່ເກີດຂຶ້ນໃນໂລກນີ້.

## ບົດທົດສອບຂອງໄຟ (ອົບພະຍົບ 20:3-6)

ໝູ່ຂອງດານີເອນສາມຄົນກໍມີວຽກຕຳແໜ່ງໃນພະລາດຊະວັງ. ພວກເຂົາມີຄວາມຈົ່ງຮັກພັກດີຕໍ່ກະສັດ. ນອກຈາກນັ້ນ ພວກເຂົາຍັງຊື່ສັດຕໍ່ພຣະເຈົ້າ. ຄວາມຊື່ສັດຂອງເຂົາຕໍ່ພຣະເຈົ້າກໍວາງຂອບເຂດທີ່ຈຳກັດສຳລັບຄວາມຈົ່ງຮັກພັກດີທີ່ເຂົາມີຕໍ່ມະນຸດ. ຊາຍໜຸ່ມສາມຄົນກໍຍິນດີທີ່ຈະຮັບໃຊ້ກະສັດ ແຕ່ພວກເຂົາບໍ່ສາມາດນະມັດສະການຮູບປັ້ນຂອງກະສັດໄດ້.

**ແມ່ນຫຍັງໄດ້ຊ່ວຍຊາຍສາມຄົນນີ້ໃຫ້ຢືນຢັດຢ່າງເຂັ້ມແຂງສຳລັບພຣະເຈົ້າ? ອ່ານອົບພະຍົບ 20:3-6 ແລະ ພະບັນຍັດສອງ 6:4 ສຳລັບຄຳຕອບ.**

ພຣະເຈົ້າໄດ້ເຮັດໃຫ້ຊາຍໜຸ່ມສາມຄົນນີ້ເຂັ້ມແຂງ. ພຣະອົງຊົງເຕີມຈິດໃຈຂອງເຂົາດ້ວຍຄວາມກ້າຫານ. ພວກເຂົາໄດ້ກ່າວກັບກະສັດວ່າ : "ຖ້າພຣະເຈົ້າອົງທີ່ພວກຂ້ານ້ອຍຮັບໃຊ້ຢູ່ສາມາດຊ່ອຍພວກຂ້ານ້ອຍໃຫ້ພົ້ນຈາກເຕົາໄຟ ແລະ ຈາກອຳນາດຂອງທ່ານໄດ້ ແລ້ວພຣະອົງກໍຈະຊ່ອຍ. ແຕ່ເຖິງແມ່ນວ່າ ພຣະອົງບໍ່ຊ່ອຍກໍຂໍໃຫ້ທ່ານຮູ້ໄວ້ວ່າ ພວກຂ້ານ້ອຍຈະບໍ່ຂາບໄຫວ້ພະຂອງທ່ານ ແລະຈະບໍ່ກົ້ມຂາບຕໍ່ຮູບປັ້ນເປັນຄຳທີ່ທ່ານໄດ້ສ້າງຂຶ້ນນັ້ນຢ່າງເດັດຂາດ."

**ຊັດຣາກ ເມຊາກ ແລະ ອາເບັດເນໂກ ຮູ້ວ່າ ພຣະເຈົ້າສາມາດຊ່ອຍພວກເຂົາໃຫ້ພົ້ນຈາກເຕົາໄຟທີ່ຮ້ອນໄດ້. ແມ່ນແທ້ ແຕ່ວ່າພວກເຂົາກໍບໍ່ຮູ້ວ່າ ພຣະອົງຈະຊົງຊ່ອຍພວກເຂົາຫຼືບໍ່. ແຕ່ພວກເຂົາກໍປະຕິເສດທີ່ຈະເຊື່ອຟັງຄຳສັ່ງຂອງກະສັດ. ຄວາມເຊື່ອທີ່ເຂັ້ມແຂງນີ້ມາຈາກໃສ? ພວກເຮົາເອງຈະມີຄວາມເຊື່ອແບບນີ້ໄດ້ແນວໃດ?**

## ຜູ້ຊາຍຄົນທີສີ່ (ດານີເອນ 3:19-27)

**ອ່ານພຣະທຳ ດານີເອນ 3:19-27. ແມ່ນຫຍັງໄດ້ເກີດຂຶ້ນໃນຂໍ້ພຣະຄຳພີເຫຼົ່ານີ້? ແມ່ນໃຜທີ່ເປັນອີກຄົນທີ່ຢູ່ໃນເຕົາໄຟນັ້ນ?**

ກະສັດເນບູກາດເນັດຊາໄດ້ໂຍນ ຊັດຣາກ ເມຊາກ ແລະ ອາເບັດເນໂກເຂົ້າໄປໃນໄຟ. ແຕ່ກະສັດເນບູກາດເນັດຊາກໍສັບສົນຍ້ອນບາງຢ່າງທີ່ເກີດຂຶ້ນ. ເພິ່ນໄດ້ເຫັນຄົນອີກຄົນໜຶ່ງໃນເຕົາໄຟນັ້ນ! ກະສັດກໍບອກວ່າຄົນທສີ່ທີ່ເພິ່ນເຫັນນັ້ນກໍເບິ່ງຄືກັບ "ບຸດຂອງພຣະເຈົ້າ" (ດານີເອນ 3:25; ສະບັບພາສາອັງກິດ)

ກະສັດກໍບໍ່ສາມາດກ່າວສິ່ງໃດຫຼາຍກວ່ານັ້ນອີກ. ແຕ່ພວກເຮົາກໍຮູ້ວ່າຄົນທີ່ສີ່ນັ້ນຄືພຣະເຢຊູ. ພຣະເຢຊູອົງດຽວກັນນີ້ກໍປະກົດໂຕຕໍ່ໜ້າອັບຣາຮາມກ່ອນທີ່ພຣະເຈົ້າຈະທຳລາຍເມືອງໂຊໂດມແລະກົມມະຣາ. ພຣະເຢຊູອົງດຽວກັນນີ້ໄດ້ຕໍ່ສູ້ກັບຢາໂຄບຢູ່ຂ້າງຫ້ວຍນ້ຳຈາບອກ. ພຣະເຢຊູອົງດຽວນີ້ໄດ້ສຳແດງພຣະອົງເອງໃຫ້ໂມເຊເຫັນໃນພຸ່ມໄມ້ ທີ່ກຳລັງລຸກໄໝ້ຢູ່. ຄົນທີສີ່ທີ່ຢູ່ໃນເຕົາໄຟກໍສະແດງໃຫ້ພວກເຮົາເຫັນພຣະເຢຊູກ່ອນທີ່ພຣະອົງຈະສະເດັດມາໂລກນີ້ ໃນຖານະເປັນມະນຸດຄົນໜຶ່ງ. ພຣະເຢຊູຊົງຢືນຢູ່ໃນເຕົາໄຟເພື່ອສະແດງໃຫ້ພວກເຮົາເຫັນວ່າ ພຣະເຈົ້າຊົງຢືນຢູ່ຂ້າງ ປະຊາຊົນຂອງພຣະອົງໃນຊ່ວງທີ່ພວກເຂົາຍາກລຳບາກ.

ທ່ານນາງເອເລັນຈີໄວທ໌ກ່າວວ່າ "ແຕ່ພຣະຜູ້ເປັນເຈົ້າບໍ່ໄດ້ລືມໄລຜູ້ຮັບໃຊ້ຂອງພຣະອົງເອງ. ພວກເຂົາຄືພະຍານຂອງພຣະອົງ. ທະຫານຂອງກະສັດໄດ້ໂຍນພວກເຂົາເຂົ້າໄປໃນເຕົາທີ່ຮ້ອນໄໝ້ຢູ່. ແລ້ວພຣະຜູ້ຊ່ອຍໃຫ້ລອດກໍສະແດງພຣະອົງເອງໃຫ້ຊັດຣາກ ເມຊາກ ແລະ ອາເບັດເນໂກໄດ້ເຫັນ. ພວກເຂົາໄດ້ຍ່າງໄປມາໃນກອງໄຟນັ້ນ. ພຣະເຢຊູຊົງເປັນພຣະເຈົ້າແຫ່ງຄວາມຮ້ອນແລະຄວາມເຢັນ. ເມື່ອພຣະເຢຊູຍ່າງເຂົ້າໄປໃນໄຟນັ້ນ ແປວໄຟນັ້ນກໍບໍ່ສາມາດທຳລາຍຊາຍສາມຄົນນັ້ນໄດ້." (ປື້ມທ່ານນາງເອເລັນຈີໄວທ໌)

## ເຄັດລັບສູ່ການມີຄວາມເຊື່ອທີ່ເຂັ້ມແຂງ (ເຮັບເລີ ບົດທີ11)

**ອ່ານເຮັບເລີ ບົດທີ11. ພຣະຄຳບົດນີ້ສອນຫຍັງພວກເຮົາກ່ຽວກັບຄວາມເຊື່ອ? ຄວາມເຊື່ອອັນແທ້ຈິງນັ້ນແມ່ນຫຍັງ?**

ທ່ານຢາກຈະມີຄວາມເຊື່ອທີ່ເຂັ້ມແຂງຫຼືບໍ່? ຖ້າແມ່ນແລ້ວສິ່ງທຳອິດທີ່ທ່ານຈຳເປັນຕ້ອງເຮັດຄືຖາມວ່າ: ຄວາມເຊື່ອນັ້ນແມ່ນຫຍັງ? ບາງຄົນເຊື່ອວ່າຄວາມເຊື່ອຄືຄຳຕອບຂອງຄຳທີ່ເຮົາອະທິຖານຕໍ່ພຣະເຈົ້າ. ພວກເຂົາໄປຫ້າງຮ້ານແລ້ວອະທິຖານໃຫ້ໄດ້ບ່ອນຈອດ. ຖ້າພວກເຂົາໄດ້ບ່ອນຈອດແລ້ວ ພວກເຂົາກໍຄິດວ່າພວກເຂົາມີຄວາມເຊື່ອທີ່ເຂັ້ມແຂງ. ແຕ່ສົມມຸດວ່າ ພວກເຂົາໄປຮອດຫ້າງແລ້ວແຕ່ກັບບໍ່ໄດ້ບ່ອນຈອດ. ພຣະເຈົ້າບໍ່ໄດ້ຕອບຄຳອະທິຖານຂອງພວກເຂົາ. ດັ່ງນັ້ນ ພວກເຂົາອາດຈະຄິດວ່າຄວາມເຊື່ອຂອງເຂົານັ້ນອ່ອນແອ. ຄວາມເຂົ້າໃຈກ່ຽວກັບຄວາມເຊື່ອແບບນີ້ກໍອັນຕະລາຍ. ມັນພະຍາຍາມທີ່ຈະບັງຄັບໃຫ້ພຣະເຈົ້າເຮັດໃນສິ່ງທີ່ພວກເຮົາຕ້ອງການ. ມັນບໍ່ແມ່ນການໄວ້ວາງໃຈໃນສະຕິປັນຍາຂອງພຣະເຈົ້າແລະອຳນາດຂອງພຣະອົງທີ່ຈະເລືອກສິ່ງທີ່ດີທີ່ສຸດສຳລັບເຮົາ.

ໝູ່ຂອງດານີເອນກໍສະແດງໃຫ້ພວກເຮົາເຫັນຄວາມເຊື່ອອັນແທ້ຈິງ. ພວກເຂົາຮູ້ຈັກພຣະເຈົ້າແລະພວກເຂົາກໍໃກ້ຊິດກັບພຣະອົງ. ຄວາມໃກ້ຊິດສະໜິດສະໜົມກັບພຣະເຈົ້າຂອງເຂົານັ້ນ ກໍເຮັດໃຫ້ພວກເຂົາໄວ້ວາງໃຈໃນພຣະເຈົ້າຢ່າງສົມບູນ. ຄວາມເຊື່ອນັ້ນບໍ່ໄດ້ບັງຄັບພຣະເຈົ້າໃຫ້ເຮັດໃນສິ່ງທີ່ພວກເຮົາຕ້ອງການ. ດັ່ງທີ່ພວກເຮົາໄດ້ເຫັນໃນເລື່ອງນີ້ວ່າ ໝູ່ຂອງດານີເອນທັງສາມຄົນກໍບໍ່ໄດ້ຮູ້ຄັກແນ່ວ່າ ພຣະເຈົ້າຈະເຮັດສິ່ງໃດເພື່ອຊ່ອຍພວກເຂົາ. ແຕ່ພວກເຂົາໄດ້ຕັດສິນໃຈທີ່ຈະເຮັດສິ່ງທີ່ຖືກຕ້ອງເຖິງແມ່ນວ່າພວກເຂົາຈະຕາຍກໍຕາມ. ຕົວຢ່າງຂອງພວກເຂົາກໍສະແດງເຖິງຄວາມເຊື່ອອັນແທ້ຈິງ. ແມ່ນແລ້ວ ພວກເຮົາໄດ້ສະແດງອອກເຖິງຄວາມເຊື່ອອັນແທ້ຈິງເມື່ອພວກເຮົາໄດ້ອະທິຖານຫາອົງພຣະຜູ້ເປັນເຈົ້າສຳລັບສິ່ງທີ່ພວກເຮົາ

ຕ້ອງການ. ແຕ່ແລ້ວ ພວກເຮົາອາດຈະບໍ່ເຂົ້າໃຈສິ່ງທີ່ເກີດຂຶ້ນແລະເຫດຜົນສະເໝີໄປ. ແຕ່ພວກເຮົາກໍໄວ້ວາງໃຈໃນພຣະເຈົ້າຕໍ່ໄປ. ນັ້ນຄືຄວາມເຊື່ອອັນແທ້ຈິງ.

ພວກເຮົາສາມາດສະແດງເຖິງຄວາມເຊື່ອໃນສິ່ງເລັກໆນ້ອຍໆໄດ້ໃນທາງໃດແດ່ໃນແຕ່ລະມື້? ການເຮັດສິ່ງເລັກນ້ອຍເຫຼົ່ານີ້ຊ່ອຍໃຫ້ຄວາມເຊື່ອຂອງເຮົາເຕີບໂຕແລະເຂັ້ມແຂງຂຶ້ນແນວໃດ? ສິ່ງເຫຼົ່ານີ້ຈະຊ່ອຍກຽມພວກເຮົາໃຫ້ພ້ອມສຳລັບບັນຫາທີ່ໃຫຍ່ກ່ວານີ້ແນວໃດ? ເປັນຫຍັງການທົດສອບໃນ "ສິ່ງທີ່ເລັກນ້ອຍ" ຈຶ່ງເປັນການທົດສອບທີ່ສຳຄັນທີ່ສຸດ?

## ວັນສຸກ 24 ມັງກອນ

### <u>ຂໍ້ຄິດເພີ່ມເຕີມ</u>

"ປະຊາຊົນຂອງພຣະເຈົ້າຈະຕ້ອງມີຄວາມເຊື່ອທີ່ບໍ່ລົ້ມເຫຼວ. ບຸດຂອງພຣະເຈົ້າຈະຕ້ອງສະແດງໃຫ້ທຸກໆຄົນເຫັນຢ່າງຈະແຈ້ງວ່າ ພຣະເຈົ້າຊົງເປັນພຣະເຈົ້າອົງດຽວທີ່ພວກເຂົານະມັດສະການ. ບຸດຫຼານຂອງພຣະເຈົ້າຈະຕ້ອງສະແດງໃຫ້ເຫັນວ່າພວກເຂົາຈະບໍ່ມີສ່ວນຮ່ວມໃນການນະມັດສະການພະປອມ. ບໍ່ມີກົດໝາຍຂອງມະນຸດ ຫຼື ຄຳສັ່ງອັນໃດທີ່ຈະຍິ່ງໃຫຍ່ເທົ່າກັບພຣະຄຳຂອງພຣະເຈົ້າ. ພຣະຄຳຂອງພຣະເຈົ້ານັ້ນຄົງຈະຢູ່ຕະຫຼອດໄປ. ປະຊາຊົນທີ່ຊື່ສັດຂອງພຣະເຈົ້າຈະເຊື່ອຟັງກົດບັນຍັດຂອງພຣະອົງ ເຖິງແມ່ນວ່າຄົນອື່ນຈະຈັບເຂົາໄວ້ໃນຄຸກ ຫຼື ພະຍາຍາມຂ້າພວກເຂົາ." (ທ່ານນາງເອເລັນຈີໄວທ໌)

### <u>ຄຳຖາມຄົ້ນຄວ້າ</u>

1. ອ່ານ 1ເປໂຕ 1:3-9. ເປັນຫຍັງພຣະເຈົ້າຈຶ່ງຊ່ອຍບາງຄົນໃຫ້ອອກຈາກບັນຫາແຕ່ກັບບໍ່ຊ່ອຍບາງຄົນ? ພວກເຮົາຈະສາມາດຕອບຄຳຖາມນີ້ໄດ້ແທ້ຫຼືບໍ່? ເປັນຫຍັງພວກເຮົາຈຶ່ງຕ້ອງສືບຕໍ່ໄວ້ວາງໃຈໃນຄວາມຮັກຂອງພຣະເຈົ້າ ເຖິງແມ່ນວ່າພຣະອົງຈະບໍ່ເຮັດການອັດສະຈັນເພື່ອຊ່ອຍເຮົາ?

2. ສົມມຸດວ່າ ເລື່ອງເຕົາຮ້ອນທີ່ເຜົາໄໝ້ນີ້ມີຈຸດຈົບແບບອື່ນເດ? ຈະເປັນແນວໃດຖ້າຫາກຊາຍໜຸ່ມສາມຄົນນີ້ຕາຍໃນຕອນຈົບ? ພວກເຮົາຍັງຈະໄດ້ຮັບບົດຮຽນອັນໃດຈາກເລື່ອງນີ້?

3. ໃຫ້ທ່ານຄຶດເຖິງຄຳຖາມທີ່ສຳຄັນທີ່ສຸດທີ່ຈະຕ້ອງຖາມໃນຍຸກສຸດທ້າຍ: ພວກເຮົາຈະນະມັດສະການຜູ້ໃດ? ຄຳຕອບຕໍ່ຄຳຖາມນີ້ກໍສະແດງເຖິງອັນໃດກ່ຽວກັບວັນສະບາໂຕ? ວັນສະບາໂຕນັ້ນສຳຄັນຫຼາຍຊ່ຳໃດ?

4. ໃຫ້ທ່ານອ່ານຄຳເວົ້າຂອງພຣະເຢຊູໃນ ລູກາ 16:10. ຄຳເວົ້າຂອງພຣະເຢຊູນັ້ນຊ່ອຍພວກເຮົາໃຫ້ເຂົ້າໃຈວ່າ ພວກເຮົາສາມາດມີຊີວິດໄດ້ດ້ວຍຄວາມເຊື່ອແນວໃດ?

5. ເນບູກາດເນັດຊາກ່າວກັບໝູ່ຂອງດານີເອນວ່າ "ຈະມີພຣະອົງໃດຊ່ວຍພວກເຈົ້າໃຫ້ພົ້ນໄດ້ຊັ້ນບໍ?" ຖ້າເປັນທ່ານ ທ່ານຈະຕອບກະສັດວ່າແນວໃດ?

# ບົດທີ 5

# ຈາກຄວາມອວດອົ່ງທະນົງຕົວໄປສູ່ຈິດໃຈທີ່ປາສະຈາກຄວາມອວດອົ່ງ

**(25-31 ມັງກອນ 2019)**

**ບ່າຍວັນສະບາໂຕ** **25 ມັງກອນ**

**<u>ອ່ານສຳລັບບົດຮຽນອາທິດນີ້</u>**

**ດານີເອນ 4:1-33; ສຸພາສິດ 14:31; 2 ກະສັດ 20:2-5; ດານີເອນ 4:34-37; ຟີລິບປອຍ 2:1-11.**

**ຂໍ້ຄວນຈໍາ:** *" 'ພຣະເຈົ້າໄດ້ສຳແດງໃຫ້ພວກເຮົາເຫັນສິ່ງທີ່ຍິ່ງໃຫຍ່ແລະປະຫຼາດທີ່ສຸດ. ການອັດສະຈັນທີ່ພຣະອົງໄດ້ກະທຳນັ້ນໃຫຍ່ຍິ່ງ ພຣະອົງຈະເປັນກະສັດປົກຄອງຕະຫຼອດໄປ.' " (ດານີເອນ 4:3)*

ຄວາມອວດອົ່ງຄືບາບຢ່າງທຳອິດ. ພຣະຄຳພີບອກວ່າ ຄວາມອວດອົ່ງທະນົງຕົວນັ້ນໄດ້ເກີດຂຶ້ນຢູ່ໃສ? ຢູ່ໃນໃຈຂອງລູຊີເຟີ (ເອເຊກຽນ 28:17)

ຄວາມອວດອົ່ງໄດ້ເຮັດໃຫ້ລູຊີເຟີໄປສູ່ຄວາມບາບ. ແລ້ວພຣະເຈົ້າກໍໂຍນລູຊີເຟີອອກຈາກສະຫວັນ. ໃນເວລານີ້ ລູຊີເຟີ ຫຼື ຊາຕານກໍໄດ້ເຮັດໃຫ້ຄວາມອວດອົ່ງທະນົງໂຕຢູ່ໃນມະນຸດ. ມານໄດ້ເຮັດໃຫ້ມະນຸດຕໍ່ຕ້ານພຣະເຈົ້າ. ໂດຍທາງນີ້ ລູຊີເຟີໄດ້ທຳລາຍມະນຸດ. ພວກເຮົາທັງໝົດຕ່າງເປັນຄົນບາບ. ພວກເຮົາກໍເພິ່ງພາພຣະເຈົ້າສຳລັບຊີວິດ. ຂອງປະທານຂອງເຮົາທັງໝົດມາຈາກພຣະເຈົ້າ. ດັ່ງນັ້ນ ຈິ່ງໃຫ້ພວກເຮົາເຮັດສິ່ງດີໆຕ່າງໆທີ່ເຮົາເຮັດກັບຂອງປະທານເຫຼົ່ານີ້ທີ່ມາຈາກພຣະເຈົ້າ. ນັ້ນເປັນເຫດຜົນທີ່ພວກເຮົາບໍ່ຄວນເຕັມໄປດ້ວຍຄວາມອວດອົ່ງ. ພວກເຮົາບໍ່ຄວນອວດອ້າງໃນສິ່ງໃດກໍຕາມທີ່ພວກເຮົາເຮັດ.

ມັນໄດ້ໃຊ້ເວລາອັນຍາວນານສຳລັບເນບູກາດເນັດຊາທີ່ຈະເຂົ້າໃຈຄວາມຈິງເລື່ອງນີ້. ທ່ານຈະຈື່ວ່າ ກະສັດໄດ້ຫຼຽວເຫັນຊາຍຄົນທີ່4ໃນເຕົາໄຟ. ຊາຍຄົນທີ່ສີ່ນັ້ນແມ່ນພຣະເຢຊູ. ແຕ່ວ່າສິ່ງນີ້ໄດ້ປ່ຽນແປງເນບູກາດເນັດຊາບໍ? ບໍ່ເລີຍ! ດັ່ງນັ້ນພຣະເຈົ້າຈຶ່ງໄດ້ຖອນອານາຈັກຂອງເພິ່ນອອກ. ພຣະເຈົ້າໄດ້ເຮັດໃຫ້ກະສັດນັ້ນອາໄສຢູ່ກັບສັດຕ່າງໆ. ແລ້ວກະສັດຈຶ່ງມີການປ່ຽນແປງ.

## ວັນອາທິດ 26 ມັງກອນ

**"ເບິ່ງດູນະຄອນບາບີໂລນນີ້ເປັນເມືອງໃຫຍ່ຫຼາຍ ເຮົາໄດ້ສ້າງໃຫ້ເປັນເມືອງຫຼວງຂອງເຮົາ" (ດານີເອນ 4:1-33)**

**ໃຫ້ເຮົາມາອ່ານກ່ຽວກັບກະສັດເນບູກາດເນັດຊາໃນດານີເອນ 4:1-33. ແມ່ນຫຍັງໄດ້ເກີດຂຶ້ນກັບກະສັດ? ເປັນຫຍັງມັນຈຶ່ງເກີດຂຶ້ນ?**

ພຣະເຈົ້າຊົງໃຫ້ຄວາມຝັນເລື່ອງທີສອງໃຫ້ແກ່ກະສັດເນບູກາດເນັດຊາ. ແລະເທື່ອນີ້ ກະສັດກໍຈື່ຄວາມຝັນຂອງຕົນເອງໄດ້. ດັ່ງນັ້ນ ກະສັດຈຶ່ງຂໍໃຫ້ດານີເອນນັ້ນໃຫ້ຄຳອະທິບາຍ. ໃນຄວາມຝັນນີ້ ກະສັດເຫັນຕົ້ນໄມ້ໃຫຍ່ຕົ້ນໜຶ່ງ. ຕົ້ນໄມ້ນີ້ຂຶ້ນໄປເຖິງສະຫວັນ. ຄົນຜູ້ໜຶ່ງໃນສະຫວັນກໍໄດ້ສັ່ງໃຫ້ທູດສະຫວັນຕັດຕົ້ນໄມນີ້ລົງຈົນເຫຼືອແຕ່ກົກ ແລະຮາກຂອງມັນທີ່ຢູ່ໃນດິນ. ແລ້ວຄົນໃນຄວາມຝັນກໍກ່າວສິ່ງໜຶ່ງທີ່ເຮັດໃຫ້ເນບູກາດເນັດຊາຢ້ານ. ລາວເວົ້າວ່າ "ພາຍໃນເຈັດປີລາວຈະບໍ່ມີຈິດໃຈມະນຸດເຫຼືອຢູ່ ແຕ່ຈະມີຈິດໃຈສັດ." (ດານີເອນ 4:16) ດານີເອນກໍເຂົ້າໃຈຄວາມຝັນນີ້. ເພິ່ນກໍປາດຖະໜາຢາກໃຫ້ຄວາມຝັນນີ້ເວົ້າກ່ຽວກັບສັດຕູຂອງກະສັດ. ແຕ່ດານີເອນກໍຊື່ສັດຕໍ່ພຣະເຈົ້າ. ເພິ່ນໄດ້ກ່າວຄວາມຈິງກັບກະສັດ. ດານີເອນຈຶ່ງບອກວ່າຄວາມຝັນນີ້ກໍກ່າວກ່ຽວກັບກະສັດນັ້ນເອງ.

ພຣະຄຳພີໄດ້ໃຊ້ຮູບພາບຂອງຕົ້ນໄມ້ເພື່ອສະແດງໃຫ້ເຫັນກະສັດ, ປະເທດ ແລະ ອານາຈັກຕ່າງໆ (ເອເຊກຽນ ບົດທີ 17; ເອເຊກຽນ ບົດທີ 31; ໂຮເຊອາ ບົດທີ 14; ເສກາລິຢາ 11:1,2; ລູກາ 23:31). ດັ່ງນັ້ນ ຕົ້ນໄມ້ໃຫຍ່ຕົ້ນນັ້ນກໍເປັນພາບພັນລະນາສຳລັບກະສັດເນບູກາດເນັດຊາ. ມັນສະແດງເຖິງຈິດໃຈຂອງເພິ່ນທີ່

ເຕັມໄປດ້ວຍຄວາມອວດອົ່ງທະນົງຕົວ. ພຣະເຈົ້າປະທານອານາຈັກແລະອຳນາດໃຫ້ແກ່ກະສັດເນບູກາດເນັດຊາ. ແຕ່ກະສັດກໍລົ້ມເຫຼວທີ່ຈະຖວາຍກຽດແດ່ພຣະເຈົ້າ.

**ກະສັດໄດ້ກ່າວສິ່ງໃດໃນພຣະທຳດານີເອນ 4:30? ມັນສະແດງໃຫ້ເຫັນວ່າກະສັດບໍ່ເຂົ້າໃຈຄຳຕັກເຕືອນຂອງພຣະເຈົ້າແນວໃດ?**

**ວັນຈັນ 27 ມັງກອນ**

## ດານີເອນຕັກເຕືອນກະສັດ (ດານີເອນ 4:27)

**ອ່ານຄຳເຕືອນຂອງດານີເອນທີ່ໃຫ້ກັບກະສັດໃນ ດານີເອນ 4:27. ດານີເອນໄດ້ເຕືອນກະສັດກ່ຽວກັບເລື່ອງໃດ? ດານີເອນບອກກະສັດໃຫ້ເຮັດສິ່ງໃດແລະເປັນຫຍັງຈຶ່ງຕ້ອງເຮັດສິ່ງນັ້ນ? (ອ່ານສຸພາສິດ 14:31)**

ດານີເອນອະທິບາຍຄວາມຝັນໃຫ້ກັບກະສັດຟັງ. ແລ້ວດານີເອນກໍໃຫ້ຄຳແນະນຳແກ່ກະສັດບາງຢ່າງ. ດານີເອນບອກກະສັດວ່າ ຈະຕ້ອງເຮັດສິ່ງໃດເພື່ອວ່າສິ່ງຮ້າຍໆເຫຼົ່ານີ້ຈະບໍ່ໄດ້ເກີດຂຶ້ນ. "ເພາະສະນັ້ນ ພະຣາຊາເອີຍ ຈົ່ງເຮັດຕາມຄຳແນະນຳຂອງຂ້ານ້ອຍເຖີດ. ຈົ່ງເລີກເຮັດບາບສາ ແລະ ເຮັດໃນສິ່ງທີ່ຖືກຕ້ອງ; ຈົ່ງເມດຕາສົງສານຄົນຍາກຈົນ. ແລ້ວທ່ານກໍຈະຈະເລີນຮຸ່ງເຮືອງສືບຕໍ່ໄປ." (ດານີເອນ 4:27).

ຂ່າວສານຂອງດານີເອນທີ່ໃຫ້ກະສັດກໍບໍ່ແມ່ນສິ່ງທີ່ແປກໃໝ່. ຜູ້ປະກາດຂ່າວໃນສະໄໝພຣະຄຳພີເດີມ ຫຼື ຜູ້ສົ່ງຂ່າວພິເສດ ກໍມັກຈະເຕືອນປະຊາຊົນຂອງພຣະເຈົ້າກ່ຽວກັບການໃຫ້ຄວາມເມດຕາແກ່ຄົນທຸກຍາກ. ຜູ້ປະກາດພຣະຄຳກໍບອກປະຊາຊົນຂອງພຣະເຈົ້າໃຫ້ມີຄວາມຍຸດຕິທຳ. ພວກເພິ່ນໄດ້ເຕືອນປະຊາຊົນຂອງພຣະເຈົ້າບໍ່ໃຫ້ທຳຮ້າຍ ຜູ້ທຸກຍາກ ຫຼື ໃຊ້ຄົນທຸກຍາກ ເພື່ອທີ່ຈະເຮັດໃຫ້ຕົນຮັ່ງມີ. ເຫດຜົນໜຶ່ງທີ່ເຮັດໃຫ້ພຣະເຈົ້າຕ້ອງລົງໂທດກະສັດເນບູກາດເນັດຊາກໍຄື ເພາະວ່າ ກະສັດນັ້ນບໍ່ໄດ້ສົນໃຈຄົນທຸກຍາກ. ເມື່ອພວກເຮົາບໍ່ສົນໃຈຄົນທີ່ທຸກຍາກ ພວກເຮົາກໍເຮັດໃຫ້ພຣະເຈົ້າເຈັບປວດ. ດັ່ງນັ້ນ ພວກເຮົາຈະຕ້ອງດູແລເບິ່ງແຍງຄົນທີ່ທຸກຍາກ

ແລະ ຈາດເຂັນ. ແລ້ວພວກເຮົາກໍສະແດງໃຫ້ປະຊາຊົນເຫັນວ່າ ພຣະເຈົ້າຊົງເປັນເຈົ້າຂອງທຸກສິ່ງທຸກຢ່າງ. ພວກເຮົາກໍສະແດງໃຫ້ເຫັນເຊັ່ນດຽວກັນວ່າ ພວກເຮົາບໍ່ໄດ້ເປັນເຈົ້າຂອງສິ່ງໃດ. ພວກເຮົາເປັນພຽງຜູ້ຈັດການສຳລັບຂອງປະທານທີ່ພຣະເຈົ້າໃຫ້ແກ່ເຮົາ. ພວກເຮົາຈະຕ້ອງຊ່ອຍຄົນອື່ນດ້ວຍຂອງປະທານທີ່ພຣະເຈົ້າປະທານໃຫ້ແກ່ພວກເຮົາ. ແລ້ວພວກເຮົາຈະໃຫ້ກຽດພຣະເຈົ້າ ແລະສະແດງໃຫ້ເຫັນວ່າ ພຣະອົງຊົງເປັນພຣະຜູ້ເປັນເຈົ້າຂອງເຮົາ.

**ວັນອັງຄານ 28 ມັງກອນ**

## <u>ພຣະເຈົ້າອົງພຣະເຈົ້າສູງສຸດ ກໍຄວບຄຸມທຸກສິ່ງທຸກຢ່າງ (2 ກະສັດ 20:2-5)</u>

**ອ່ານ 2 ກະສັດ 20:2-5; ໂຢນາ 3:10; ແລະ ເຢເລມີຢາ 18:7,8. ຂໍ້ພຣະຄຳພີເຫຼົ່ານີ້ບອກຫຍັງພວກເຮົາກ່ຽວກັບໂອກາດທີ່ກະສັດຈະໜີການຖືກລົງໂທດ?**

ມັນໜ້າເສົ້າທີ່ກະສັດເນບູກາດເນັດຊາຈະຕ້ອງໄດ້ຮັບບົດຮຽນແບບຍາກໆ. ໃນຖານະທີ່ເປັນກະສັດ ເນບູກາດເນັດຊາ ກໍບໍ່ຍອມທີ່ຈະຄິດວ່າທຸກສິ່ງທຸກຢ່າງທີ່ເພິ່ນມີນັ້ນມາຈາກພຣະເຈົ້າ. ດັ່ງນັ້ນ ພຣະເຈົ້າຈຶ່ງໄດ້ສົ່ງເນບູກາດເນັດຊາໄປອາໄສກັບຝູງສັດໃນທົ່ງ. ພຣະເຈົ້າຊົງໃຫ້ໂອກາດກັບກະສັດເພື່ອຮຽນຮູ້ວ່າເພິ່ນໄດ້ຕິດໜີ້ສິ່ງໃດກັບພຣະເຈົ້າ. ບົດຮຽນອັນສຳຄັນທີ່ສຸດທີ່ພຣະເຈົ້າຕ້ອງການສອນກະສັດນັ້ນກໍຄື "ພຣະເຈົ້າເປັນຜູ້ປົກຄອງໂລກນີ້ທັງໝົດ" (ດານີເອນ 4:26). ພຣະອົງຊົງຕ້ອງການໃຫ້ພວກເຮົາຮຽນຮູ້ບົດຮຽນເລື່ອງນີ້ເຊັ່ນດຽວກັນຄື "ນີ້ແຫຼະຄືຄຳຕັດສິນຂອງຝູງເທວະດາຜູ້ອາລັກຂານັ້ນ ສະນັ້ນຈຶ່ງໃຫ້ຄົນທັງປວງທຸກທີ່ທຸກບ່ອນຮູ້ວ່າ ພຣະເຈົ້າອົງສູງສຸດມີອຳນາດເໜືອອານາຈັກຂອງມະນຸດ ແລະ ໃຫ້ຮູ້ວ່າພຣະອົງສາມາດມອບອານາຈັກເຫຼົ່ານີ້ໃຫ້ຜູ້ໃດຜູ້ໜຶ່ງຕາມທີ່ພຣະອົງເລືອກເອົາກໍໄດ້ ເຖິງແມ່ນວ່າເປັນຜູ້ຕ່ຳຕ້ອຍທີ່ສຸດກໍຕາມ." (ດານີເອນ 4:17)

ເງີຍໜ້າຂຶ້ນສູ່ທ້ອງຟ້າ (ສະຫວັນ) (ດານີເອນ 4:34-37)

**ໃຫ້ທ່ານອ່ານເພີ່ມເຕີມກ່ຽວກັບກະສັດເນບູກາດເນັດຊາໃນພຣະທຳ ດານີເອນ 4:34-37. ສິ່ງຕ່າງໆໄດ້ປ່ຽນແປງແນວໃດ ແລະ ຍ້ອນອັນໃດສຳລັບກະສັດ?**

ພຣະເຈົ້າຊົງອະນຸຍາດໃຫ້ກະສັດເນບູກາດເນັດຊາມີການເຈັບປ່ວຍທີ່ແປກປະຫຼາດ. ຫຼັງຈາກເວລາ 7 ປີ ຜ່ານໄປ ພຣະເຈົ້າກໍເຮັດໃຫ້ຈິດໃຈຂອງກະສັດເປັນຈິດໃຈໃໝ່. ແມ່ນຫຍັງໄດ້ປ່ຽນແປງທຸກສິ່ງທຸກຢ່າງນີ້? ສິ່ງຕ່າງໆໄດ້ປ່ຽນເມື່ອກະສັດເງີຍໜ້າຂຶ້ນເບິ່ງທ້ອງຟ້າສະຫວັນ. (ດານີເອນ 4:34)

"ຕະຫຼອດເວລາເຈັດປີ ການປະພຶດຂອງເນບູກາດເນັດຊາກໍເຮັດໃຫ້ປະຊາຊົນປະຫຼາດໃຈ. ເປັນເວລາເຈັດປີທີ່ກະສັດໄດ້ຮັບຄວາມອັບອາຍຕໍ່ໜ້າທຸກຄົນໃນໂລກນີ້. ແລ້ວພຣະເຈົ້າກໍປະທານຈິດໃຈທີ່ປົກກະຕິໃຫ້ກັບເພິ່ນ. ກະສັດໄດ້ເງີຍໜ້າຂຶ້ນສູ່ຟ້າສະຫວັນ. ຫົວໃຈຂອງກະສັດນັ້ນກໍບໍ່ເຕັມໄປດ້ວຍຄວາມອວດອົ່ງອີກຕໍ່ໄປ. ເພິ່ນໄດ້ເຂົ້າໃຈເວລານີ້ວ່າ ພຣະເຈົ້າໄດ້ຊົງລົງໂທດເພິ່ນ. ດັ່ງນັ້ນ ກະສັດຈຶ່ງໄດ້ມີການປະກາດຕໍ່ໜ້າປະຊາຊົນ. ເພິ່ນໄດ້ກ່າວວ່າ ພຣະອົງຊົງມີຄວາມຜິດບາບ. ເພິ່ນບອກວ່າ ພຣະເຈົ້າໄດ້ສຳແດງໃຫ້ເພິ່ນເຫັນວ່າພຣະອົງໄດ້ຊົງເມດຕາເພິ່ນຫຼາຍຊໍ່າໃດເມື່ອໄດ້ປະທານຈິດທີ່ດີໃຫ້ເພິ່ນຄືນ." (ປື້ມທ່ານນາງເອເລັນຈີໄວທ໌)

ແມ່ນແລ້ວ ການປ່ຽນແປງທີ່ໃຫຍ່ຫຼວງສາມາດເກີດຂຶ້ນໄດ້ໃນຊີວິດຂອງເຮົາເມື່ອພວກເຮົາຫຼຽວເບິ່ງທ້ອງຟ້າສະຫວັນ. ພຣະເຈົ້າຊົງປະທານຈິດທີ່ດີຄືນໃຫ້ກະສັດ. ແລ້ວກະສັດສະແດງໃຫ້ທຸກໆຄົນເຫັນວ່າ ເພິ່ນໄດ້ຮັບບົດຮຽນຂອງເພິ່ນແລ້ວ.

**ພຣະເຈົ້າໄດ້ຊ່ອຍໃຫ້ທ່ານຮຽນຮູ້ວ່າ ທ່ານຈະຕ້ອງການພຣະອົງຫຼາຍຊໍ່າໃດດ້ວຍວິທີການໃດແດ່?**

ຫົວໃຈທີ່ເຕັມໄປດ້ວຍການຂອບພຣະຄຸນ (ດານີເອນ 4:35)

**ກະສັດເນບູກາດເນັດຊາກໍຮູ້ສຶກເສຍໃຈສໍາລັບຄວາມບາບຂອງເພິ່ນ. ແລ້ວເພິ່ນກໍມອບຫົວໃຈຂອງເພິ່ນໃຫ້ກັບພຣະເຈົ້າ. ເພິ່ນໄດ້ປະກາດວ່າ: "ພຣະອົງຖືວ່າຄົນໃນໂລກນີ້ບໍ່ມີຫຍັງໝົດ ຕ່າງກໍບໍ່ມີຄຸນຄ່າ ບໍ່ມີຫຍັງທັງນັ້ນ" (ດານີເອນ 4:35) ເພິ່ນໄດ້ໝາຍຄວາມວ່າແນວໃດ?**

ພວກເຮົາຮູ້ໄດ້ແນວໃດວ່າກະສັດເນບູກາດເນັດຊານັ້ນໄດ້ຍອມຮັບເອົາພຣະເຈົ້າທີ່ແທ້ຈິງ? ຫຼັກຖານອັນສໍາຄັນທີ່ສຸດກໍຄືວ່າ ເພິ່ນໄດ້ຂຽນຈົດໝາຍສະບັບໜຶ່ງທີ່ເປັນສ່ວນໜຶ່ງຂອງພຣະທໍາດານີເອນບົດທີ 4. ກະສັດໄດ້ສົ່ງຈົດໝາຍສະບັບນີ້ໄປທົ່ວອານາຈັກຂອງເພິ່ນ. ໃນຈົດໝາຍນີ້ ກະສັດກໍໄດ້ກ່າວເຖິງຄວາມອວດອົ່ງຂອງເພິ່ນເອງ. ເພິ່ນໄດ້ເວົ້າເຖິງການເສຍຈິດ ແລະ ການປະພຶດຕົນຄືກັບສັດໂຕໜຶ່ງ. ແລ້ວເພິ່ນກໍບອກວ່າ ເພິ່ນຮູ້ສຶກຂອບຄຸນພຣະເຈົ້າ ພຣະອົງໄດ້ຊ່ອຍເພິ່ນໃຫ້ພົ້ນຈາກພະຍາດຂອງເພິ່ນ. ກະສັດໃນສະໄໝຂອງພຣະຄໍາພີເດີມກໍບໍ່ຄ່ອຍມັກທີ່ຈະຂຽນເລື່ອງອັນບໍ່ດີຂອງຕົນເອງ. ການບັນທຶກຂອງກະສັດໂດຍສ່ວນຫຼາຍໃນສະໄໝພຣະຄໍາພີນັ້ນ ກໍຈະເປັນຄໍາຍ້ອງຍໍ ແລະຄໍາສັນລະເສີນຕໍ່ກະສັດທັງຫຼາຍ. ດັ່ງນັ້ນຈົດໝາຍຂອງກະສັດເນບູກາດເນັດຊາກໍເປັນເລື່ອງທີ່ໜ້າປະຫຼາດໃຈຫຼາຍ. ມັນໄດ້ສະແດງໃຫ້ພວກເຮົາເຫັນວ່າ ກະສັດໄດ້ມອບຫົວໃຈຂອງເພິ່ນໃຫ້ກັບພຣະເຈົ້າ. ຈົດໝາຍຂອງກະສັດນັ້ນກໍຄືຄໍາພະຍານເລື່ອງນີ້. ຈົດໝາຍນີ້ບອກທຸກໆຄົນໃນໂລກນີ້ກ່ຽວກັບປະສົບການຂອງເພິ່ນກັບພຣະເຈົ້າ. ແລະຈົດໝາຍສະບັບນີ້ກໍກ່າວເຖິງອໍານາດຂອງພຣະເຈົ້າ ແລະ ການປົກຄອງທຸກສິ່ງທຸກຢ່າງຂອງພຣະອົງ. ກະສັດບໍ່ສາມາດທີ່ຈະຢູ່ງຽບໆໄດ້ໂດຍບໍ່ກ່າວເຖິງສິ່ງທີ່ເພິ່ນໄດ້ປະສົບແລະຮຽນຮູ້ກ່ຽວກັບພຣະເຈົ້າ. ຈົດໝາຍນີ້ເປັນຄໍາອະທິຖານຕໍ່ພຣະເຈົ້າ. ກະສັດໄດ້ສັນລະເສີນພຣະເຈົ້າເຊັ່ນກັນ (ດານີເອນ 4:34-37).

ກະສັດໄດ້ມີຈິດໃຈໃໝ່. ຊີວິດຂອງເພິ່ນກໍໄດ້ຮັບການປ່ຽນແປງ. ແນ່ນອນວ່າພຣະເຈົ້າກໍສືບຕໍ່ປ່ຽນແປງຊີວິດຂອງເຮົາໃນທຸກມື້ນີ້. ຄົນບາບອາດຈະມີຄວາມອວດອົ່ງ ແຕ່ພຣະເຈົ້າກໍມີຄວາມເມດຕາແລະອຳນາດທີ່ຈະປ່ຽນຄົນບາບທີ່ທະນົງຕົວເຫຼົ່ານີ້ໃຫ້ເປັນບຸດຂອງພຣະເຈົ້າແຫ່ງຟ້າສະຫວັນ.

**ອ່ານ ຟີລິບປອຍ 2:1-11. ຂໍ້ພຣະຄຳພີເຫຼົ່ານີ້ສອນຫຍັງພວກເຮົາກ່ຽວກັບເຫດຜົນທີ່ພວກເຮົາບໍ່ຄວນຮູ້ສຶກອວດອົ່ງໃນຈິດໃຈຂອງເຮົາ?**

## ວັນສຸກ 31 ມັງກອນ

## <u>ຂໍ້ຄິດເພີ່ມເຕີມ</u>

"ແຜນການຂອງພຣະເຈົ້າກໍແມ່ນເພື່ອໃຫ້ອານາຈັກທີ່ຍິ່ງໃຫຍ່ທີ່ສຸດໃນໂລກສັນລະເສີນພຣະອົງ. ແລ້ວອານາຈັກນັ້ນ ກໍໄດ້ຍ້ອງຍໍພຣະອົງ. ກະສັດໄດ້ປະກາດຕໍ່ໜ້າຊຸມຊົນເຖິງຄວາມເມດຕາຂອງພຣະເຈົ້າ. ກະສັດບອກວ່າ ພຣະເຈົ້ານັ້ນຊົງແສນດີ. ພຣະອົງຊົງມີອຳນາດໃນສະຫວັນແລະເທິງແຜ່ນດິນໂລກ. ການກະທຳນີ້ແມ່ນສິ່ງສຸດທ້າຍທີ່ຖືກບັນທຶກໄວ້ກ່ຽວກັບກະສັດໃນພຣະຄຳພີ" (ປຶ້ມທ່ານນາງເອເລັນຈີໄວທ໌)

## ຄຳຖາມຄົ້ນຄວ້າ

1. "ຄວາມອວດອົ່ງທະນົງຕົວກໍເປັນສາເຫດຂອງການປະພຶດຜິດທຸກຢ່າງ. ຄວາມອວດອົ່ງຄື ຄວາມບາບຕໍ່ສູ້ພຣະເຈົ້າ. ທ່ານຄິດວ່າຄຳເວົ້ານີ້ຮຸນແຮງເກີນໄປບໍ? ຖ້າຫາກວ່າແມ່ນ ໃຫ້ທ່ານຄິດກ່ຽວກັບສິ່ງນີ້ເບິ່ງ... ທ່ານມີຄວາມຍິ່ງຜະຫຍອງ ຫຼື ອວດອົ່ງໃນໃຈທ່ານຫຼາຍເທົ່າໃດ ທ່ານກໍຍິ່ງກຽດຊັງຄວາມຍິ່ງໃນໂຕຂອງຄົນອື່ນຫຼາຍຂຶ້ນເທົ່ານັ້ນ. ທ່ານຢາກຮູ້ບໍວ່າ ທ່ານມີຄວາມອວດອົ່ງ ຫຼື ຄວາມຍິ່ງໃນໃຈຫຼາຍຊ່ຳໃດ? ວິທີການທີ່ງ່າຍທີ່ສຸດກໍຄື ການຖາມຕົນເອງວ່າ: "ຂ້ອຍມີຄວາມກຽດຊັງຫຼາຍຊ່ຳໃດເມື່ອຄົນອື່ນບໍ່ປະພຶດດີກັບຂ້ອຍ? ຂ້ອຍໃຈຮ້າຍຫຼາຍຊ່ຳໃດ ເມື່ອຄົນອື່ນບໍ່ຍອມໃຫ້ຄວາມສົນໃຈຂ້ອຍ? ຂ້ອຍໃຈຮ້າຍຫຼາຍຊ່ຳໃດເມື່ອຄົນອື່ນພະຍາຍາມສັ່ງ

ນັ້ນສັ່ງນີ້ຂ້ອຍ? ຫຼື ເຮັດຄືກັບວ່າ ພວກເຂົາດີກວ່າຂ້ອຍ? ຫຼື ເມື່ອພວກເຂົາພະຍາຍາມສະແດງວ່າຕົນເອງດີ?" ສິ່ງທີ່ຂ້ອຍຕ້ອງການເວົ້າກໍຄື ຄວາມຍິ່ງຂອງຄົນໆໜຶ່ງກໍຕໍ່ສູ້ກັບຄວາມຍິ່ງຂອງຄົນອື່ນໆ. ນັ້ນກໍເປັນເພາະວ່າ ຂ້ອຍຕ້ອງການຈະເປັນຜູ້ທີ່ສຳຄັນທີ່ສຸດໃນງານລ້ຽງ ຈຶ່ງຮູ້ສຶກໃຈຮ້າຍເມື່ອຄົນອື່ນໄດ້ຮັບຄວາມສົນໃຈຫຼາຍກວ່າຕົນເອງ." (ຈາກບົດຄວາມຂອງທ່ານ (Lewis) ລູວິສ). ທ່ານລູວິສ ກຳລັງເວົ້າສິ່ງໃດໃນນີ້ເພື່ອຊ່ວຍໃຫ້ທ່ານເຫັນວ່າ ມີຄວາມຍິ່ງ ຫຼື ອວດອົ່ງໃນໃຈຂອງທ່ານຫຼາຍຊ່ຳໃດ?

2. ພຣະທຳດານິເອນ ບົດທີ3ແລະ4 ກໍສອນເຮົາກ່ຽວກັບອຳນາດຂອງພຣະເຈົ້າ. ພຣະເຈົ້າຊົງປົກຄອງທຸກສິ່ງທຸກຢ່າງໃນສະຫວັນແລະເທິງໂລກນີ້. ເປັນຫຍັງແນວຄິດນີ້ຈຶ່ງສຳຄັນຫຼາຍທີ່ຈະຕ້ອງເຂົ້າໃຈ? ວັນສະບາໂຕໃຫ້ພວກເຮົາເຂົ້າໃຈຄວາມຈິງນີ້ແນວໃດ?

# ບົດທີ 6

## ກະສັດທີ່ຖືກທຳລາຍ ຍ້ອນຄວາມອວດອົ່ງຂອງຕົນ

## (1-7 ກຸມພາ 2019)

**ບ່າຍວັນສະບາໂຕ** **1 ກຸມພາ**

**<u>ອ່ານສຳລັບບົດຮຽນອາທິດນີ້</u>**

**ດານີເອນ 5:1-31; ເພງສັນລະເສີນ 96:5; ໂກໂລຊາຍ 1:15-17; ໂລມ 1:16-32; ພະນິມິດ 14:8.**

**ຂໍ້ຄວນຈຳ:** *"ພຣະອົງບັງຄັບເວລາແລະລະດູການ ພຣະອົງແຕ່ງຕັ້ງກະສັດແລະປົດກະສັດລົງ; ແມ່ນພຣະອົງທີ່ເປັນຜູ້ໂຜດປະທານປັນຍາແລະຄວາມເຂົ້າໃຈໃຫ້ແກ່ມະນຸດ." (ດານີເອນ 2:21)*

ໃນພຣະທຳດານີເອນ ບົດທີ 5 ພວກເຮົາເຫັນຕົວຢ່າງຂອງຄວາມອວດອົ່ງຂອງມະນຸດ. ເລື່ອງນີ້ກໍຈົບຢ່າງໜ້າປະຫຼາດໃຈແລະຢ່າງບໍ່ສວຍງາມ. ພວກເຮົາເຫັນວ່າ ກະສັດເນບູກາດເນັດຊານັ້ນໄດ້ໃຊ້ເວລາດົນໃນການຮຽນຮູ້ບົດຮຽນນີ້. ແຕ່ໃນທີ່ສຸດ ເພິ່ນກໍໄດ້ຮັບບົດຮຽນນີ້. ແຕ່ເປັນເລື່ອງໜ້າເສົ້າທີ່ຫຼານຊາຍຂອງເພິ່ນ ກໍຄືເບັນຊັດຊາເຣນັ້ນບໍ່ໄດ້ເຂົ້າໃຈບົດຮຽນນີ້. ກະສັດເບັນຊັດຊາເຣໄດ້ນຳເອົາຈອກຄຳແລະເງິນອອກຈາກພຣະວິຫານຂອງພຣະເຈົ້າ. ກະສັດໄດ້ນຳຈອກເຫຼົ່ານັ້ນມາດື່ມເຫຼົ້າແວງໃນງານລ້ຽງສ້າງສັນ. ເພິ່ນໄດ້ເອົາຈອກເຫຼົ່ານີ້ໃຫ້ແຂກຂອງເພິ່ນໃຊ້ເພື່ອດື່ມເຫຼົ້າ. ສິ່ງທີ່ກະສັດເບັນຊັດຊາເຣເຮັດນັ້ນກໍຜິດຢ່າງຫຼວງຫຼາຍ. ມັນຄືການໂຈມຕີພຣະເຈົ້າໂດຍກົງ. ກະສັດເບັນຊັດຊາເຣກໍປະພຶດດັ່ງອຳນາດຂອງເຂົານ້ອຍ (ອ່ານພຣະທຳ ດານີເອນ ບົດທີ8). ເຂົານ້ອຍນັ້ນໄດ້ໂຈມຕີພຣະວິຫານຂອງພຣະເຈົ້າໃນສະຫວັນ. ດັ່ງນັ້ນ ພຣະເຈົ້າຈຶ່ງໄດ້ຖອນອານາຈັກຂອງເບັດຊັດຊາເຣ ແລະ ໃຫ້ກະ

ສັດອື່ນປົກຄອງຕໍ່ໄປ. ພຣະເຈົ້າຈະກະທຳສິ່ງດຽວກັນນີ້ຕໍ່ສັດຕູຜູ້ທີ່ທຳລາຍປະຊາຊົນຂອງພຣະອົງໃນຍຸກສຸດທ້າຍ.

## ວັນອາທິດ 2 ກຸມພາ

## ງານລ້ຽງອັນໃຫຍ່ໂຕຂອງກະສັດເບັນຊັດຊາເຣ (ດານີເອນ 5:1-4)

**ອ່ານດານີເອນ 5:1-4. ແລ້ວອ່ານດານີເອນ 1:1,2. ກະສັດເບັນຊັດຊາເຣໄດ້ເຮັດສິ່ງໃດໃນພຣະທຳດານີເອນ ບົດທີ5 ເຊິ່ງເປັນເລື່ອງທີ່ຮ້າຍແຮງ? ເພິ່ນໄດ້ສະແດງໃຫ້ເຫັນສິ່ງທີ່ຢູ່ໃນໃຈຂອງເພິ່ນແນວໃດ? ຈົ່ງປຽບທຽບການປະພຶດຂອງເບັນຊັດຊາເຣ ກັບ ການປະພຶດຂອງຜູ້ຍິງໃນພະນິມິດ 17:4-6. ມີຫຍັງຄືກັນກ່ຽວກັບເບັນຊັດຊາເຣ ແລະຜູ້ຍິງຄົນນີ້?**

ກະສັດເນບູກາດເນັດຊາໄດ້ລັກເອົາຈອກຄຳ ແລະ ຈອກເງິນຈາກພຣະວິຫານຂອງພຣະເຈົ້າໃນນະຄອນເຢລູຊາເລັມ. ແຕ່ກະສັດກໍໄດ້ຍັງໄດ້ໃຫ້ກຽດແກ່ຊັບສິນຂອງພຣະເຈົ້າ. ເພິ່ນໄດ້ເອົາຈອກເຫຼົ່ານີ້ໄປໄວ້ໃນວິຫານຂອງພະຂອງເພິ່ນ. ແຕ່ຫຼານຊາຍຂອງເພິ່ນ ຄືເບັນຊັດຊາເຣນັ້ນກໍບໍ່ໃຫ້ກຽດພຣະເຈົ້າ. ເບັນຊັດຊາເຣໄດ້ສັ່ງໃຫ້ຄົນໄປນຳຈອກເຫຼົ່ານັ້ນມາເພື່ອມາສ້າງສັນໃນງານລ້ຽງທີ່ມຶນເມົາ ແລະໃຊ້ຈອກເຫຼົ່ານີ້ເພື່ອດື່ມເຫຼົ້າອະງຸ່ນ. ແລ້ວກະສັດຜູ້ນີ້ກໍບອກແຂກຂອງເພິ່ນໃຫ້ດື່ມເຫຼົ້າອະງຸ່ນຈາກຈອກເຫຼົ່ານີ້.

ງານລ້ຽງສະຫຼອງຢ່າງມຶນເມົາຂອງເບັນຊັດຊາເຣນັ້ນກໍສະແດງໃຫ້ພວກເຮົາເຫັນວ່າ ສິ່ງໃດຈະເກີດຂຶ້ນໃນຍຸກສຸດທ້າຍ. ໃນພຣະທຳພະນິມິດ ບົດທີ 17 ພວກເຮົາເຫັນວ່າ ບາບີໂລນໃນຍຸກສຸດທ້າຍປຽບເໝືອນຜູ້ຍິງຄົນໜຶ່ງ. ຜູ້ຍິງຄົນນີ້ປະພຶດຄືກັບກະສັດເບັນຊັດຊາເຣ. ລາວຖືຈອກທີ່ເຕັມໄປດ້ວຍເຫຼົ້າອະງຸ່ນ. ລາວໄດ້ສະເໜີຈອກນີ້ໃຫ້ຄົນໃນໂລກນີ້ໄດ້ດື່ມ. ເຫຼົ້າອະງຸ່ນນັ້ນຄືພາບພັນລະນາຄຳສອນທີ່ຜິດ ແລະ ການນະມັດສະການອັນຈອມປອມ. ເຫຼົ້າອະງຸ່ນກໍເຮັດໃຫ້ປະຊາຊົນຂອງພຣະອົງເຮັດຜິດບາບ (ພະນິມິດ 17:4-6). ຜູ້ຍິງຄົນນີ້ກໍປະພຶດຄືກັບວ່າ ລາວບໍ່ໄດ້ສົນໃຈວ່າພຣະເຈົ້າຈະຕັດສິນລາວໄວໆນີ້. ແຕ່ພຣະອົງກໍຈະຕັດສິນແທ້.

<u>ແຂກທີ່ບໍ່ມີໃຜເຊີນ (ດານີເອນ ບົດທີ 5:5-8)</u>

**ອ່ານດານີເອນ ບົດທີ 5:5-8. ແມ່ນຫຍັງໄດ້ເກີດຂຶ້ນໃນພຣະຄຳບົດນີ້? ເປັນຫຍັງກະສັດເບັນຊັດຊາເຣຈຶ່ງໄດ້ເຮັດສິ່ງນີ້? ເລື່ອງນີ້ຄືກັບເລື່ອງໃນດານີເອນບົດທີ 2 ແນວໃດ? ເປັນຫຍັງຂໍ້ມູນນີ້ຈຶ່ງສຳຄັນສຳລັບພວກເຮົາ? (ໃຫ້ທ່ານອ່ານພຣະທຳເພງສັນລະເສີນ 96:5 ແລະ ໂກໂລຊາຍ 1:15-17 ເພື່ອຊ່ວຍຕອບຄຳຖາມສຸດທ້າຍນີ້)**

ແມ່ນຫຍັງຄືສິ່ງທຳອິດທີ່ເບັນຊັດຊາເຣເຮັດ? ເພິ່ນໄດ້ເຮັດສິ່ງດຽວທີ່ກະສັດເນບູກາດເນັດຊາໄດ້ເຮັດໃນອະດີດ (ດານີເອນ 2:2; ດານີເອນ 4:7). ເບັນຊັດຊາເຣໄດ້ເອີ້ນບັນດານັກປາດມາ. ເພິ່ນໄດ້ຂໍໃຫ້ພວກເຂົາອະທິບາຍ ລາຍມືທີ່ຂຽນໄວ້ເທິງຝາ. ກະສັດໄດ້ສະເໜີມອບຂອງຂວັນ ແລະ ກຽດຕິຍົດຫຼາຍຢ່າງແກ່ຜູ້ທີ່ອະທິບາຍໄດ້. ເພິ່ນສະເໜີມອບ (1) ເສື້ອຜ້າສີມ່ວງ. ເຊື້ອຂອງກະສັດກໍນຸ່ງເສື້ອຜ້າສີມ່ວງໃນສະໄໝຂອງພຣະຄຳພີ (ເອຊະເທີ 8:15). (2) ກະສັດຍັງໄດ້ນຳສະເໜີທີ່ຈະມອບສາຍສ້ອຍຄຳເປັນລາງວັນໃຫ້. ສາຍສ້ອຍຄຳກໍເປັນສັນຍາລັກຂອງການມີອຳນາດ (ປະຖົມມະການ41:42). ຜູ້ທີ່ໃສ່ສາຍສ້ອຍຄຳກໍເປັນຜູ້ທີ່ສຳຄັນລຳດັບທີສາມໃນອານາຈັກ. ຜູ້ນຳຜູ້ທີໜຶ່ງຂອງບາບີໂລນກໍຄື ກະສັດນາໂບນີດັສ ພໍ່ຂອງເບັນຊັດຊາຣາ. ດັ່ງນັ້ນ ເບັນຊັດຊາເຣກໍເປັນຜູ້ນຳຄົນທີສອງຂອງບາບີໂລນ. ແມ່ນແລ້ວ ກະສັດໄດ້ນຳສະເໜີຂອງຂວັນຫຼາຍໆຢ່າງແກ່ບັນດານັດປາດ ແຕ່ກໍບໍ່ມີຜູ້ໃດສາມາດອະທິບາຍລາຍມືທີ່ຂຽນນັ້ນໄດ້.

ກະສັດໄດ້ຊອກຫາຄວາມຊ່ວຍເຫຼືອໃນບ່ອນທີ່ຜິດ. ຄວາມຈິງບາງຢ່າງກໍສຳຄັນເກີນໄປສຳລັບມະນຸດທີ່ຈະຮູ້ຈັກດ້ວຍຕົນເອງ. ນັ້ນເປັນເຫດຜົນທີ່ພຣະເຈົ້າຈະຕ້ອງສຳແດງຄວາມຈິງເຫຼົ່ານີ້ໃຫ້ແກ່ເຮົາ.

**ໃຫ້ທ່ານລອງຄິດກ່ຽວກັບຂອງຂວັນຕ່າງໆທີ່ກະສັດນຳສະເໜີວ່າຈະໃຫ້ນັກປາດ ຫຼື ນັກໂຫຣາຈານຕ່າງໆ? ແຕ່ແມ່ນຫຍັງໄດ້ເກີດຂຶ້ນຕໍ່ໄປຕໍ່ບາບີໂລນ? ສິ່ງນີ້**

**ບອກຫຍັງພວກເຮົາເຖິງເຫດຜົນທີ່ພວກເຮົາຈໍາເປັນຕ້ອງເອົາພຣະເຈົ້າມາກ່ອນໃນທຸກໆສິ່ງທີ່ພວກເຮົາເຮັດ?**

## ວັນອັງຄານ 4 ກຸມພາ

<u>ຣາຊີນີຍ່າງເຂົ້າມາ (ດານີເອນ 5:9-12)</u>

**ໃຫ້ທ່ານອ່ານກ່ຽວກັບຣາຊີນີໃນ ດານີເອນ 5:9-12. ຣາຊີນີກ່າວສິ່ງໃດກ່ຽວກັບດານີເອນ? ເປັນຫຍັງເບັນຊັດຊາເຣຈຶ່ງຄວນຮູ້ຂໍ້ມູນນີ້ແລ້ວ? ແຕ່ກະສັດກໍເຮັດຄືກັບວ່າຕົນເອງບໍ່ຮູ້ວ່າດານີເອນເປັນຜູ້ໃດ! ແຕ່ເລື່ອງນີ້ບອກຫຍັງ ພວກເຮົາກ່ຽວກັບກະສັດ?**

ທຸກໆຄົນທີ່ຢູ່ໃນງານລ້ຽງກໍສັບສົນກັບຂໍ້ຄວາມທີ່ຢູ່ເທິງຝາ. ແລ້ວຣາຊີນີກໍຍ່າງເຂົ້າມາໃນຫ້ອງ. ນາງກໍໃຫ້ຄໍາແນະນໍາແກ່ກະສັດ. ນາງຊ່ວຍໃຫ້ເພິ່ນຈື່ເລື່ອງຂອງດານີເອນ. ນາງບອກວ່າດານີເອນນັ້ນກໍເປັນທີ່ຮູ້ຈັກຍ້ອນຄວາມສາມາດຂອງເພິ່ນ. ດານີເອນສາມາດແກ້ໄຂບັນຫາອັນເລິກລັບ ແລະຍັງສາມາດເຂົ້າໃຈຄວາມຝັນໄດ້. ເພິ່ນໄດ້ສະແດງໃຫ້ເຫັນເຖິງຄວາມສາມາດຂອງເພິ່ນໃນສະໄໝຂອງກະສັດເນບູກາດເນັດຊາ. ເປັນເລື່ອງໜ້າເສຍດາຍທີ່ເບັນຊັດຊາເຣນັ້ນກໍບໍ່ມີຄວາມສະຫຼາດເທົ່າກັບເນບູກາດເນັດຊາ. ເພິ່ນບໍ່ໄດ້ຄິດທີ່ຈະຂໍການຊ່ວຍເຫຼືອຈາກດານີເອນເລີຍ. ດັ່ງນັ້ນ ມັນຈຶ່ງເປັນເລື່ອງຈໍາເປັນທີ່ຈະຕ້ອງໃຫ້ຣາຊີນີຊ່ວຍເບັນຊັດຊາເຣ. ນາງບອກວ່າ ດານີເອນເປັນຜູ້ດຽວໃນອານາຈັກນີ້ທີ່ສາມາດອ່ານຂໍ້ຄວາມເທິງຝານັ້ນໄດ້. ກະສັດກໍຄວນຈະຮູ້ເລື່ອງນີ້ຢູ່ແລ້ວ. ແລ້ວຣາຊີນີກໍບອກຕໍ່ໄປເພີ່ມເຕີມເຖິງຄວາມສາມາດຂອງດານີເອນ. ດານີເອນນັ້ນເຕັມໄປດ້ວຍພຣະວິນຍານຂອງພຣະເຈົ້າ. ດານີເອນເຕັມໄປດ້ວຍສະຕິປັນຍາ ແລະກໍເປັນນັກປາດທີ່ເກັ່ງທີ່ສຸດໃນສະໄໝຂອງເນບູກາດເນັດຊາ (ດານີເອນ ບົດທີ 5:11,12).

**ໃຫ້ທ່ານອ່ານໂລມ 1:16-32. ແມ່ນຫຍັງຄືກົດທີ່ສໍາຄັນໃນຂໍ້ພຣະຄໍາພີເຫຼົ່ານີ້? ກົດເຫຼົ່ານີ້ຖືກສະທ້ອນໃຫ້ເຫັນໃນເລື່ອງຂອງເບັນຊັດຊາເຣແນວໃດ? ກົດເຫຼົ່ານີ້ຖືກສະແດງອອກໃນຊີວິດອ້ອມຂ້າງຂອງເຮົາແນວໃດໃນທຸກມື້ນີ້?**

## ກະສັດຖືກຕັດສິນວ່າບໍ່ດີພໍ (ດານີເອນ 5:13-28)

**ອ່ານ ດານີເອນ 5:13-28. ໃນຂໍ້ພຣະຄຳພີເຫຼົ່ານີ້ ດານີເອນບອກກະສັດວ່າເພິ່ນຈະຕາຍໃນໄວໆນີ້. ເປັນຫຍັງກະສັດຈຶ່ງຈະກຳລັງຕາຍ? ດານີເອນໃຫ້ເຫດຜົນອັນໃດກັບກະສັດ?**

ກະສັດຖືກກ່າວວ່າມີຄວາມຜິດຈາກສາມຢ່າງ. ຢ່າງທີໜຶ່ງກໍຄື ເບັນຊັດຊາເຣມີຄວາມຜິດຍ້ອນວ່າ ເພິ່ນບໍ່ໄດ້ຮຽນຮູ້ບົດຮຽນອັນໃດເລີຍຈາກປະສົບການຂອງກະສັດເນບູກາດເນັດຊາ. ພວກເຮົາຮູ້ໄດ້ແນວໃດ? ກໍເພາະວ່າ ເບັດຊັດຊາເຣບໍ່ເຄີຍຫັນຫຼັງອອກຈາກຄວາມບາບ. ເພິ່ນໄດ້ມີຫົວໃຈທີ່ເຕັມໄປດ້ວຍຄວາມອວດອົ່ງ. ເພິ່ນບໍ່ໄດ້ຫັນເຂົ້າຫາພຣະເຈົ້າຄືກັບທີ່ພໍ່ຕູ້ຂອງເພິ່ນ ຄືກັບກະສັດເນບູກາດເນັດຊາໄດ້ເຮັດ. ຢ່າງທີສອງຄື ເບັນຊັດຊາເຣນັ້ນໃຊ້ຈອກຄຳ ແລະຈອກເງິນຈາກພຣະວິຫານຂອງພຣະເຈົ້າ. ກະສັດນັ້ນໄດ້ດື່ມເຫຼົ້າອະງຸ່ນໃສ່ຈອກເຫຼົ່ານີ້. ແລ້ວເພິ່ນແລະໝູ່ຂອງເພິ່ນກໍດື່ມເຫຼົ້າອະງຸ່ນແລະສັນເສີນພະຂອງພວກເພິ່ນ. ຢ່າງທີສາມ ກະສັດບໍ່ໄດ້ໃຫ້ກຽດແລະສັນເສີນພຣະເຈົ້າ. ພຣະເຈົ້າຊົງເປັນພຣະອົງຜູ້ທີ່ "ຊົງຄວບຄຸມທຸກສິ່ງທີ່ທ່ານເຮັດ" (ດານີເອນ 5:23). ຈາກນັ້ນ ດານີເອນຈຶ່ງອະທິບາຍຂໍ້ຄວາມຫຼືຂ່າວສານນີ້. "ສິ່ງນັ້ນ ມີຄວາມໝາຍດັ່ງນີ້: ຈຳນວນຄືພຣະເຈົ້າໄດ້ນັບຈຳນວນມື້ແຫ່ງອານາຈັກຂອງທ່ານໄວ້, ແລະນຳມັນໄປສູ່ຈຸດຈົບ; ນໍ້າໜັກຄື ພຣະເຈົ້າຊັ່ງທ່ານດ້ວຍຊິງແລະເຫັນວ່າເບົາໂພດ; ແບ່ງແຍກຄືອານາຈັກຂອງທ່ານຈະຖືກແບ່ງໃຫ້ ຊາວເມເດຍກັບຊາວເປີເຊຍ." (ດານີເອນ 5:26-28).

<u>ຈຸດຈົບຂອງບາບີໂລນ (ດານີເອນ 5:29-31)</u>

**ໃຫ້ເຮົາອ່ານກ່ຽວກັບຈຸດຈົບຂອງອານາຈັກບາບີໂລນສະໄໝກະສັດເບັນຊັດຊາເຣ ໃນພຣະທຳດານີເອນ 5:29-31. ແລ້ວໃຫ້ທ່ານອ່ານກ່ຽວກັບບາບີໂລນໃນຍຸກສຸດທ້າຍໃນ ພະນິມິດ 14:8; ພະນິມິດ 16:19; ແລະພະນິມິດ 18:2. ຈຸດຈົບຂອງອານາຈັກບາບີໂລນຂອງເບັນຊັດຊາເຣສອນອັນໃດພວກເຮົາກ່ຽວກັບບາບີໂລນໃນຍຸກສຸດທ້າຍ?**

ອານາຈັກບາບີໂລນໄດ້ສິ້ນສຸດລົງດັ່ງທີ່ດານີເອນໄດ້ກ່າວໄວ້ ແລະ ມັນກໍໄດ້ເກີດຂຶ້ນຢ່າງໄວວາ. ໃນຂະນະທີ່ກະສັດຈັດງານລ້ຽງສ້າງສັນອັນໃຫຍ່ໂຕນັ້ນ ຊາວເປີເຊຍກໍເຂົ້າມາຍຶດຄອງເມືອງເອົາໄວ້. ພວກເຂົາໄດ້ຮັບໄຊຊະນະສົງຄາມໂດຍທີ່ບໍ່ຕ້ອງຕໍ່ສູ້ຈັກໜ້ອຍເລີຍ! ພວກເຂົາໄດ້ເຮັດແບບນັ້ນໄດ້ແນວໃດ? ຊາວເປີເຊຍໄດ້ຂຸດຮ່ອງນ້ຳ ເອົາໄວ້ໃກ້ໆເມືອງ. ພວກເຂົາໄດ້ເຮັດໃຫ້ແມ່ນ້ຳເອຟະລັດນັ້ນໄຫຼເຂົ້າໄປໃນຮ່ອງນ້ຳນີ້. ແລ້ວກອງທັບຊາວເປີເຊຍກໍສາມາດຍ່າງລົງໄປໃນແມ່ນ້ຳທີ່ຫວ່າງເປົ່າໄປສູ່ບາບີໂລນ. ຄືນນັ້ນເບັນຊັດຊາເຣກໍຖືກຂ້າ. ພໍ່ຂອງເພິ່ນກໍຄືກະສັດນາໂບນີດັສໄດ້ໜີອອກຈາກເມືອງໄປແລ້ວ. ແຕ່ຕໍ່ມາເພິ່ນກໍໄດ້ຍອມມອບໂຕຈຳນົນຕໍ່ຜູ້ນຳຊຸດໃໝ່. ໃນທາງນີ້ແຫຼະ ອານາຈັກອັນເຂັ້ມແຂງທີ່ສຸດໃນປະຫວັດສາດຈຶ່ງມາສູ່ຈຸດຈົບ. ບາບີໂລນເຊິ່ງເປັນຫົວທີ່ເປັນຄຳນັ້ນກໍໄດ້ຫາຍໄປ.

"ພຣະເຈົ້າໄດ້ໃຫ້ໂອກາດກັບເບັນຊັດຊາເຣຫຼາຍເທື່ອທີ່ຈະຮູ້ຈັກພຣະອົງ ແລະເຮັດຕາມແຜນການຂອງພຣະອົງສຳລັບຊີວິດຂອງເພິ່ນ. ເບັນຊັດຊາເຣໄດ້ເຫັນວ່າພຣະເຈົ້າໄດ້ເຮັດໃຫ້ອຳນາດຂອງຄວາມຄິດຂອງພໍ່ຕູ້ເພິ່ນນັ້ນຫາຍໄປແບບໃດ. ແລ້ວພໍ່ຕູ້ຂອງເພິ່ນຜູ້ເປັນກະສັດກໍຖືກສົ່ງໄປຢູ່ກັບສັດໃນທົ່ງຫຍ້າ. ແຕ່ເບັນຊັດຊາເຣກໍມັກຄວາມສະໜຸກສະໜານ. ເພິ່ນມັກທີ່ຈະໃຫ້ກຽດຕົນເອງ. ເພິ່ນບໍ່ໄດ້ຮຽນຮູ້ສິ່ງໃດຈາກປະສົບການຂອງພໍ່ຕູ້ຂອງເພິ່ນເລີຍ. ເພິ່ນໄດ້ຖິ້ມໂອກາດທີ່ພຣະເຈົ້າມອບໃຫ້ເພື່ອທີ່ຈະຮຽນຮູ້ຄວາມຈິງ." (ທ່ານນາງເອເລັນຈີໄວທ໌)

## ຂໍ້ຄິດເພີ່ມເຕີມ

"ປະຫວັດສາດກໍໄດ້ສືບຕໍ່ສອນບົດຮຽນຕ່າງໆໃນທຸກມື້ນີ້. ພຣະເຈົ້າຊົງປະທານໜ້າທີ່ໃຫ້ກັບທຸກໆປະເທດແລະທຸກໆຄົນໃນແຜນການອັນຍິ່ງໃຫຍ່ຂອງພຣະອົງ. ໃນທຸກມື້ນີ້ ພຣະເຈົ້າຊົງມອບບົດທົດສອບໃຫ້ແກ່ມະນຸດແລະອານາຈັກທັງຫຼາຍ. ພຣະເຈົ້າຜູ້ທົດສອບຫົວໃຈຂອງເຮົານັ້ນກໍບໍ່ເຄີຍເຮັດຜິດຈັກເທື່ອ. ຄົນທັງຫຼາຍກໍມີການເລືອກສິ່ງຕ່າງໆ ແລະ ການເລືອກເຫຼົ່ານີ້ກໍຈະສະທ້ອນໃຫ້ເຫັນຊີວິດໃນອະນາຄົດຂອງພວກເຂົາ. ພຣະເຈົ້າຊົງຄວບຄຸມທຸກສິ່ງທຸກຢ່າງ. ພຣະອົງຈະເຮັດໃຫ້ແຜນການຂອງພຣະອົງນັ້ນເກີດຂຶ້ນເປັນຈິງ."

## ຄຳຖາມຄົ້ນຄວ້າ

1. ວິທີການໃຊ້ຊີວິດຕ່າງໆທີ່ຢູ່ອ້ອມຂ້າງເຮົານັ້ນເຮັດໃຫ້ຄວາມເຊື່ອຂອງເຮົາອ່ອນແຮງລົງແນວໃດ? ພວກເຮົາຄວນເຮັດອັນໃດກ່ຽວກັບສິ່ງນີ້ໃນຖານະທີ່ເປັນຄຣິສຕະຈັກ?

2. ເລື່ອງຂອງເບັນຊັດຊາເຣນັ້ນສອນຫຍັງພວກເຮົາກ່ຽວກັບຄວາມລອດພົ້ນ? ແມ່ນແລ້ວ ຄວາມລອດພົ້ນກໍກ່ຽວກັບສິ່ງທີ່ພວກເຮົາຮູ້. ແຕ່ເປັນຫຍັງການທີ່ພວກເຮົາຖືກໄຖ່ໃຫ້ລອດນັ້ນ ຄວາມຈິງແລ້ວແມ່ນກ່ຽວກັບສິ່ງທີ່ພວກເຮົາເຮັດກັບສິ່ງທີ່ເຮົາຮູ້ແລ້ວ? (ອ່ານ ດານີເອນ 5:22)

3. ດານີເອນ 5:23 ນັ້ນສອນບົດຮຽນອັນສຳຄັນທາງດ້ານຄວາມເຊື່ອອັນໃດແດ່? ເປັນຫຍັງຂໍ້ພຣະຄຳພີຈຶ່ງເຕືອນພວກເຮົາບໍ່ໃຫ້ຕໍ່ສູ້ພຣະເຈົ້າ? ຂໍ້ພຣະຄຳພີນີ້ສອນຫຍັງພວກເຮົາກ່ຽວກັບພຣະເຈົ້າໃນຖານະທີ່ພຣະອົງຊົງສ້າງພວກເຮົາແລະດູແລພວກເຮົາໃນຊີວິດປະຈຳວັນ?

4. ກະສັດເບັນຊັດຊາເຣນັ້ນກໍບໍ່ເຂົ້າໃຈຂໍ້ຄວາມນັ້ນ (ດານີເອນ 5:6). ແຕ່ເພິ່ນກໍມີຄວາມຢ້ານກົວ. ສິ່ງນີ້ບອກຫຍັງພວກເຮົາກ່ຽວກັບການດໍາເນີນຊີວິດຢູ່ດ້ວຍໃຈທີ່ຮູ້ສຶກຜິດ?

# ບົດທີ 7

## ຈາກຖໍ້າສິງໄປສູ່ຖໍ້າຂອງທູດສະຫວັນ

**8-14 ກຸມພາ 2019**

**ບ່າຍວັນສະບາໂຕ 8 ກຸມພາ**

**<u>ອ່ານສໍາລັບບົດຮຽນອາທິດນີ້</u>**

**ດານີເອນ 6:1-28; ປະຖົມມະການ 37:11; 1 ຊາມູເອນ 18:6-9; ມັດທາຍ 6:6; ກິດຈະການ 5:27-32.**

**ຂໍ້ຄວນຈໍາ:** *"ແລ້ວຜູ້ກວດກາແລະເຈົ້າແຂວງຄົນອື່ນໆກໍພະຍາຍາມຊອກຈັບຜິດດານີເອນໃນການບໍລິຫານອານາຈັກ; ແຕ່ພວກເຂົາຈັບຜິດບໍ່ໄດ້ ເພາະດານີເອນເປັນຄົນຊື່ສັດທີ່ສຸດ ແລະ ບໍ່ໄດ້ເຮັດໃນສິ່ງທີ່ຜິດ ຫຼື ໃນສິ່ງທີ່ເສື່ອມເສຍໃດໆເລີຍ" (ດານີເອນ 6:4).*

ຊາວມີເດຍແລະຊາວເປີເຊຍກໍໄດ້ຍຶດຄອງອານາຈັກບາບີໂລນ. ຈາກນັ້ນ ກະສັດດາຣິອຸດຂອງມີເດຍກໍໄດ້ກາຍເປັນກະສັດອົງໃໝ່. ເພິ່ນໄດ້ເຫັນວ່າດານີເອນນັ້ນເປັນຄົນທີ່ສະຫຼາດຢ່າງຫຼວງຫຼາຍ. ດັ່ງນັ້ນ ດາຣິອຸດຈຶ່ງມອບໜ້າທີ່ຢ່າງໜຶ່ງໃນລັດ

ຖະບານໃໝ່ໃຫ້ແກ່ດານີເອນ. ດານີເອນກໍໄດ້ປະຕິບັດໜ້າວຽກໄດ້ຢ່າງຍອດຢ້ຽມ. ດັ່ງນັ້ນ ກະສັດຈຶ່ງໄດ້ແຕ່ງຕັ້ງໃຫ້ດານີເອນເປັນໜຶ່ງໃນຜູ້ນຳອັນສູງສຸດຂອງລັດຖະບານ. ແຕ່ຜູ້ນຳລັດຖະບານຄົນອື່ນໆ ກໍຮູ້ສຶກອິດສາຢ່າງແຮງຕໍ່ຄວາມສຳເລັດຂອງດານີເອນ.

ປະສົບການຂອງດານີເອນກໍສະແດງໃຫ້ພວກເຮົາເຫັນສິ່ງວ່າ ສິ່ງໃດຈະເກີດຂຶ້ນກັບປະຊາຊົນຂອງພຣະເຈົ້າໃນຍຸກສຸດທ້າຍ. ນອກຈາກນັ້ນ ເລື່ອງຂອງດານີເອນ ກໍຍັງສະແດງໃຫ້ພວກເຮົາເຫັນວ່າ ຊາຕານຈະໂຈມຕີປະຊາຊົນຂອງພຣະເຈົ້າຍ້ອນຄວາມເຊື່ອພວກເຂົາ. ດັ່ງນັ້ນ ພວກເຮົາສາມາດຄາດຫວັງເຖິງຄວາມຫຍຸ້ງຍາກທີ່ຈະມາເຖິງໃນສົງຄາມຄວາມຊົ່ວຮ້າຍ. ແຕ່ພວກເຮົາກໍຍັງສາມາດວາງໃຈໄດ້ວ່າຄວາມດີນັ້ນຈະເປັນຝ່າຍຊະນະ. ພຣະເຈົ້າຈະຊ່ອຍປະຊາຊົນຂອງພຣະອົງໃຫ້ພົ້ນ. ແມ່ນແລ້ວຊາຕານຈະກ່າວຫາປະຊາຊົນໃນຍຸກສຸດທ້າຍຂອງພຣະເຈົ້າວ່າເປັນຕົ້ນເຫດສຳລັບຄວາມຫຍຸ້ງຍາກສັບສົນເທິງໂລກນີ້. ແຕ່ພຣະເຈົ້າຈະສະແດງໃຫ້ເຫັນວ່າ ປະຊາຊົນຂອງພຣະອົງນັ້ນບໍລິສຸດ

## ວັນທິດ 9 ກຸມພາ

**ປະຊາຊົນທີ່ມີຄວາມອິດສາ (ດານີເອນ 6:1-5)**

**ອ່ານກ່ຽວກັບປະຊາຊົນທີ່ມີຫົວໃຈທີ່ອິດສາ ໃນດານີເອນ 6:1-5; ປະຖົມມະການ 37:11; ແລະ 1 ຊາມູເອນ 18:6-9. ສິ່ງບໍ່ດີອັນໃດແດ່ເກີດຂຶ້ນໃນແຕ່ລະເລື່ອງເຫຼົ່ານີ້?**

ດານີເອນເປັນຜູ້ນຳທີ່ດີເລີດ. ຄວາມສາມາດຂອງເພິ່ນກໍເຮັດໃຫ້ກະສັດນັ້ນເພິ່ງພໍໃຈ. ແຕ່ຜູ້ນຳຄົນອື່ນໆກໍຮູ້ສຶກອິດສາ. ດັ່ງນັ້ນ ພວກເຂົາຈຶ່ງໄດ້ວາງແຜນກຳຈັດດານີເອນ. ພວກເຂົາພະຍາຍາມທີ່ຈະຫາສິ່ງທີ່ດານີເອນເຮັດຜິດ ເພື່ອວ່າພວກເຂົາຈະໄດ້ບອກກະສັດກ່ຽວກັບສິ່ງນັ້ນ. ແຕ່ "ພວກເຂົາຈັບຜິດບໍ່ໄດ້ ເພາະດານີເອນເປັນຄົນສັດຊື່ທີ່ສຸດ ແລະ ບໍ່ໄດ້ເຮັດໃນສິ່ງທີ່ຜິດ ຫຼື ໃນສິ່ງທີ່ເສື່ອມເສຍໃດໆເລີຍ." (ດານີເອນ 6:4).

ທ່ານເຫັນຄຳສັບທີ່ຂຽນວ່າ "ສັດຊື່" ຫຼືບໍ່? ຄຳນີ້ແມ່ນມາຈາກພາສາອາຣາເມອິກ. ຄຳນີ້ກໍຍັງສາມາດຖືກຂຽນຫຼືແປວ່າ "ຄົນໆໜຶ່ງທີ່ຄົນອື່ນສາມາດໄວ້ວາງໃຈໄດ້."

ດານີເອນບໍ່ໄດ້ເຮັດຫຍັງຜິດ. ດັ່ງນັ້ນ ຜູ້ນຳທີ່ອິດສາເພິ່ນກໍບໍ່ສາມາດກ່າວໂທດເພິ່ນໃນເລື່ອງໃດ. ແຕ່ຜູ້ນຳກໍຍັງເຫັນວ່າ ດານີເອນນັ້ນຊື່ສັດຕໍ່ພຣະເຈົ້າແລະຕໍ່ກົດຂອງພຣະອົງ. ສິ່ງນີ້ກໍໃຫ້ແນວຄິດຢ່າງໜຶ່ງແກ່ບັນດາຜູ້ນຳ. ພວກເຂົາໄດ້ມີແຜນການອັນຊົ່ວຮ້າຍເພື່ອທີ່ຈະເຮັດໃຫ້ດານີເອນພົບກັບບັນຫາ. ບັນດາຜູ້ນຳຈະໃຫ້ກະສັດນັ້ນອອກກົດໝາຍ. ແລ້ວດານີເອນກໍຈະຖືກບັງຄັບໃຫ້ເລືອກລະຫວ່າງການເຊື່ອຟັງກົດຂອງພຣະເຈົ້າແລະກົດໝາຍຂອງກະສັດ. ຜູ້ນຳທີ່ອິດສາເຫຼົ່ານີ້ກໍແນ່ໃຈວ່າ ດານີເອນນັ້ນຈະເລືອກທີ່ຈະເຊື່ອຟັງກົດບັນຍັດຂອງພຣະເຈົ້າ. ເມື່ອດານີເອນເຮັດດັ່ງນັ້ນ ແລ້ວພວກເຂົາກໍຈະກຳຈັດດານີເອນອອກໄປໄດ້.

**ວັນຈັນ 10 ກຸມພາ**

## <u>ແຜນການອັນຊົ່ວຮ້າຍຕໍ່ຕ້ານດານີເອນ (ດານີເອນ 6:6-9)</u>

**ໃຫ້ທ່ານອ່ານກ່ຽວກັບກົດຂອງກະສັດໃນ ດານີເອນ 6:6-9. ກະສັດຢ້ານສິ່ງໃດ? ບັນດາຜູ້ນຳທີ່ອິດສານັ້ນໃຊ້ຄວາມຢ້ານນີ້ຂອງກະສັດເພື່ອໂນ້ມນ້າວກະສັດໃຫ້ຜ່ານກົດໝາຍສະບັບນີ້ແນວໃດ?**

ກົດໝາຍນີ້ກໍຈັດຕັ້ງກະສັດໃຫ້ເປັນຄືກັບພະອົງໜຶ່ງ. ໃນຊ່ວງເວລາ30ມື້ ທຸກໆຄົນຈະຕ້ອງອະທິຖານຕໍ່ກະສັດ. ແລ້ວກະສັດກໍຈະນຳຄຳອະທິຖານຂອງພວກເຂົາໄປຫາພະຕ່າງໆຂອງເພິ່ນ. ກະສັດພາດທີ່ຈະເຫັນບາງຢ່າງທີ່ສຳຄັນ. ເພິ່ນໄດ້ສ້າງກົດໝາຍນີ້ເພື່ອປົກປ້ອງອານາຈັກຂອງເພິ່ນຈາກຄວາມຊົ່ວຮ້າຍ. ແຕ່ກົດໝາຍນີ້ກໍຄືແຜນອັນຊົ່ວຮ້າຍທີ່ຈະທຳລາຍດານີເອນ.

ໃຫ້ພວກເຮົາມາເບິ່ງສອງພາກສ່ວນຂອງກົດໝາຍກະສັດ. ສ່ວນທີ່ໜຶ່ງຄືການລົງໂທດ. ຜູ້ໃດກໍຕາມທີ່ລະເມີດກົດຂອງກະສັດຈະຖືກໂຍນເຂົ້າໄປໃນຖ້ຳສິງ. ໃນ

ສະໄໝຂອງພຣະຄຳພີ ກະສັດທັງຫຼາຍກໍຈະຂັງໂຕສິງໄວ້ໃນກົງ. ຕໍ່ມາກະສັດກໍໄດ້ປ່ອຍສິງນັ້ນໄປຢູ່ໃນປ່າໃນເວລາທີ່ເພິ່ນຢາກຈະອອກໄປລ່າມັນ. ດັ່ງນັ້ນ ຈຶ່ງມີສິ່ງທີ່ຫິວໂຫຍຈຳນວນຫຼາຍໃນເປີເຊຍ. ສ່ວນທີສອງຂອງກົດໝາຍນີ້ຄື ອຳນາດຂອງມັນ. ໃນພຣະທຳເອຊະເທີ 1:19 ແລະ ເອຊະເທີ 8:8; ພວກເຮົາໄດ້ອ່ານກ່ຽວກັບ "ກົດໝາຍຂອງຊາວເປີເຊຍແລະມີເດຍ." ກົດໝາຍນີ້ກໍບໍ່ສາມາດຖືກປ່ຽນແປງໄດ້ ຫຼັງຈາກທີ່ຖືກຂຽນແລ້ວ. ແມ່ນແຕ່ກະສັດກໍບໍ່ສາມາດປ່ຽນມັນໄດ້. ຜູ້ຂຽນປະຫວັດສາດຈາກກຣີກກໍບອກພວກເຮົາກ່ຽວກັບກະສັດດາຣິອຸດ ອົງທີ3. (ດາຣິອຸດອົງທີ3 ກໍບໍ່ແມ່ນຄົນດຽວກັນກັບ ດາຣິອຸດໃນພຣະທຳດານີເອນ). ດາຣິອຸດ ອົງທີ3 ນັ້ນຈະລົງໂທດຄົນຜິດດ້ວຍຄວາມຕາຍ. ແລ້ວດາຣິອຸດກໍປ່ຽນໃຈ ເມື່ອເພິ່ນຮູ້ວ່າຄົນໆນັ້ນເປັນຜູ້ບໍລິສຸດ. ແຕ່ກະສັດກໍບໍ່ສາມາດຢຸດຕິຄວາມຕາຍຂອງຄົນໆນັ້ນ. ກົດໝາຍຂອງເພິ່ນບໍ່ສາມາດຈະຖືກປ່ຽນແປງໄດ້.

**ວັນອັງຄານ 11 ກຸມພາ**

**<u>ຄຳອະທິຖານຂອງດານີເອນ (ດານີເອນ 6:10)</u>**

**ອ່ານກ່ຽວກັບການອະທິຖານປະຈຳວັນຂອງດານີເອນ ໃນດານີເອນ 6:10. ດານີເອນນັ້ນໄດ້ອະທິຖານເລື້ອຍຊ່ຳໃດ? ເປັນຫຍັງດານີເອນຈຶ່ງຕັດສິນໃຈທີ່ຈະອະທິຖານ?**

ດານີເອນມີປະສົບການຫຼາຍໃນການເປັນຜູ້ນຳລັດຖະບານ. ເພິ່ນເປັນຄົນທີ່ຊື່ສັດຕໍ່ອົງກະສັດ. ແຕ່ຄວາມຊື່ສັດຕໍ່ພຣະເຈົ້າຂອງເພິ່ນກໍມາກ່ອນ. ໃນຖານະເປັນຜູ້ຮັບໃຊ້ຂອງພຣະເຈົ້າ ດານີເອນກໍເປັນຜູ້ດຽວໃນອານາຈັກທີ່ຮູ້ເຫດຜົນອັນແທ້ຈິງທີ່ຢູ່ເບື້ອງຫຼັງຂອງກົດໝາຍກະສັດ. ໃນເບື້ອງຕົ້ນກະສັດກໍບໍ່ເຫັນຈຸດປະສົງຂອງກົດໝາຍນີ້. ສຳລັບເພິ່ນແລ້ວ ກົດໝາຍສະບັບນີ້ແມ່ນໂອກາດທີ່ຈະເຮັດໃຫ້ອານາຈັກຂອງເພິ່ນເຂັ້ມແຂງ. ແຕ່ສຳລັບຜູ້ນຳທີ່ມີຄວາມອິດສາດານີເອນນັ້ນ ກົດໝາຍສະບັບນີ້ກໍເປັນໂອກາດທີ່ຈະກຳຈັດດານີເອນອອກໄປຢ່າງແທ້ຈິງ.

ແນ່ນອນວ່າ ມັນມີເຫດຜົນທີ່ໃຫຍ່ກວ່ານີ້ສຳລັບສິ່ງທີ່ເກີດຂຶ້ນໃນເລື່ອງນີ້. ເຫດຜົນອັນແທ້ຈິງສຳລັບກົດໝາຍຂອງກະສັດນັ້ນກໍຄືສົງຄາມທົ່ວໂລກລະຫວ່າງພຣະເຈົ້າແລະ ໑ຕານ. ດັ່ງນັ້ນ ດານີເອນຈຶ່ງບໍ່ໄດ້ປ່ຽນການອະທິຖານ ປະຈຳວັນຂອງເພິ່ນ. ດານີເອນໄດ້ສືບຕໍ່ອະທິຖານມື້ລະສາມເທື່ອ. ເພິ່ນໄດ້ຫຼຽວໄປຫານະຄອນເຢລູຊາເລັມໃນຂະນະທີ່ເພິ່ນອະທິຖານ. ກົດໝາຍຂອງຊາວເປີເຊຍນັ້ນກໍບອກວ່າ ບໍ່ໃຫ້ຜູ້ໃດອະທິຖານຕໍ່ມະນຸດ ຫຼື ພະອົງໃດ ຍົກເວັ້ນແຕ່ກະສັດເທົ່ານັ້ນເປັນໄລຍະເວລາ 30ວັນ. ແຕ່ດານີເອນກໍບໍ່ໄດ້ລີ້ ຫຼື ເຊື່ອງຄຳອະທິຖານຂອງເພິ່ນໄວ້ໃນເວລານີ້. ດານີເອນໄດ້ຢືນຢັດຢູ່ຄົນດຽວ. ເພິ່ນຄົນດຽວທີ່ຂັດຄຳສັ່ງຂອງກະສັດ. ຊີວິດການອະທິຖານຂອງດານີເອນກໍສະແດງໃຫ້ເຫັນວ່າ ເພິ່ນຮູ້ຄວາມຈິງຂອງພຣະຄຳພີທີ່ສຳຄັນ. ເພິ່ນຈະຕ້ອງຊື່ສັດຕໍ່ພຣະເຈົ້າກ່ອນທີ່ເພິ່ນຈະຊື່ສັດຕໍ່ກະສັດ.

**ໃຫ້ເຮົາອ່ານກົດໝາຍພຣະຄຳພີທີ່ສຳຄັນ ໃນກິດຈະການ 5:27-32. ແມ່ນແລ້ວ ພວກເຮົາຈະຕ້ອງເຊື່ອຟັງພຣະເຈົ້າ ບໍ່ແມ່ນຄົນ. ໃນເວລາດຽວກັນນັ້ນ ເປັນຫຍັງພວກເຮົາຈຶ່ງຕ້ອງລະມັດລະວັງເມື່ອພວກເຮົາຕໍ່ສູ້ກົດໝາຍຂອງມະນຸດ?**

## ວັນພຸດ 12 ກຸມພາ

### ໃນຖ້ຳສິງ (ດານີເອນ 6:11-23)

**ອ່ານສິ່ງທີ່ກະສັດກ່າວຕໍ່ດານີເອນ ໃນພຣະທຳດານີເອນ 6:11-23. ກະສັດກ່າວສິ່ງໃດຕໍ່ດານີເອນ? ຄຳເວົ້າຂອງກະສັດນັ້ນສະແດງໃຫ້ພວກເຮົາເຫັນສິ່ງທີ່ກະສັດຄິດກ່ຽວກັບຄວາມເຊື່ອຂອງດານີເອນໃນພຣະເຈົ້າແນວໃດ?**

ບໍ່ດົນຕໍ່ມາ ຜູ້ນຳທີ່ອິດສາທັງຫຼາຍນັ້ນກໍສືບເຫັນດານີເອນອະທິຖານ. ພວກເຂົາໄດ້ແລ່ນໄປຫາກະສັດ. ພວກເຂົາໄດ້ກ່າວດ້ວຍຄວາມລັງກຽດແລະໂຫດຮ້າຍວ່າ: "ດານີເອນຜູ້ເປັນຊະເລີຍຄົນໜຶ່ງຈາກຢູດາຍ" (ດານີເອນ 6:13) ແມ່ນແທ້ບໍ່? ດານີເອນຄືໜຶ່ງໃນບັນດາຜູ້ນຳສູງສຸດໃນອານາຈັກ! ເພິ່ນເປັນຄົນທີ່ກະສັດໂປດປານເຊັ່ນດຽວກັນ. ແຕ່ໃນສາຍຕາຂອງຊາຍທີ່ອິດສາເຫຼົ່ານີ້ ດານີເອນກໍເປັນພຽງຊະເລີຍເສິກຄົນໜຶ່ງເທົ່ານັ້ນ. ທ່ານເຫັນບໍ່ວ່າຊາຍທີ່ອິດສາກຸ່ມນີ້ກໍພະຍາຍາມໃຫ້ກະສັດນັ້ນ

ຕໍ່ຕ້ານດານີເອນເຊັ່ນດຽວກັນແນວໃດ? "ລາວບໍ່ໄດ້ເຊື່ອຟັງຄຳສັ່ງທີ່ທ່ານໄດ້ປະກາດອອກໄປນັ້ນ." (ດານີເອນ 6:13) ບັນດາຜູ້ນຳທີ່ອິດສານັ້ນກໍເຮັດຫຼາຍເກີນໄປ. ແລ້ວຕອນນີ້ກະສັດກໍເບິ່ງເຫັນກັບດັກອັນຊົ່ວຮ້າຍທີ່ພວກເຂົາໄດ້ວາງໄວ້ສຳລັບດານີເອນກັບກົດໝາຍສະບັບນີ້. ພຣະຄຳພີບອກພວກເຮົາວ່າ ກະສັດດາຣິອຸດນັ້ນ "ຄິດຫາຊ່ອງທາງຢູ່ຈົນຕາເວັນຕົກດິນ" (ດານີເອນ 6:14). ແຕ່ກະສັດບໍ່ສາມາດເຮັດສິ່ງໃດເລີຍເພື່ອຊ່ອຍດານີເອນໃຫ້ພົ້ນຈາກຖໍ້າສິງ. ກົດໝາຍຂອງຊາວມີເດຍແລະເປີເຊຍກໍບໍ່ສາມາດຖືກປ່ຽນແປງໄດ້. ກະສັດບໍ່ໄດ້ຕ້ອງການທີ່ຈະອອກຄຳສັ່ງໃຫ້ຖິ້ມດານີເອນລົງໄປໃນຖໍ້າສິງ. ແຕ່ເພິ່ນກໍບໍ່ມີທາງເລືອກ. ກ່ອນທີ່ເພິ່ນຕ້ອງອອກຄຳສັ່ງກະສັດກໍກ່າວສິ່ງໜຶ່ງຕໍ່ດານີເອນ ເຊິ່ງເປັນສິ່ງທີ່ສະແດງເຖິງຄວາມຫວັງໃນໃຈຂອງເພິ່ນ. ຄຳເວົ້າຂອງກະສັດກໍເປັນຄືກັບຄຳອະທິຖານທີ່ບອກວ່າ: "ຂໍພຣະເຈົ້າຂອງເຈົ້າ ຜູ້ທີ່ເຈົ້າບົວລະບັດຮັບໃຊ້ດ້ວຍຄວາມຈົ່ງຮັກພັກດີນັ້ນ ຊ່ອຍກູ້ເອົາເຈົ້າເຖີດ!" (ດານີເອນ 6:16)

## ວັນພະຫັດ 13 ກຸມພາ

**<u>ກະສັດໃຫ້ກຽດພຣະເຈົ້າ (ດານີເອນ 6:24-28)</u>**

**ກະສັດໄດ້ສັນລະເສີນພຣະເຈົ້າໃນພຣະທຳ ດານີເອນ 6:24-28. ກະສັດໄດ້ກ່າວວ່າແນວໃດແທ້?**

ດາຣິອຸດໄດ້ສັນລະເສີນພຣະເຈົ້າ. ຄຳສັນລະເສີນເປັນສ່ວນທີ່ສຳຄັນຂອງເລື່ອງນີ້. ດາຣິອຸດສະແດງໃຫ້ພວກເຮົາເຫັນວ່າ ເພິ່ນເຂົ້າໃຈວ່າພຣະເຈົ້າຊົງຄວບຄຸມທຸກຢ່າງ. ດັ່ງທີ່ພວກເຮົາໄດ້ເຫັນຜ່ານມາ ກະສັດເນບູກາດເນັດຊາ ກໍໄດ້ສັນລະເສີນພຣະເຈົ້າເຊັ່ນດຽວກັນ (ດານີເອນ 2:20-23; ດານີເອນ 3:28,29; ດານີເອນ 4:1-3, 34-37). ດາຣິອຸດໄດ້ໃຫ້ກຽດພຣະເຈົ້າຄືກັບກະສັດເນບູກາດເນັດຊາ. ແຕ່ກະສັດກໍຍັງໄດ້ອອກກົດໝາຍໃໝ່. ເພິ່ນໄດ້ສັ່ງໃຫ້ທຸກໆຄົນນັ້ນ "ຈົ່ງເຄົາຣົບຢຳເກງຕໍ່ໜ້າພຣະເຈົ້າຂອງດານີເອນ" (ດານີເອນ 6:26).

ແມ່ນແລ້ວ ພຣະເຈົ້າໄດ້ເຮັດການອັດສະຈັນເພື່ອຊ່ອຍຊີວິດຂອງດານີເອນ. ພຣະເຈົ້າໄດ້ໃຫ້ລາງວັນສຳລັບຄວາມເຊື່ອຂອງດານີເອນ. ຊາຍຜູ້ຊົ່ວຮ້າຍກໍຖືກລົງໂທດ. ທຸກໆຄົນເຫັນວ່າພຣະເຈົ້ານັ້ນຊົງມີອຳນາດຢ່າງຫຼວງຫຼາຍ. ພຣະອົງຊົງຄວບຄຸມທຸກສິ່ງທຸກຢ່າງ. ເລື່ອງນີ້ສະແດງໃຫ້ເຮົາເຫັນຕົວຢ່າງຂອງສິ່ງທີ່ຈະເກີດຂຶ້ນທົ່ວໂລກໃນຍຸກສຸດທ້າຍ. ພຣະເຈົ້າຈະຮັກສາປະຊາຊົນຂອງພຣະອົງ. ພຣະເຈົ້າຈະລົງໂທດຄວາມຊົ່ວຮ້າຍ. ອຳນາດຂອງອົງພຣະຜູ້ເປັນເຈົ້າແລະກຽດຂອງພຣະອົງຈະຖືກສຳແດງໃຫ້ທຸກໆຄົນໃນໂລກແລະໃນສະຫວັນໄດ້ເຫັນທົ່ວໜ້າ.

**ອ່ານດານີເອນ 6:24. ທ່ານເຫັນບັນຫາອັນໃດໃນຂໍ້ພຣະຄຳພີນີ້? ເປັນຫຍັງມັນຈຶ່ງເປັນບັນຫາ?**

ບັນຫາກໍຄືເມຍແລະລູກ. ຕາມທີ່ພວກເຮົາຮູ້ ພວກເຂົາເປັນຜູ້ບໍລິສຸດ. ແຕ່ພວກເຂົາກໍຖືກຖິ້ມລົງໄປໃນຖ້ຳສິງກັບຜູ້ນຳທີ່ອິດສາ. ພວກເຮົາຈະອະທິບາຍເລື່ອງນີ້ໄດ້ແນວໃດ? ກ່ອນອື່ນພວກເຮົາຈະເປັນຕ້ອງຮູ້ວ່າ ກົດໝາຍຂອງເປີເຊຍກ່າວວ່າກະສັດສາມາດລົງໂທດຜູ້ທີ່ເຮັດຜິດ. ນັ້ນລວມເຖິງຄອບຄົວຂອງເຂົາ. ໃນສະໄໝຂອງພຣະຄຳພີເດີມ ຖ້າຜູ້ໃດຜູ້ໜຶ່ງເຮັດຜິດ ໝົດຄອບຄົວກໍຕ້ອງຮັບຜິດຊອບຕໍ່ຄວາມຜິດຂອງຄົນໆນັ້ນ.

| ວັນສຸກ | 14 ກຸມພາ |
|---|---|

## ຂໍ້ຄິດເພີ່ມເຕີມ

ເຮັບເລີ ບົດທີ11 ຖືກເອີ້ນວ່າ "ຫ້ອງຈາລຶກຊື່ຄົນດັ່ງທີ່ມີຄວາມເຊື່ອທີ່ເຂັ້ມແຂງ." ແລະດ້ວຍເຫດຜົນທີ່ດີ ພຣະທຳບົດນີ້ກໍສະແດງໃຫ້ພວກເຮົາເຫັນຄວາມເຊື່ອແລະວຽກງານອັນຍິ່ງໃຫຍ່ຂອງປະຊາຊົນຂອງພຣະເຈົ້າ. ເຮັບເລີບອກພວກເຮົາວ່າ ຜູ້ຮັບໃຊ້ຂອງພຣະເຈົ້າບາງຄົນ "ໄດ້ປິດປາກສິງໂຕ" (ເຮັບເລີ 11:33). ແນ່ນອນວ່າຂໍ້ພຣະຄຳພີນີ້ສະແດງໃຫ້ພວກເຮົາເຫັນດານີເອນ. ເລື່ອງຂອງດານີເອນນັ້ນເປັນເລື່ອງທີ່ໜ້າອັດສະຈັນ. ໃນເວລາດຽວກັນນັ້ນ ພວກເຮົາຈະຕ້ອງຈື່ວ່າ ບໍ່ແມ່ນຜູ້ທີ່ມີຄວາມເຊື່ອຫຼາຍທຸກຄົນຈະຫຼີກເວັ້ນຄວາມຕາຍຄືກັບດານີເອນ. ເຮັບເລີ ບົດທີ 11

"ກໍຍັງສະແດງໃຫ້ພວກເຮົາເຫັນວ່າ ຫຼາຍຄົນໄດ້ທົນທຸກທໍລະມານຍ້ອນຄວາມເຊື່ອຂອງເຂົາ. ພຣະເຈົ້າໄດ້ຂໍໃຫ້ຜູ້ຮັບໃຊ້ຂອງພຣະອົງນັ້ນເປັນພະຍານສໍາລັບພຣະອົງໂດຍການຕາຍສໍາລັບຄວາມເຊື່ອຂອງເຂົາ. ເລື່ອງຂອງດານີເອນບໍ່ໄດ້ສອນເຮົາວ່າພຣະເຈົ້າຈະຊ່ອຍເຮັດການອັດສະຈັນຢ່າງໃດຢ່າງໜຶ່ງເພື່ອທີ່ຈະຊ່ອຍທຸກໆຄົນຜູ້ທີ່ມີບັນຫາ. ດັ່ງທີ່ພວກເຮົາໄດ້ກ່າວໄວ້ກ່ອນນີ້ວ່າ ຜູ້ຊາຍແລະຜູ້ຍິງຫຼາຍໆຄົນກໍໄດ້ເສຍຊີວິດຍ້ອນຄວາມເຊື່ອທີ່ເຂົາມີໃນພຣະເຢຊູ. ແຕ່ເລື່ອງຂອງດານີເອນນັ້ນກໍສອນກົດອັນສໍາຄັນແກ່ເຮົາຄື: ພຣະເຈົ້າຊົງຄວບຄຸມຢູ່ເໜືອທຸກຢ່າງທີ່ເກີດຂຶ້ນ. ໃນການສະເດັດກັບມາຂອງພຣະອົງ ພຣະອົງຈະຊ່ອຍບຸດຂອງພຣະອົງທຸກຄົນຈາກຄວາມບາບແລະຄວາມຕາຍ. ພວກເຮົາຈະຮຽນຮູ້ຫຼາຍຂຶ້ນກ່ຽວກັບແນວຄິດນີ້ໃນບົດຕໍ່ໆໄປຂອງພຣະທໍາດານີເອນ."

## <u>ຄໍາຖາມຄົ້ນຄວ້າ</u>

1. ທ່ານສະແດງໃຫ້ຄົນອື່ນເຫັນເຖິງຄວາມສັດຊື່ຂອງທ່ານຕໍ່ພຣະເຈົ້າ ແລະຕໍ່ກົດບັນຍັດຂອງພຣະອົງແນວໃດ? ສົມມຸດວ່າ ຄົນອື່ນທີ່ຮູ້ຈັກທ່ານນັ້ນຖືກຖາມຄໍາຖາມນີ້ກ່ຽວກັບທ່ານ: "ລາວ (ຊື່ຂອງທ່ານ) ຈະໝັ້ນຄົງສັດຊື່ຕໍ່ພຣະເຈົ້າ ຫຼືບໍ່ ຖ້າຫາກຄວາມເຊື່ອຂອງລາວຕ້ອງເຮັດໃຫ້ລາວສູນເສຍວຽກງານຂອງລາວ ຫຼື ຊີວິດຂອງລາວ?" ຄົນໆນັ້ນທີ່ຖືກຖາມຈະຕອບວ່າແນວໃດ?

2. ທ່ານເຫັນສິ່ງໃດໃນດານີເອນທີ່ເຮັດໃຫ້ເພິ່ນເປັນຜູ້ຮັບໃຊ້ທີ່ສັດຊື່ຂອງພຣະເຈົ້າ? ເປັນຫຍັງພຣະເຈົ້າຈຶ່ງສາມາດນໍາໃຊ້ເພິ່ນໃນການເຮັດການໃຫຍ່ໃນໂລກນີ້? ດ້ວຍການຊ່ອຍເຫຼືອຂອງພຣະເຈົ້າ ພວກເຮົາສາມາດເຮັດອັນດຽວກັນທີ່ດານີເອນໄດ້ເຮັດແນວໃດ?

# ບົດທີ 8

## ຈາກທະເລທີ່ເຕັມໄປດ້ວຍພາຍຸໄປສູ່ເໝກແຫ່ງຟ້າສະຫວັນ.

**15-21 ກຸມພາ**

**ບ່າຍວັນສະບາໂຕ** **15 ກຸມພາ**

**<u>ອ່ານສໍາລັບບົດຮຽນອາທິດນີ້</u>**

**ດານີເອນ 7; 2 ເທສະໂລນິກ 2:1-12; ມາລະໂກ 13:26; ມັດທາຍ 8:20; ມັດທາຍ 9:6; ລູກາ 9:26.**

**ຂໍ້ຄວນຈໍາ:** *"ອໍານາດແລະຄວາມຍິ່ງໃຫຍ່ຂອງອານາຈັກທັງໝົດໃນແຜ່ນດິນໂລກນັ້ນຈະຖືກມອບໃຫ້ແກ່ປະຊາຊົນຂອງພຣະເຈົ້າອົງສູງສຸດ. ອໍານາດແຫ່ງກະສັດຂອງພວກເຂົາຈະບໍ່ສິ້ນສຸດໄປ ແລະ ບັນດາຜູ້ປົກຄອງທັງໝົດທັງເທິງແຜ່ນດິນໂລກຈະຮັບໃຊ້ແລະເຊື່ອຟັງພວກເຂົາ (ດານາເອນ 7:27)."*

ອາທິດນີ້ ພວກເຮົາຈະມາສຶກສາເລື່ອງຄວາມຝັນໃນພຣະທໍາດານີເອນ ບົດທີ7. ຄວາມຝັນຂອງດານີເອນກໍສະແດງເຖິງຄວາມຈິງອັນດຽວກັນທີ່ຢູ່ໃນຄວາມຝັນຂອງເນບູກາດເນັດຊາໃນພຣະທໍາດານີເອນ ບົດທີ2. ແຕ່ຄວາມຝັນຂອງດານີເອນນັ້ນກໍໃຫ້ຂໍ້ມູນເຮົາຫຼາຍຂຶ້ນ. ຢ່າງທໍາອິດ ດານີເອນໄດ້ເຫັນທະເລ. ຢ່າງທີ2 ສັດທັງຫຼາຍໃນຄວາມຝັນຂອງດານີເອນກໍປົນກັບສັດໂຕອື່ນໆ. ນອກຈາກນັ້ນ ສັດຕ່າງໆທີ່ເຫັນໃນຄວາມຝັນຂອງດານີເອນນັ້ນກໍ່ບໍ່ແມ່ນສັດທີ່ພຣະເຈົ້າໄດ້ສ້າງຕອນທີ່ເນລະມິດສ້າງໂລກນີ້. ຢ່າງທີ3 ສັດຕ່າງໆນີ້ກໍຄວບຄຸມປະຊາຊົນແລະອານາຈັກຕ່າງໆໃນໂລກນີ້. ດັ່ງນັ້ນພວກເຮົາເຫັນໄດ້ວ່າສັດເຫຼົ່ານີ້ກໍລັກເອົາອໍານາດທີ່ພຣະເຈົ້າໄດ້ມອບໃຫ້ແກ່ອາດາມ. ຢ່າງທີ4 ພຣະເຢຊູຜູ້ເປັນພຣະບຸດຂອງພຣະເຈົ້ານັ້ນສະເດັດມາ ແລະ ມອບອານາຈັກຄືນໃຫ້ແກ່ປະຊາຊົນຜູ້ເປັນເຈົ້າຂອງ. ພຣະເຢຊູໄດ້ນໍາເອົາທຸກສິ່ງທຸກຢ່າງທີ່ອາດາມໄດ້ສູນເສຍໃນສວນເອເດນກັບຄືນມາ.

ຂໍ້ມູນນີ້ກໍ່ຊ່ວຍພວກເຮົາໃຫ້ເຫັນເຖິງພາບລວມຂອງສັນຍາລັກຕ່າງໆທີ່ຖືກໃຊ້ໃນຄວາມຝັນຂອງດານີເອນ.

**ວັນອາທິດ 16 ກຸມພາ**

**<u>ສັດສີ່ໂຕ (ດານີເອນ ບົດທີ7)</u>**

**ອ່ານກ່ຽວກັບຄວາມຝັນໃນດານີເອນ ບົດທີ7. ຄວາມຝັນນີ້ກ່ຽວກັບອັນໃດ?**

ທ່ານເຫັນບໍ່ວ່າສັດແຕ່ລະໂຕໃນຄວາມຝັນຂອງດານີເອນກໍສອດຄ່ອງກັບທາດເຫຼັກຕ່າງໆໃນຮູບປັ້ນຂອງ ເນບູກາດເນັດຊາແນວໃດ? ສັດແຕ່ລະໂຕນັ້ນສະແດງໃຫ້ພວກເຮົາເຫັນບາງຢ່າງກ່ຽວກັບອານາຈັກແຕ່ລະອານາຈັກໃນປະຫວັດສາດ.

**ສິງ:** ສິງ ແມ່ນຄຳທີ່ພັນລະນາພາບຂອງບາບີໂລນ.

**ໝີ:** ໝີ ສະແດງເຖິງອານາຈັກ ມີໂດ-ເປີເຊຍ

**ເສືອດາວ**: ເສືອດາວນັ້ນສະແດງໃຫ້ພວກເຮົາເຫັນອານາຈັກກຣີກ ເຊິ່ງຖືກລິເລີ່ມໂດຍອາເລັກແຊນເດີ. ເສືອດາວນັ້ນກໍມີສີ່ປີກ. ພວກເຂົາສະແດງໃຫ້ເຫັນວ່າອາເລັກແຊນເດີນັ້ນຂຶ້ນມາກຳອຳນາດຢ່າງວ່ອງໄວ. ໃນເວລາ 2-3 ປີ ອາເລັກແຊນເດີໄດ້ຄວບຄຸມອານາຈັກທີ່ຍິ່ງໃຫຍ່ທັງຫຼາຍເທິງໂລກນີ້.

**ສັດທີ່ມີແຂ້ວເຫຼັກ:** ທ່ານເຫັນຫຼືບໍ່ວ່າ ດານີເອນກ່າວວ່າສັດສາມໂຕທຳອິດນັ້ນມີໜ້າຕາຄືກັບສິງໂຕ, ໂຕໝີ ຫຼື ເສືອດາວ? ອານາຈັກທີ4 ບໍ່ຄືກັບອານາຈັກໃດທີ່ມາກ່ອນນັ້ນ. ດັ່ງນັ້ນ ສັດທີ່ສະແດງໃຫ້ພວກເຮົາເຫັນອານາຈັກທີ4 ນັ້ນກໍຕ່າງຈາກອານາຈັກອື່ນໆທີ່ພວກເຮົາຮູ້ຈັກ. ສັດໂຕທີ 4 ນີ້ມີເຂົາຫຼາຍອັນ. ມັນມີຄວາມຊົ່ວຮ້າຍແລະກໍໜ້າລັງກຽດຫຼາຍກວ່າສັດໂຕອື່ນໆກ່ອນໜ້ານີ້. ການປະພຶດແບບນີ້ຈຶ່ງເຮັດໃຫ້ສັດໂຕທີ 4 ນີ້ເປັນຄຳທີ່ພັນລະນາພາບຂອງອານາຈັກໂລມັນຢ່າງສົມບູນແບບ. ໂຣມນັ້ນໄດ້ຕໍ່ສູ້ສົງຄາມຫຼາຍເທື່ອ. ມັນໄດ້ຢຽບອານາຈັກອື່ນໃຫ້ຈົມລົງດ້ວຍຕີນຂອງມັນ. ດ້ວຍວິທີການນີ້ ມັນໄດ້ຄວບຄຸມໂລກທັງໝົດໄວ້.

<u>ເຂົານ້ອຍ (ດານີເອນ 7:7,8,19-25)</u>

**ອ່ານກ່ຽວກັບອຳນາດຂອງເຂົານ້ອຍໃນພຣະທຳ ດານີເອນ 7:7,8,19-25. ອຳນາດຂອງເຂົານ້ອຍນັ້ນມາຈາກສັດໂຕທີສີ່ແລະກໍສືບຕໍ່ເປັນສ່ວນໜຶ່ງຂອງສັດໂຕນີ້. ແມ່ນໃຜຄືອຳນາດຂອງເຂົານ້ອຍ?**

ດັ່ງນັ້ນ ເຂົານ້ອຍກໍຄືອີກຮູບຮ່າງໜຶ່ງຂອງອານາຈັກໂລມັນໃນເວລາຕໍ່ມາໃນປະຫວັດສາດ.

ດານີເອນເຫັນເຂົານ້ອຍຕໍ່ສູ້ກັບປະຊາຊົນຂອງພຣະເຈົ້າ. ທູດສະຫວັນໄດ້ບອກດານີເອນວ່າ ເຂົານ້ອຍນັ້ນກໍຄືກະສັດອົງໜຶ່ງ ເພິ່ນຈະເຮັດສາມຢ່າງຄື: 1. ເພິ່ນຈະເວົ້າໂອ້ອວດ ແລະ ກ່າວສິ່ງຕ່າງໆຕໍ່ສູ້ພຣະເຈົ້າ. 2. ເພິ່ນຈະທຳລາຍປະຊາຊົນຂອງພຣະເຈົ້າ. ແລະ 3. ເພິ່ນຈະພະຍາຍາມປ່ຽນແປງເວລາ ແລະ ກົດບັນຍັດທີ່ພຣະເຈົ້າໄດ້ມອບໃຫ້. ເມື່ອສິ່ງນີ້ເກີດຂຶ້ນປະຊາຊົນຂອງພຣະເຈົ້າກໍ່ຈະຢູ່ພາຍໃຕ້ການຄວບຄຸມຂອງເພິ່ນ “ເປັນເວລາສາມປີເຄິ່ງ” (ດານີເອນ 7:25). ຄຳວ່າ “ເວລາ” ນັ້ນກໍຄືກັບເວລາ “ໜຶ່ງປີ..” ດັ່ງນັ້ນ “ຄຳວ່າເວລາເປັນຈຳນວນຫຼາຍກໍຄືກັບເວລາ” “ສອງປີ” ແລະ “ເຄິ່ງເວລາ” ເທົ່າກັບຫົກເດືອນ ຫຼື ເຄິ່ງປີ. ຄັນຊັ້ນແລ້ວເວລາສາມປີເຄິ່ງນັ້ນກໍເທົ່າກັບເວລາຈັກປີແທ້ໃນຂ່າວສານອັນພິເສດນີ້? ເມື່ອພວກເຮົານຳໃຊ້ກົດ ໜຶ່ງປີເທົ່າກັບໜຶ່ງມື້ (ຈົດເຊັນບັນຊີ 14:34; ເອເສກຽນ 4:6), ແລ້ວເວລາສາມປີເຄິ່ງກໍຈະເທົ່າກັບ ເວລາແທ້ 1260 ປີ. ໃນຊ່ວງເວລານີ້ ເຂົານ້ອຍກໍຈະເຮັດສົງຄາມຕໍ່ສູ້ພຣະເຈົ້າ ແລະ ພະຍາຍາມທີ່ຈະປ່ຽນແປງກົດຂອງພຣະເຈົ້າ.

**ໃຫ້ທ່ານອ່ານກ່ຽວກັບຜູ້ຊົ່ວຮ້າຍໃນ 2 ເທສະໂລນີກ 2:12. ພວກເຮົາເຊື່ອວ່າຜູ້ຊົ່ວຮ້າຍນັ້ນແມ່ນໃຜ ແລະ ເປັນຫຍັງຈຶ່ງເຊື່ອແບບນັ້ນ? ຜູ້ຊົ່ວຮ້າຍນັ້ນຄືກັບເຂົານ້ອຍນີ້ແນວໃດ?**

**ການພິພາກສາຂອງພຣະເຈົ້າ (ດານິເອນ 7:13, 14, 21,22, 26, 27)**

ທ່ານເຫັນຫຼືບໍ່ວ່າວຽກງານຂອງພຣະເຈົ້າໃນຖານະເປັນຜູ້ພິພາກສານັ້ນກໍເກີດຂຶ້ນຫຼັງຈາກ ເວລາ 1260 ປີ ໄດ້ສິ້ນສຸດລົງ? ພວກເຮົາເຫັນຂໍ້ມູນນີ້ສາມເທື່ອໃນຄວາມຂອງດານິເອນ:

- **ອຳນາດເຂົານ້ອຍ (ປີ ຄສ 538-1798)**
- **ວຽກງານຂອງພຣະເຈົ້າໃນຖານະເປັນຜູ້ພິພາກສາໃນສະຫວັນ**
- **ອານາຈັກອັນຕະຫຼອດໄປເປັນນິດຂອງພຣະເຈົ້າ**

**ອ່ານກ່ຽວກັບວຽກງານຂອງພຣະເຈົ້າໃນຖານະເປັນຜູ້ພິພາກສາໃນພຣະທຳດານິເອນ 7:13, 14, 21, 22, 26, 27. ວຽກງານຂອງພຣະເຈົ້າຊ່ວຍປະຊາຊົນຂອງພຣະອົງແນວໃດ?**

ພຣະຄຳພີເດີມສະແດງໃຫ້ພວກເຮົາເຫັນຕົວຢ່າງຂອງວຽກງານຂອງພຣະເຈົ້າໃນຖານະເປັນຜູ້ພິພາກສາໃນຖິ່ນກັນດານ ແລະ ໃນພຣະວິຫານຂອງພຣະອົງ. ແຕ່ວຽກງານການເປັນຜູ້ພິພາກສາຂອງພຣະອົງໃນດານິເອນນັ້ນກໍມີຄວາມແຕກຕ່າງ. ດານິເອນ ບົດທີ7 ສະແດງໃຫ້ເຫັນວຽກງານການພິພາກສາມະນຸດທຸກຄົນ ແລະອຳນາດທຸກອຳນາດເທິງໂລກນີ້. ດັ່ງນັ້ນ ພຣະເຈົ້າຈະຕັດສິນການກະທຳຂອງເຂົານ້ອຍ. ນອກຈາກນັ້ນ ພຣະເຈົ້າຍັງຈະມອບອານາຈັກໃຫ້ແກ່ປະຊາຊົນຂອງພຣະອົງ.

ດານິເອນບໍ່ໄດ້ບອກພວກເຮົາຢ່າງລະອຽດວ່າ ວຽກງານການພິພາກສາຂອງພຣະເຈົ້າຈະເລີ່ມຕົ້ນຫຼືຢຸດເວລາໃດ. ແຕ່ພວກເຮົາຈະເຫັນວ່າພຣະເຈົ້າຈະເລີ່ມວຽກງານຂອງພຣະອົງຍ້ອນການໂຈມຕີຂອງເຂົານ້ອຍຕໍ່ປະຊາຊົນຂອງພຣະອົງ. ວຽກງານຂອງພຣະເຈົ້ານັ້ນຈະເກີດຂຶ້ນທົ່ວໂລກ. ໃນດານິເອນ ບົດທີ8ແລະ9 ນັ້ນພວກເຮົາຈະຮຽນຮູ້ວ່າ ວຽກງານການພິພາກສາຈະເລີ່ມຂຶ້ນເມື່ອໃດ. ນອກຈາກ

ນັ້ນພວກເຮົາຍັງຈະເຫັນວ່າວຽກງານຂອງພຣະເຈົ້າລວມເຖິງການຊຳລະລ້າງຄວາມບາບອອກຈາກພຣະວິຫານໃນສະຫວັນ. ດັ່ງນັ້ນ ດານີເອນ ບົດທີ 7 ຈຶ່ງສອນພວກເຮົາກ່ຽວກັບວຽກງານຂອງພຣະເຈົ້າໃນຖານະເປັນຜູ້ພິພາກສາໃນສະຫວັນກ່ອນການສະເດັດກັບມາ.

**ວັນພຸດ 19 ກຸມພາ**

**ການສະເດັດມາຄັ້ງທີສອງ (ດານີເອນ 7:13)**

**ອ່ານກ່ຽວກັບບຸດມະນຸດໃນດານີເອນ 7:13. ແມ່ນໃຜຄືບຸດມະນຸດ? ທ່ານຮູ້ໄດ້ແນວໃດ? (ສຳລັບຄຳຕອບ, ໃຫ້ອ່ານພຣະທຳ ມາລະໂກ 13:26, ມັດທາຍ 8:20; ມັດທາຍ 9:6; ລູກາ 9:26; ແລະ ລູກາ 12:8).**

ໃນຂະນະທີ່ພຣະເຈົ້າຈະເລີ່ມວຽກງານການພິພາກສາກໍມີຄົນທີສຳຄັນທີ່ສຸດຄົນໜຶ່ງເຂົ້າມາໃນຫ້ອງພິພາກສາ. ນັ້ນກໍຄືບຸດມະນຸດ. ບຸດມະນຸດນັ້ນຄືຜູ້ໜຶ່ງທີ່ມາຈາກສະຫວັນ ແຕ່ຄືຊື່ຂອງເພິ່ນໄດ້ບອກນັ້ນ ເພິ່ນກໍມີບາງຢ່າງໃນໂຕເພິ່ນທີ່ເປັນມະນຸດ. ເພິ່ນໄດ້ມາມີສ່ວນຮ່ວມໃນວຽກງານຂອງພຣະເຈົ້າໃນການເປັນຜູ້ພິພາກສາ. ຢ່າງທີສອງຄື ບຸດມະນຸດນັ້ນຈະສະເດັດມາດ້ວຍເມກຂອງຟ້າສະຫວັນ. ເມກເຫຼົ່ານີ້ກໍເປັນຮູບພາບພັນລະນາໃນພຣະຄຳພີໃໝ່ສຳລັບການສະເດັດມາຄັ້ງທີສອງ. ທ່ານເຫັນຫຼືບໍ່ວ່າໃນດານີເອນ 7:13 ນັ້ນ ບຸດມະນຸດບໍ່ໄດ້ມາຈາກສະຫວັນໄປສູ່ໂລກ? ບໍ່ແມ່ນເພາະພຣະອົງໄດ້ຍ້າຍຈາກບ່ອນໜຶ່ງໄປສູ່ອີກບ່ອນໜຶ່ງໃນສະຫວັນ. ພຣະອົງມາຈາກໜ້າພຣະພັກຂອງພຣະບິດາ. ຢ່າງທີສາມຄື ການທີ່ມະນຸດນັ້ນມາດ້ວຍກ້ອນເມກຂອງຟ້າສະຫວັນກໍສະແດງໃຫ້ພວກເຮົາເຫັນບາງຢ່າງທີ່ສຳຄັນກ່ຽວກັບການສະເດັດມາຄັ້ງທີສອງ. ເມື່ອບຸດມະນຸດຂອງພຣະເຈົ້າສະເດັດກັບມາ ທຸກໆຄົນໃນໂລກກໍຈະເຫັນພຣະອົງ. ເມກແຫ່ງສະຫວັນກໍ່ຈະຊ່ວຍໃຫ້ພວກເຮົາຈື່ ປະໂລຫິດໃຫຍ່ ຫຼື ຜູ້ນຳທີ່ໃຫຍ່ທີ່ສຸດໃນພຣະຄຳພີເດີມ. ປະໂລຫິດໃຫຍ່ນັ້ນໄດ້ເຂົ້າໄປໃນຫ້ອງບໍລິສຸດທີ່ສຸດໃນທ້າຍປີເພື່ອນຳເອົາຄວາມບາບອອກຈາກພຣະວິຫານຂອງພຣະເຈົ້າ.

ບຸດຂອງມະນຸດກໍຍັງເປັນກະສັດ. ພຣະເຈົ້າ ພຣະບິດາໄດ້ມອບອານາຈັກແລະອຳນາດໃຫ້ແກ່ພຣະອົງ.

**ວັນພະຫັດ 20 ກຸມພາ**

**ຜູ້ບໍລິສຸດຂອງພຣະເຈົ້າ (ດານີເອນ 7:18, 21, 22, 25, 27).**

**ອ່ານກ່ຽວກັບປະຊາຊົນຂອງພຣະເຈົ້າໃນພຣະທຳ ດານີເອນ 7:18, 21, 22, 25, 27. ແມ່ນຫຍັງເກີດຂຶ້ນຕໍ່ພວກເຂົາ?**

"ປະຊາຊົນຂອງພຣະເຈົ້າອົງສູງສຸດ" (ດານີເອນ 7:18) ຄືຊື່ຂອງປະຊາຊົນຂອງພຣະເຈົ້າ. ປະຊາຊົນຜູ້ບໍລິສຸດຂອງພຣະເຈົ້ານັ້ນກໍສັດຊື່ຕໍ່ພຣະຄຳຂອງພຣະອົງນັ້ນເປັນເຫດຜົນທີ່ເຂົານ້ອຍນັ້ນທຳລາຍພວກເຂົາ. ເຂົານ້ອຍຄືຄຳໜຶ່ງທີ່ພັນລະນາພາບສຳລັບໂບດໂລມັນກາໂຕລິກ. ແມ່ນແລ້ວ ອານາຈັກໂລມັນ (ອຳນາດຂອງສັດໂຕທີ 4) ກໍທຳຮ້າຍຄຣິດສຕຽນເຊັ່ນດຽວກັນ. ແຕ່ໃນດານີເອນ 7:25 ການໂຈມຕີຫຼືຈູ່ໂຈມປະຊາຊົນຂອງພຣະເຈົ້ານັ້ນກໍມາຈາກເຂົານ້ອຍ. ເຂົານ້ອຍກໍຂຶ້ນມາສູ່ອຳນາດຫຼັງຈາກທີ່ອານາຈັກໂລມັນນັ້ນສິ້ນສຸດລົງ.

ປະຊາຊົນຂອງພຣະເຈົ້າຈະບໍ່ທໍລະມານຕະຫຼອດໄປ. ອານາຈັກຂອງພຣະເຈົ້າຈະແທນທີ່ອານາຈັກທັງໝົດໃນໂລກ. ໃຫ້ເຮົາມາເບິ່ງບາງຢ່າງທີ່ໜ້າສົນໃຈກ່ຽວກັບອານາຈັກ. ໃນຄວາມຝັນຂອງດານີເອນພວກເຮົາເຫັນວ່າບຸດມະນຸດໄດ້ຮັບ "ສິດອຳນາດ, ກຽດຕິຍົດ ແລະ ອຳນາດແຫ່ງການເປັນໃຫຍ່... ແລະອານາຈັກ" (ດານີເອນ 7:14) ແຕ່ແມ່ນຫຍັງເກີດຂຶ້ນເມື່ອທູດສະຫວັນໄດ້ອະທິບາຍຄວາມຝັນແກ່ດານີເອນ? ທູດສະຫວັນກ່າວວ່າ "ປະຊາຊົນ" ຂອງພຣະເຈົ້າໄດ້ຮັບອານາຈັກ (ດານີເອນ 7:18) ແມ່ນໃຜໄດ້ເວົ້າຜິດ? ດານີເອນ ຫຼື ທູດສະຫວັນ? ທັງສອງກໍ່ກ່າວຢ່າງຖືກຕ້ອງ! ບຸດມະນຸດກໍຄືພຣະເຈົ້າ. ນອກຈາກນັ້ນພຣະອົງຍັງຊົງເປັນສ່ວນໜຶ່ງຂອງຄອບຄົວມະນຸດ. ດັ່ງນັ້ນ ເມື່ອພຣະອົງໄດ້ຮັບໄຊຊະນະແລ້ວປະຊາຊົນຂອງພຣະເຈົ້າກໍໄດ້ຮັບໄຊຊະນະເຊັ່ນດຽວກັນ.

## ຂໍ້ຄິດເພີ່ມເຕີມ

"ມະນຸດບໍ່ສາມາດຕອບໂຕ້ການໂຈມຕີຂອງຊາຕານດ້ວຍພະລັງອຳນາດຂອງຕົນເອງ. ຊາຕານໄດ້ກ່າວຫາມະນຸດວ່າໄດ້ເຮັດຜິດບາບ. ມະນຸດກໍຢືນຕໍ່ໜ້າພຣະເຈົ້າ. ມະນຸດໄດ້ສວມເສື້ອຜ້າທີ່ເປິເປື້ອນໄປດ້ວຍຄວາມຜິດບາບຂອງຕົນເອງ. ລາວໄດ້ສາລະພາບຄວາມຜິດບາບຂອງຕົນເອງ ແຕ່ພຣະເຢຊູກໍຄືທະນາຍຂອງມະນຸດທີ່ຢູ່ໃນຫ້ອງພິພາກສາໃນສະຫວັນ. ພຣະເຢຊູໄດ້ຂໍໃຫ້ພຣະເຈົ້າສະແດງຄວາມເມດຕາຕໍ່ທຸກໆຄົນທີ່ໄດ້ຫັນໜີຈາກຄວາມບາບເພື່ອໄປຫາພຣະອົງໃນຄວາມເຊື່ອ. ພຣະເຢຊູໄດ້ຂໍໃຫ້ພຣະເຈົ້າໃຫ້ອະໄພຄົນເຫຼົ່ານີ້ແລະໃຫ້ພຣະເຈົ້າລະນຶກເຖິງທຸກສິ່ງທຸກຢ່າງທີ່ພຣະອົງໄດ້ເຮັດສຳລັບຄົນບາບຢູ່ຄາວາລີ. ນັ້ນເປັນວິທີທີ່ພຣະເຢຊູໄດ້ຮັບໄຊຊະນະຕໍ່ຊາຕານໃນທຸກໆເວລາ. ການເຊື່ອຟັງຂອງພຣະເຢຊູຕໍ່ກົດບັນຍັດຂອງພຣະອົງກໍສົມບູນ. ການກະທຳອັນສົມບູນຂອງພຣະອົງກໍໃຫ້ອຳນາດທັງໝົດໃນສະຫວັນແລະໃນແຜ່ນດິນໂລກໃຫ້ແກ່ພຣະອົງ. ດັ່ງນັ້ນ ພຣະເຢຊູຈິ່ງຂໍໃຫ້ພຣະບິດານັ້ນມີຄວາມເມດຕາຕໍ່ມະນຸດທີ່ມີຄວາມຜິດ. ພຣະເຢຊູນັ້ນໄດ້ນຳມະນຸດກັບມາຫາພຣະເຈົ້າ.... ເສກາລິຢາ 3:4" (ປື້ມທ່ານນາງເອເລັນຈີໄວທ໌)

## ຄຳຖາມຄົ້ນຄວ້າ

1, ໃຫ້ທ່ານເບິ່ງຂໍ້ມູນທີ່ຊັດເຈນທັງໝົດທີ່ພວກເຮົາໄດ້ຮຽນຮູ້ໃນອາທິດນີ້ກ່ຽວກັບເຂົານ້ອຍ. ເປັນຫຍັງຂໍ້ມູນນີ້ຈິ່ງຊ່ວຍປ້ອງກັນພວກເຮົາຈາກແນວຄິດທີ່ຜິດໆກ່ຽວກັບວ່າອຳນາດນີ້ແມ່ນຜູ້ໃດ?

# ບົດທີ 9

## ຈາກຄວາມເປິເປື້ອນສູ່ຄວາມສະອາດບໍລິສຸດ

**(22-28 ກຸມພາ 2019)**

**ບ່າຍວັນສະບາໂຕ** **22 ກຸມພາ**

**ອ່ານສໍາລັບບົດຮຽນອາທິດນີ້**

**ດານີເອນ ບົດທີ 8; ເຮັບເລີ 9:23-28. (ນອກນັ້ນໃຫ້ທ່ານອ່ານ ດານີເອນ ບົດທີ2 ແລະ ດານີເອນ ບົດທີ 7)**

**ຂໍ້ຄວນຈໍາ:** *"ຂ້າພະເຈົ້າໄດ້ຍິນເທວະດາອີກຕົນໜຶ່ງຕອບວ່າ," ເຫດການນີ້ຈະດໍາເນີນຕໍ່ໄປເປັນເວລາ 1150 ວັນ ໃນເວລານີ້ຈະບໍ່ມີການຖວາຍເຄື່ອງບູຊາຍາມແລງ ແລະ ຍາມເຊົ້າ. ແລ້ວພຣະວິຫານຈະໄດ້ຖືກສ້າງຂຶ້ນໃໝ່." (ດານີເອນ 8:14)*

ໃນປີ 548/547 ກ່ອນຄ.ສ ພຣະເຈົ້າໄດ້ໃຫ້ຄວາມຝັນອີກຢ່າງໜຶ່ງແກ່ດານີເອນ. ພວກເຮົາສາມາດອ່ານກ່ຽວກັບຄວາມຝັນນັ້ນ ໃນດານີເອນ ບົດທີ8. ຄວາມຝັນນີ້ກໍໃຫ້ຂໍ້ມູນຫຼາຍຂຶ້ນກ່ຽວກັບວຽກງານຂອງພຣະເຈົ້າໃນຖານະທີ່ພຣະອົງເປັນຜູ້ພິພາກສາໃນດານີເອນ ບົດທີ7. ທ່ານຈະຈື່ວ່າ ຄວາມຝັນໃນພຣະທໍາດານີເອນ ບົດທີ2 ແລະ ບົດທີ7 ເລີ່ມຕົ້ນດ້ວຍບາບີໂລນ. ແຕ່ຄວາມຝັນໃນດານີເອນ ບົດທີ8 ກໍບໍ່ມີບາບີໂລນ ແລະໄດ້ເລີ່ມຕົ້ນດ້ວຍອານາຈັກມີເດຍ-ເປີເຊຍ. ພວກເຮົາຈະເຫັນວ່າຄວາມຝັນໃນພຣະທໍາດານີເອນ ບົດທີ8 ກໍໃຫ້ຂໍ້ມູນອັນດຽວກັນແກ່ພວກເຮົາຄືກັບດານີເອນ ບົດທີ7. ແມ່ນແລ້ວ ຮູບທີ່ພັນລະນາພາບໃນດານີເອນ ບົດທີ8 ກໍມີການປ່ຽນແປງ. ນັ້ນກໍເປັນເພາະວ່າດານີເອນ ບົດທີ8 ນັ້ນສະແດງໃຫ້ພວກເຮົາເຫັນວ່າພຣະເຈົ້າຈະຊໍາລະພຣະວິຫານໃນສະຫວັນຈາກຄວາມຜິດບາບ. ດັ່ງນັ້ນ ດານີເອນ ບົດທີ8 ຈຶ່ງກ່າວກ່ຽວກັບສິ່ງທີ່ເກີດຂຶ້ນໃນພຣະວິຫານຂອງພຣະເຈົ້າໃນສະຫວັນໃນຊ່ວງຍຸກສຸດທ້າຍ. ແຕ່ດານີເອນ ບົດທີ7 ກໍສະແດງໃຫ້ພວກເຮົາເຫັນຫ້ອງພິພາກ

ສາ . ນອກຈາກນັ້ນ ກໍຍັງສະແດງໃຫ້ ພວກເຮົາເຫັນບຸດມະນຸດຮັບເອົາອານາຈັກ. ດານີເອນ ບົດທີ8 ສະແດງໃຫ້ເຫັນວ່າພຣະເຈົ້າຈະຊໍາລະພຣະວິຫານໃນສະຫວັນໃຫ້ສະອາດບໍລິສຸດ. ດັ່ງນັ້ນ ພວກເຮົາເຫັນວ່າວຽກງານຂອງພຣະເຈົ້າໃນການຊໍາລະພຣະວິຫານເທິງສະຫວັນໃນດານີເອນບົດທີ 8 ນັ້ນ ກໍເຊື່ອມໂຍງກັບວຽກງານຂອງເພິ່ນໃນຖານະເປັນຜູ້ພິພາກສາໃນດານີເອນ ບົດທີ7.

## ວັນອາທິດ 22 ກຸມພາ

<u>ແກະໂຕຜູ້ ແລະ ແບ້ (ດານີເອນ ບົດທີ 8)</u>

**ໃຫ້ທ່ານອ່ານເລື່ອງຄວາມຝັນໃນພຣະທໍາ ດານີເອນ ບົດທີ8. ຄວາມຝັນນີ້ແມ່ນກ່ຽວກັບອັນໃດ? ມັນສະແດງໃຫ້ພວກເຮົາເຫັນຫຼາຍຢ່າງທີ່ພວກເຮົາໄດ້ເຫັນແລ້ວໃນພຣະທໍາດານີເອນ ບົດທີ2 ແລະ ບົດທີ7 ແນວໃດ?**

ໃນຄວາມຝັນນັ້ນ ດານີເອນເຫັນແກະໂຕຜູ້ທີ່ມີເຂົາສອງອັນ. ແກະນັ້ນກໍມຸ່ງໜ້າໄປສູ່ສາມທິດຄື: ທິດຕາເວັນຕົກ, ທິດເໜືອ ແລະ ທິດໃຕ້ (ດານີເອນ 8:14). ທູດສະຫວັນກໍອະທິບາຍວ່າ ແກະໂຕຜູ້ນັ້ນກໍສະແດງໃຫ້ເຫັນອານາຈັກມີເດຍ-ເປີເຊຍ. ສາມທິດນີ້ກໍສະແດງໃຫ້ພວກເຮົາເຫັນອານາຈັກສາມແຫ່ງທີ່ມີເດຍ-ເປີເຊຍນັ້ນ ເອົາຊະນະໃນສົງຄາມ.

ຕໍ່ມາ ດານີເອນໄດ້ເຫັນໂຕແບ້ໂຕໜຶ່ງທີ່ມີເຂົາໃຫຍ່. ແບ້ກໍຄືອານາຈັກກຣີກ. ເຂົາໃຫຍ່ນັ້ນ ກໍສະແດງເຖິງກະສັດອາເລັກແຊນເດີ (ດານີເອນ 8:21). ທ່ານເຫັນຫຼືບໍ່ວ່າແບ້ນັ້ນກໍເຄື່ອນໄປຢ່າງໄວຈົນວ່າ "ຕີນບໍ່ຕິດດິນ" (ດານີເອນ 8:5)? ນັ້ນກໍສະແດງໃຫ້ເຫັນວ່າ ອານາຈັກຂອງອາເລັກແຊນເດີກໍຂະຫຍາຍກວ້າງອອກໄປຢ່າງໄວວາ. ນັ້ນເປັນເຫດຜົນທີ່ດານີເອນ ບົດທີ7 ສະແດງໃຫ້ເຮົາເຫັນກອງທັບຂອງອາເລັກແຊນເດີ ຄືກັບ ເສືອດາວທີ່ມີປີກ. ດານີເອນ ບົດທີ8 ກໍສະແດງໃຫ້ພວກເຮົາເຫັນສິ່ງທີ່ຈະເກີດກັບໂຕແບ້ຕໍ່ໄປ (ປະເທດກຣີກ)" ແລະໃນເວລາທີ່ມັນມີອໍານາດແຂງຫຼາຍນັ້ນ ເຂົາຂອງມັນໄດ້ຫັກອອກ" (ດານີເອນ 8:8). ແລ້ວເຂົາສີ່ອັນກໍປົ່ງອອກມາຈາກຫົວຂອງແບ້ໂຕນັ້ນ. ມັນສະແດງເຖິງສິ່ງໃດ? ມັນກໍສະແດງໃຫ້ເຫັນ

ວ່າອາເລັກແຊນເດີ (ເຂົາອັນໃຫຍ່) ເສຍຊີວິດລົງ. ເພິ່ນໄດ້ເສຍຊີວິດໃນອານາຈັກບາບີໂລນໃນເດືອນມິຖຸນາ ປີ 323 ກ່ອນຄ.ສ. ແລ້ວອານາຈັກຂອງເພິ່ນກໍແຕກແຍກມາ. ຜູ້ນໍາທະຫານທັງສີ່ຄົນ (ເຂົາສີ່ອັນ) ນັ້ນກໍຄວບຄຸມແຕ່ລະສ່ວນໄວ້.

## ວັນຈັນ 24 ກຸມພາ

**<u>ເຂົານ້ອຍລຸກຂຶ້ນມາສູ່ອໍານາດ (ດານີເອນ 8:8-12)</u>**

**ອ່ານ ດານີເອນ 8:8-12 ໃຫ້ລະອຽດ. ເຂົານ້ອຍນີ້ເຄື່ອນໄຫວແນວໃດ? ເປັນຫຍັງຂໍ້ມູນນີ້ຈຶ່ງສໍາຄັນ?**

ພຣະຄໍາພີສະແດງໃຫ້ພວກເຮົາເຫັນວ່າເຂົານ້ອຍນີ້ ເລີ່ມຕົ້ນດ້ວຍການເຄື່ອນຜ່ານໂລກນີ້. ສາມທິດນີ້ກໍສະແດງເຖິງສາມເຂດໃນໂລກນີ້ທີ່ໂຣມໄດ້ມີອໍານາດຄວບຄຸມ.

ແລ້ວເຂົານ້ອຍກໍຍ້າຍເຄື່ອນຂຶ້ນໄປຫາສະຫວັນ. ມັນປະພຶດຄືກັບເຂົານ້ອຍໃນດານີເອນ ບົດທີ7. ເຂົາທັງສອງອັນ (1) ມີຂະໜາດທີ່ນ້ອຍໃນເບື້ອງຕົ້ນ (ດານີເອນ 7:8, ດານີເອນ 8:9). (2) ເຂົາທັງສອງອັນໄດ້ມີອໍານາດຫຼາຍຂຶ້ນຕໍ່ມາ (ດານີເອນ 7:20; ດານີເອນ 8:9). (3) ເຂົາທັງສອງອັນກໍທໍາຮ້າຍປະຊາຊົນ (ດານີເອນ 7:21,25; ດານີເອນ 8:10,24). ເຂົາທັງສອງອັນກໍໂອ້ອວດຕົນເອງ (ດານີເອນ 7:8,20,25; ດານີເອນ 8:10,11,25). (5) ເຂົາທັງສອງອັນກໍທໍາຮ້າຍປະຊາຊົນພິເສດຂອງພຣະເຈົ້າ (ດານີເອນ 7:25, ດານີເອນ 8:24). ເຂົາທັງສອງອັນເຮັດວຽກໃນໄລຍະເວລາໜຶ່ງ (ດານີເອນ 7:25, ດານີເອນ 8:13,14). (7) ເຂົາທັງສອງອັນສືບຕໍ່ຈົນຮອດຍຸກສຸດທ້າຍ (ດານີເອນ 7:25, 26; ດານີເອນ 8:17, 19). (8) ເຂົາທັງສອງອັນຈະຖືກທໍາລາຍໂດຍພຣະເຈົ້າ (ດານີເອນ 7:11, 26; ດານີເອນ 8:25). ດັ່ງທີ່ພວກເຮົາໄດ້ເຫັນແລ້ວວ່າ ເຂົານ້ອຍໃນພຣະທໍາດານີເອນບົດທີ7 ສະແດງໃຫ້ເຮົາເຫັນຄຣິສຕະຈັກໂຣມັນກາໂຕລິກ. ເຂົານ້ອຍໃນດານີເອນບົດທີ8 ກໍສະແດງໃຫ້ພວກເຮົາເຫັນອໍານາດອັນດຽວກັນນີ້. ດັ່ງນັ້ນ ໃນດານີເອນບົດທີ2, ບົດທີ7 ແລະ ບົດທີ 8, ອໍານາດອັນສຸດທ້າຍໃນໂລກນີ້ນັ້ນກໍຄືໂຣມເຊິ່ງ

ມາໃນຮູບແບບຂອງອານາຈັກໂລມັນກ່ອນແລ້ວຕໍ່ມາກໍກາຍເປັນໂບດໂຣມັນກາໂຕລິກ.

## ວັນອັງຄານ 25 ກຸມພາ

<u>ການໂຈມຕີພຣະວິຫານຂອງພຣະເຈົ້າໃນສະຫວັນ (ດານີເອນ 8:10-12)</u>

**ອ່ານກ່ຽວກັບການກະທຳຂອງເຂົານ້ອຍໃນດານີເອນ 8:10-12. ເຂົານ້ອຍເຮັດສິ່ງໃດໃນຂໍ້ພຣະຄຳພີເຫຼົ່ານີ້?**

ໃນດານີເອນ ບົດທີ8:11, ເຂົານ້ອຍນັ້ນຢຸດການຖວາຍບູຊາປະຈຳວັນ ຫຼື ການເຜົາເຄື່ອງຖວາຍເຊິ່ງຖວາຍແດ່ພຣະເຈົ້າ. ໃນພຣະວິຫານສະໄໝພຣະຄຳພີເດີມ ເຄື່ອງຖວາຍເຫຼົ່ານີ້ກໍເປັນຄຳທີ່ພັນລະນາພາບ. ພວກມັນສະແດງໃຫ້ເຫັນວຽກງານທີ່ພຣະເຢຊູໄດ້ເຮັດເພື່ອຊ່ອຍຄົນບາບໃຫ້ລອດ. ພຣະອົງຊົງອະໄພຄວາມຜິດບາບ. ພຣະອົງຈະຊຳລະລ້າງບາບຈາກພຣະວິຫານເຊັ່ນດຽວກັນ. ດັ່ງນັ້ນ ດານີເອນຈຶ່ງສະແດງໃຫ້ເຫັນວ່າ ໂບດໂລມັນກາໂຕລິກນັ້ນຈະມາແທນວຽກງານຂອງພຣະເຢຊູໃນສະຫວັນໂດຍວຽກງານທີ່ເຮັດໂດຍຜູ້ນຳທີ່ສັກສິດໃນໂລກນີ້. ໃນທາງນີ້ ເຂົານ້ອຍຈະນຳວຽກງານຂອງພຣະເຢຊູໃນສະຫວັນອອກໄປ ແລະ ຖິ້ມວຽກງານທີ່ພຣະອົງຊົງກະທຳສຳລັບພວກເຮົາເອົາໄວ້ໃນພຣະວິຫານຂອງສະຫວັນ. "ຄວາມຈິງຖືກຖິ້ມລົງພື້ນດິນ. ເຂົານ້ອຍໄດ້ເຮັດສິ່ງເຫຼົ່ານີ້ແລະກໍໄດ້ຮັບຄວາມສຳເລັດຢ່າງຫຼາຍ. ພຣະເຈົ້າບອກວ່າ ພຣະອົງຊົງເປັນຄວາມຈິງ (ໂຢຮັນ 14:6). ພຣະຄຳພີຄືຄວາມຈິງເຊັ່ນດຽວກັນ (ໂຢຮັນ 17:17). ໂບດໂລມັນກາໂຕລິກບໍ່ໄດ້ອະນຸຍາດໃຫ້ພຣະຄຳພີຖືກຂຽນເປັນພາສາຂອງປະຊາຊົນທັງຫຼາຍໃນສະໄໝຂອງຍຸກກາງ. ມີແຕ່ໂບດເທົ່ານັ້ນທີ່ມີສິດເວົ້າວ່າ ພຣະຄຳພີມີຄວາມໝາຍອັນໃດ. ນອກຈາກນັ້ນ ໂບດນີ້ກໍຍັງໄດ້ເຮັດໃຫ້ຄຳສອນຂອງພວກເຂົານັ້ນສຳຄັນກວ່າພຣະຄຳພີ.

## ພຣະເຈົ້າຊໍາລະພຣະວິຫານຂອງສະຫວັນ (ດານີເອນ 8:14)

**ອ່ານ ດານີເອນ 8:14. ແມ່ນຫຍັງໄດ້ເກີດຂຶ້ນໃນຂໍ້ພຣະຄໍາພີນີ້?**

ເປັນຫຍັງພຣະວິຫານໃນສະຫວັນຈຶ່ງຈໍາເປັນທີ່ຈະຕ້ອງຖືກຊໍາລະລ້າງ? ເມື່ອພວກເຮົາສາລະພາບຄວາມຜິດບາບຂອງເຮົາ ຄວາມບາບເຫຼົ່ານັ້ນກໍຂຶ້ນໄປຫາພຣະວິຫານຢູ່ເທິງສະຫວັນ. ໃນທາງດຽວກັນ ຜູ້ນໍາທີ່ບໍລິສຸດກໍນໍາເອົາຄວາມບາບຂອງຊາວອິດສະລາເອນທີ່ໄດ້ຮັບການອະໄພແລ້ວນັ້ນເຂົ້າມາໃນພຣະວິຫານໃນໂລກນີ້. ໃນມື້ແຫ່ງການຊໍາລະລ້າງຈາກຄວາມບາບນັ້ນ ສັດຫຼາຍໂຕກໍຖືກຂ້າຖວາຍ. ສັດເຫຼົ່ານີ້ກໍສະແດງເຖິງຄວາມຕາຍຂອງພຣະເຢຊູໃນອະນາຄົດ. ຄວາມຕາຍນັ້ນກໍໃຫ້ອໍານາດແກ່ຄົນບາບທີ່ຈະຢືນຢູ່ຕໍ່ໜ້າພຣະເຈົ້າໃນມື້ແຫ່ງການຊໍາລະລ້າງບາບ.

ໃນທາງດຽວກັນນີ້ ພຣະໂລຫິດຂອງພຣະເຢຊູເທົ່ານັ້ນທີ່ປົກປ້ອງພວກເຮົາໃນຊ່ວງເວລາທີ່ພຣະເຈົ້າພິພາກສາພວກເຮົາ. ດານີເອນ 8:14 ບອກພວກເຮົາວ່າ ພຣະເຈົ້າຈະຊໍາລະຄວາມບາບຈາກພຣະວິຫານໃນສະຫວັນຄືກັບຜູ້ນໍາທີ່ບໍລິສຸດນັ້ນຊໍາລະລ້າງບາບຈາກພຣະວິຫານຢູ່ເທິງໂລກນີ້. ຂ່າວສານຂອງ ດານີເອນ 8:14 ກໍມີຄວາມຈະແຈ້ງ. ໃນຖານະທີ່ເປັນຄົນຜິດບາບ ພວກເຮົາຈໍາເປັນທີ່ຈະໃຫ້ພຣະໂລຫິດຂອງພຣະເຢຊູນັ້ນຊໍາລະຄວາມບາບຂອງພວກເຮົາແລະຊ່ອຍພວກເຮົາໃຫ້ຢືນຕໍ່ໜ້າພຣະເຈົ້າ ຜູ້ຊົງເປັນຜູ້ພິພາກສາຂອງເຮົາ.

**ອ່ານເຮັບເລີ 9:23-28. ຂໍ້ພຣະຄໍາພີເຫຼົ່ານີ້ສະແດງໃຫ້ພວກເຮົາເຫັນວ່າຄວາມຕາຍຂອງພຣະເຢຊູເທິງໄມ້ກາງແຂນນັ້ນຊ່ອຍເຮົາໃຫ້ພົ້ນຈາກບາບແນວໃດ?**

## ເວລາ 2.300 ມື້ (ດານິເອນ 8:13)

**ອ່ານດານິເອນ 8:13. ໜຶ່ງໃນທູດສະຫວັນນັ້ນຖາມຄຳຖາມອັນໃດໃນຂໍ້ພຣະຄຳພີນີ້? ຄຳຖາມຂອງທູດສະຫວັນອົງນີ້ຊ່ອຍພວກເຮົາໃຫ້ເຂົ້າໃຈຄຳຕອບໃນຂໍ້ພຣະຄຳພີຕໍ່ໄປນີ້ແນວໃດ?**

ເວລາ 2.300 ມື້ໄດ້ເກີດຂຶ້ນເວລາໃດ? ກ່ອນອື່ນນັ້ນ ໃຫ້ພວກເຮົາຈື່ບາງຢ່າງກ່ຽວກັບຄວາມຝັນຂອງດານິເອນ ກ່ອນທີ່ພວກເຮົາຈະຕອບຄຳຖາມນີ້. ດານິເອນເຫັນແກະໂຕຜູ້ແລະແບ້. ຕໍ່ມາ ດານິເອນເຫັນເຂົານ້ອຍເຮັດສົງຄາມ. ແລ້ວດານິເອນໄດ້ຍິນທູດສະຫວັນຖາມວ່າ: "ສິ່ງທີ່ເກີດຂຶ້ນໃນນິມິດນີ້ຈະສືບຕໍ່ໄປອີກດົນນານປານໃດ?" ພວກເຮົາຈະຕ້ອງບໍ່ຈຳກັດເວລາເພື່ອໃຫ້ທຸກສິ່ງທຸກຢ່າງເກີດຂຶ້ນໃນເວລາທີ່ເຂົານ້ອຍນັ້ນມີອຳນາດເທົ່ານັ້ນ. ຄວາມຝັນຂອງດານິເອນກໍລວມທຸກສິ່ງທຸກຢ່າງຈາກໂຕແກະໄປຫາເຂົານ້ອຍ. ດັ່ງນັ້ນ ເວລາສຳລັບທີ່ຈະໃຫ້ສິ່ງຕ່າງໆເກີດຂຶ້ນນັ້ນກໍຈະໃຊ້ເວລາດົນໃນປະຫວັດສາດ.

ເວລານີ້ ພວກເຮົາສາມາດເຂົ້າໃຈຄຳຖາມຂອງທູດສະຫວັນໄດ້ດີຂຶ້ນ. ມັນຈະຕ້ອງໃຊ້ເວລາດົນປານໃດເພື່ອທີ່ຈະໃຫ້ສິ່ງຕ່າງໆທີ່ເຫັນໃນຄວາມຝັນນັ້ນເກີດຂຶ້ນ? ຫຼືແກະໂຕຜູ້ (ມີເດຍ-ເປີເຊຍ), ໂຕແບ້ (ກຣີກ) ແລະ ເຂົານ້ອຍ (ອານາຈັກໂລມັນ ແລະ ໂບດໂລມັນກາໂຕລິກ) ນັ້ນຈະມີອຳນາດຢູ່ດົນປານໃດ? ທູດສະຫວັນອີກອົງໜຶ່ງກໍຕອບວ່າ: "ເຫດການນີ້ຈະດຳເນີນຕໍ່ໄປເປັນເວລາ 1,150ວັນ ໃນລະຫວ່າງນີ້ຈະບໍ່ມີການຖວາຍເຄື່ອງບູຊາຍາມແລງແລະຍາມເຊົ້າ. ແລ້ວພຣະວິຫານກໍຈະໄດ້ຖືກສ້າງຂຶ້ນໃໝ່." (ດານິເອນ 8:14). ຂ່າວສານພິເສດກ່ຽວກັບເວລານັ້ນກໍຍາວນານ ເພາະວ່າມັນໄດ້ເລີ່ມຕົ້ນໃນສະໄໝຂອງອານາຈັກມີໂດ-ເປີເຊຍ. ໄລຍະເວລາ 2,300 ປີນັ້ນເລີ່ມຕົ້ນເວລາໃດ? ຄວາມຝັນຂອງດານິເອນບໍ່ໄດ້ໃຫ້ຂໍ້ມູນນີ້ໃຫ້ແກ່ເຮົາ. ແຕ່ດານິເອນບົດທີ9 ກໍໄດ້ບອກພວກເຮົາ. ພວກເຮົາຈະຮຽນກ່ຽວກັບດານິ

ເອນ ບົດທີ9 ໃນອາທິດໜ້າ. ຫຼັງຈາກທີ່ພວກເຮົາຮູ້ວ່າ ໄລຍະເວລາ 2,300 ປີ ເລີ່ມຕົ້ນຕອນໃດແລ້ວ ພວກເຮົາກໍຈະສາມາດຮູ້ໄດ້ເວລານີ້ຈະສິ້ນສຸດລົງເວລາໃດ.

**ວັນສຸກ 28 ກຸມພາ**

## ສຶກສາເພີ່ມເຕີມ

ຕາຕາລາງລຸ່ມນີ້ຈະຊ່ອຍພວກເຮົາເຂົ້າໃຈສິ່ງທີ່ພວກເຮົາໄດ້ຮຽນຮູ້ມາໃນດານີເອນບົດທີ 2,7 ແລະ 8. ຕາຕະລາງນີ້ບອກຫຍັງພວກເຮົາກ່ຽວກັບການທີ່ພຣະເຈົ້າຊໍາລະພຣະວິຫານຢູ່ໃນສະຫວັນ?

| ດານີເອນບົດທີ 2 | ດານີເອນບົດທີ 7 | ດານີເອນບົດທີ 8 |
|---|---|---|
| ບາບີໂລນ | ບາບີໂລນ | ................................ |
| ມີເດຍ-ເປີເຊຍ | ມີເດຍ-ເປີເຊຍ | ມີເດຍ-ເປີເຊຍ |
| ກຣີກ | ກຣີກ | ກຣີກ |
| ອານາຈັກໂຣມັນ | ອານາຈັກໂຣມັນ | ອານາຈັກໂຣມັນ |
| ໂບດໂຣມັນກາໂຕລິກ | ໂບດໂຣມັນກາໂຕລິກ | ໂບດໂຣມັນກາໂຕລິກ |
| ........................ | ວຽກງານຂອງພຣະເຈົ້າໃນຖານະເປັນຜູ້ພິພາກສາເທິງສະຫວັນ | ພຣະເຈົ້າຊໍາລະພຣະວິຫານໃນສະຫວັນ |
| ການສະເດັດກັບມາ (ອານາຈັກຂອງພຣະເຢຊູຄືກ້ອນຫີນທີ່ບໍ່ຖືກຕັດໂດຍມືຂອງມະນຸດ) | ການສະເດັດກັບມາ (ປະຊາຊົນຂອງພຣະເຈົ້າໄດ້ຮັບເອົາອານາຈັກເປັນມໍລະດົກ) | ການສະເດັດກັບມາ (ພຣະເຈົ້າທໍາລາຍອານາຈັກຕ່າງໆເທິງແຜ່ນດິນໂລກ) |

## ຄຳຖາມຄົ້ນຄວ້າ

1. ຕາຕະລາງຂ້າງເທິງນີ້ສະແດງໃຫ້ພວກເຮົາເຫັນວ່າ ການຊຳລະພຣະວິຫານເທິງສະຫວັນນັ້ນ ກໍຄືກັບວຽກງານຂອງພຣະເຈົ້າທີ່ເປັນຜູ້ພິພາກສາໃນພຣະທຳດານີເອນບົດທີ7? ເປັນຫຍັງທັງສອງຢ່າງນີ້ຈຶ່ງເກີດຂຶ້ນຫຼັງຈາກເວລາ 1,260ປີ ທີ່ເຂົານ້ອຍນັ້ນໄດ້ເຮັດວຽກ ແລະ ກ່ອນທີ່ອານາຈັກຂອງພຣະເຈົ້ານັ້ນຈະເລີ່ມຂຶ້ນ?

# ບົດທີ 10

## ການປອບປະໂລມແລະຄວາມຫວັງຂອງດານີເອນ

**29-6 ມີນາ 2019**

| **ບ່າຍວັນສະບາໂຕ** | **29 ກຸມພາ** |
|---|---|

**<u>ອ່ານສໍາລັບບົດຮຽນອາທິດນີ້</u>**

**ດານີເອນ 9:1, 2; ດານີເອນ 9:3-19; ດານີເອນ 9:24-27.**

**ຂໍ້ຄວນຈໍາ:** *"ຂ້າແດ່ອົງພຣະຜູ້ເປັນເຈົ້າເອີຍ ໂຜດຟັງສຽງຂອງພວກຂ້ານ້ອຍດ້ວຍ! ຂ້າແດ່ອົງພຣະຜູ້ເປັນເຈົ້າ ໂຜດຍົກໂທດໃຫ້ຂ້ານ້ອຍແດ່ທ້ອນ! ຂ້າແດ່ອົງພຣະຜູ້ເປັນເຈົ້າ ຂໍໂຜດຮັບຟັງພວກຂ້ານ້ອຍ! ແລະຮີບກະທໍາການເຖີດ ຂ້າແດ່ພຣະເຈົ້າຂອງຂ້ານ້ອຍເອີຍ ຂໍໂຜດຢ່າຊັກຊ້າຢູ່ເລີຍ ເພາະວ່າເມືອງແລະປະຊາຊົນເຫຼົ່ານີ້ເປັນທີ່ເອີ້ນຕາມນາມຊື່ຂອງພຣະອົງ" (ດານີເອນ 9:19).*

ໃນດານີເອນ ບົດທີ9 ພວກເຮົາອ່ານຄໍາອະທິຖານໜຶ່ງທີ່ສວຍງາມທີ່ສຸດຄໍາໜຶ່ງໃນພຣະຄໍາພີ. ດານີເອນ ອະທິຖານເມື່ອມີຄວາມຍາກລໍາບາກ ຫຼື ອຸປະສັກບັນຫາ. ຄໍາອະທິຖານນັ້ນຊ່ວຍໃຫ້ດານີເອນປະເຊີນກັບບັນຫາຕ່າງໆທີ່ເຂົ້າມາຫາເພິ່ນ. ໃນຂະນະທີ່ພວກເຮົາຄໍານຶງເຖິງຄໍາອະທິຖານໃນດານີເອນ ບົດທີ 9. ຂໍໃຫ້ພວກເຮົາໄດ້ຈົດຈໍາບາງສິ່ງບາງຢ່າງ. ດານີເອນບໍ່ສາມາດທີ່ຈະຢຸດຄິດເຖິງເວລາ 2,300 ມື້ ໃນພຣະທໍາດານີເອນ ບົດທີ8. ແມ່ນແລ້ວ ດານີເອນເຂົ້າໃຈຄວາມຝັນນີ້ໂດຍສ່ວນຫຼາຍ ແຕ່ເພິ່ນກໍ່ບໍ່ສາມາດເຂົ້າໃຈວ່າເມື່ອໃດໄລຍະເວລານີ້ຈະເລີ່ມຕົ້ນຂຶ້ນ ຫຼື ສິ້ນສຸດລົງໃນປະຫວັດສາດ.

"ເຫດການນີ້ຈະດໍາເນີນຕໍ່ໄປເປັນເວລາ 1,150ວັນ. ໃນລະຫວ່າງນີ້ຈະບໍ່ມີການຖວາຍເຄື່ອງບູຊາ ຍາມແລງ ແລະຍາມເຊົ້າ ແລ້ວພຣະວິຫານກໍຈະໄດ້ຖືກສ້າງຂຶ້ນໃໝ່." (ດານີເອນ 8:14). ແມ່ນໃນບົດທີ9ເທົ່ານັ້ນທີ່ທູດສະຫວັນອົງໜຶ່ງໃຫ້

ຂໍ້ມູນດານີເອນຫຼາຍຂຶ້ນກ່ຽວກັບເວລາ 2,300 ມື້. ຄືກັບທີ່ຜ່ານມາ ດານີເອນກໍ່ໄດ້ອະທິຖານແລ້ວແສງສະຫວ່າງກໍ່ມາຮອດດານີເອນເພື່ອຕອບຄຳອະທິຖານຂອງເພິ່ນ.

**ວັນອາທິດ 1 ມີນາ**

<u>ໄວ້ວາງໃຈໃນພຣະຄຳພີ (ດານີເອນ 9:1,2)</u>

**ອ່ານພຣະທຳດານີເອນ 9:1,2. ດານີເອນສຶກສາຄຳພະຍາກອນຂອງພຣະຄຳພີ ຫຼື ຂ່າວສານພິເສດກ່ຽວກັບເວລາ. ຄຳພະຍາກອນນີ້ກໍຊ່ວຍດານີເອນໃຫ້ເຂົ້າໃຈວ່າບາງຢ່າງທີ່ສຳຄັນຈະເກີດຂຶ້ນກັບປາຊົນຊົນຂອງພຣະອົງ. ດານີເອນກຳລັງສຶກສາພຣະທຳເຫຼັ້ມໃດແດ່ເພື່ອຊ່ວຍໃຫ້ເພິ່ນເຂົ້າໃຈ?**

ຄຳອະທິຖານຂອງໂມເຊກໍ່ສະແດງໃຫ້ພວກເຮົາເຫັນວ່າ ເພິ່ນໄດ້ສຶກສາພຣະທຳທີ່ຂຽນໂດຍໂມເຊແລະຜູ້ປະກາດພຣະຄຳຢ່າງລະອຽດຖີ່ຖ້ວນ.

ການສຶກສາພຣະຄຳພີຂອງດານີເອນນັ້ນກໍ່ຍັງສະແດງໃຫ້ເພິ່ນເຫັນບາງສິ່ງບາງຢ່າງ. ເພິ່ນໄດ້ເຫັນວ່າຄວາມບາບຂອງປະຊາຊົນນັ້ນຮ້າຍແຮງຫຼາຍ. ປະຊາຊົນຂອງພຣະເຈົ້າໄດ້ລະເມີດຂໍ້ຕົກລົງພິເສດຂອງພວກເຂົາກັບພຣະເຈົ້າ. ພຣະເຈົ້າໄດ້ລົງໂທດພວກເຂົາໂດຍການນຳພວກເຂົາໄປຈາກດິນແດນຂອງພວກເຂົາໄປສູ່ສະຄອນບາບີໂລນ (ລະບຽບເລວີ 26:14-45). ຄວາມເຂົ້າໃຈຂອງດານີເອນກ່ຽວກັບສິ່ງທີ່ໄດ້ເກີດຂຶ້ນກັບຊາວອິດສະລະເອນກໍ່ໄດ້ມາຈາກການສຶກສາພຣະຄຳພີ. ການສຶກສາຂອງເພິ່ນໄດ້ເຮັດໃຫ້ເພິ່ນນັ້ນໄຫວ້ວອນຕໍ່ພຣະເຈົ້າໃຫ້ຊ່ວຍຊົນຊາດອິດສະລາເອນ.

ໃນເວລາຍຸກສຸດທ້າຍນີ້ ພວກເຮົາສາມາດຮຽນຮູ້ບົດຮຽນອັນສຳຄັນຈາກດານີເອນ. ພວກເຮົາຈຳເປັນຕ້ອງສຶກສາແລະປະຕິບັດຕາມພຣະຄຳພີໃນເວລານີ້ຫຼາຍກວ່າແຕ່ກີ້. ມີແຕ່ພຣະຄຳພີເທົ່ານັ້ນທີ່ສາມາດໃຫ້ຄວາມເຂົ້າໃຈອັນແຈ່ມແຈ້ງກ່ຽວກັບສິ່ງທີ່ກຳລັງເກີດຂຶ້ນໃນໂລກນີ້ແລະເຖິງເຫດຜົນຂອງມັນ. ຢ່າລືມວ່າພຣະຄຳພີນັ້ນສະແດງໃຫ້ພວກເຮົາເຫັນເລື່ອງຂອງສົງຄາມທົ່ວໂລກລະຫວ່າງພຣະເຈົ້າແລະຊາຕານ. ພຣະຄຳພີສະແດງໃຫ້ເຫັນວ່າ ພຣະເຈົ້າຈະທຳລາຍຄວາມຊົ່ວຮ້າຍໃນ

ຕອນຈົບຂອງສົງຄາມນີ້. ແລ້ວພຣະອົງຈະເລີ່ມລາດຊະອານາຈັກອັນຕະຫຼອດໄປ ເປັນນິດຂອງພຣະອົງ. ດັ່ງນັ້ນ ພວກເຮົາຈຳເປັນທີ່ຈະຕ້ອງຮຽນພຣະຄຳພີ ຍິ່ງພວກເຮົາສຶກສາຫຼາຍຂຶ້ນຊ່ຳໃດ ພວກເຮົາກໍ່ຍິ່ງເຂົ້າໃຈສິ່ງທີ່ເກີດຂຶ້ນຢູ່ອ້ອມຂ້າງພວກເຮົາຫຼາຍຂຶ້ນຊ່ຳນັ້ນ. ພວກເຮົາຈະເຂົ້າໃຈວຽກງານທີ່ພຣະເຈົ້າມອບໃຫ້ເຮົາເຮັດໃນໂລກນີ້ໄດ້ດີຂຶ້ນ. ພຣະຄຳພີຈະຊ່ວຍໃຫ້ຄວາມຫວັງຂອງເຮົາເຕີບໂຕຂຶ້ນເຊັ່ນດຽວກັນ.

**ວັນຈັນ 2 ມີນາ**

**<u>ດານີເອນຂໍໃຫ້ພຣະເຈົ້າປະທານຄວາມເມດຕາ (ດານີເອນ 9:3-19)</u>**

**ອ່ານກ່ຽວກັບຄຳອະທິຖານຂອງດານີເອນໃນດານີເອນ 9:3-19. ເປັນຫຍັງດານີເອນຈຶ່ງຂໍຄວາມເມດຕາຈາກພຣະເຈົ້າ?**

ໃຫ້ເຮົາມາເບິ່ງແນວຄິດທີ່ສຳຄັນບາງຢ່າງໃນຄຳອະທິຖານຂອງດານີເອນ:

ກ່ອນອື່ນ ດານີເອນບໍ່ເຄີຍຂໍໃຫ້ພຣະເຈົ້າອະທິບາຍສາເຫດທີ່ຊາວຢິວນັ້ນຕ້ອງທົນທຸກທໍລະມານ. ດານີເອນນັ້ນຮູ້ເຫດຜົນດີ. ດັ່ງທີ່ພວກເຮົາເຫັນວ່າດານີເອນໄດ້ໃຊ້ເວລາໄລຍະດົນໃນຄຳອາທິຖານຂອງເພິ່ນເພື່ອບອກພຣເຈົ້າເຖິງເຫດຜົນ. "ເມື່ອພຣະອົງບອກໃຫ້ພວກຂ້ານ້ອຍເຮັດຕາມກົດລະບຽບຕ່າງໆທີ່ພຣະອົງໄດ້ມອບໃຫ້ຜ່ານທາງຜູ້ທຳນວາຍຜູ້ຮັບໃຊ້ຂອງພຣະອົງນັ້ນ ພວກຂ້ານ້ອຍບໍ່ໄດ້ຍອມຟັງພຣະອົງ" (ດານີເອນ 9:10). ໃນຕອນສຸດທ້າຍຂອງດານີເອນບົດທີ 8 ທ່ານຈະເຫັນວ່າດານີເອນນັ້ນຕ້ອງການທີ່ຈະເຂົ້າໃຈບາງສິ່ງບາງຢ່າງ. ເພິ່ນບໍ່ເຂົ້າໃຈຄວາມຝັນກ່ຽວກັບເວລາ 2,300 ມື້ (ອ່ານ ດານີເອນ 8:27).

ດານີເອນໄດ້ອະທິຖານຂໍຄວາມເມດຕາປານີ ເພິ່ນໄດ້ຂໍໃຫ້ພຣະເຈົ້າໃຫ້ອະໄພປະຊາຊົນຂອງພຣະອົງ. ແມ່ນແລ້ວ ປະຊາຊົນຂອງພຣະເຈົ້າໄດ້ເຮັດບາບແລະໄດ້ເຮັດສິ່ງທີ່ຊົ່ວຮ້າຍ. ແຕ່ນັ້ນເປັນເຫດຜົນທີ່ດານີເອນໄດ້ຂໍໃຫ້ພຣະເຈົ້າມີຄວາມເມດຕາຕໍ່ຊົນຊາດອິດສະລະເອນ. ຄຳອະທິຖານຂອງດານີເອນເພື່ອຂໍຄວາມເມດຕາກໍສະແດງໃຫ້ເຮົາເຫັນ ຂ່າວປະເສີດກ່ຽວກັບພຣະເຢຊູ. ພວກເຮົາເປັນຄົນບາບ ແລະບໍ່ມີສິ່ງໃດທີ່ດີໃນໂຕຂອງເຮົາ.

**ອ່ານດານີເອນ 9:18,19. ດານີເອນໃຫ້ເຫດຜົນອນໃດແດ່ໃນຂໍ້ພຣະຄຳພີເຫຼົ່ານີ້ເພື່ອອະທິບາຍວ່າ ເປັນຫຍັງເພິ່ນຈຶ່ງຕ້ອງການໃຫ້ພຣະເຈົ້າຕອບຄຳອະທິຖານຂອງເພິ່ນ?**

ນອກຈາກນັ້ນ ດານີເອນບໍ່ໄດ້ຂໍໃຫ້ພຣະເຈົ້າຊ່ວຍເພິ່ນດ້ວຍເຫດຜົນທີ່ເຫັນແກ່ໂຕ. ດານີເອນຕ້ອງການໃຫ້ພຣະນາມຂອງພຣະເຈົ້າໄດ້ຮັບກຽດຢູ່ເທິງແຜ່ນດິນໂລກ.

**ວັນອັງຄານ 3 ມີນາ**

<u>ການອະທິຖານສຳລັບຄົນອື່ນ (ດານີເອນ 9:5-13)</u>

**ອ່ານສ່ວນໜຶ່ງຂອງຄຳອະທິຖານຂອງດານີເອນ ໃນພຣະທຳດານີເອນ 9:5-13. ໃນຄຳອະທິຖານນີ້ ດານີເອນສືບຕໍ່ກ່າວຄຳວ່າ "ພວກເຮົາ" ໄດ້ເຮັດຜິດ ດັ່ງນັ້ນເພິ່ນໄດ້ລວມໂຕເພິ່ນເອງວ່າເປັນຜູ້ເຮັດຄວາມບາບ ເຊິ່ງໄດ້ນຳການລົງໂທດມາສູ່ຊາວຢິວ 70 ປີ ກ່ອນ. ທ່ານຄິດວ່າເປັນຫຍັງຈຶ່ງເຮັດແບບນັ້ນ?**

ຄຳອະທິຖານຂອງດານີເອນຄືຕົວຢ່າງຂອງວິທີການທີ່ພວກເຮົາສາມາດອະທິຖານສຳລັບຄົນອື່ນ. ພຣະຄຳພີເຕັມໄປດ້ວຍຕົວຢ່າງຫຼາຍໆອັນສຳລັບຄຳອະທິຖານເຫຼົ່ານີ້. ຄຳອະທິຖານຂອງເຮົາສາມາດເຮັດໃຫ້ສິ່ງຕ່າງໆທີ່ອັດສະຈັນແລະຍິ່ງໃຫຍ່ເກີດຂຶ້ນໄດ້. ພວກມັນສາມາດເຮັດໃຫ້ພຣະເຈົ້າຊ່ວຍເຫຼືອປະຊາຊົນຂອງພຣະເຈົ້າຈາກສັດຕູຂອງພວກເຂົາໄດ້. ຄຳອະທິຖານຂອງເຮົາສາມາດປ່ຽນແປງຈິດໃຈຂອງພຣະເຈົ້າບໍ່ໃຫ້ລົງໂທດປະຊາຊົນຂອງພຣະອົງເຊັ່ນດຽວກັນ. ຄຳອະທິຖານຂອງໂມເຊຊ່ວຍໃຫ້ພຣະເຈົ້າບໍ່ໃຫ້ທຳລາຍຄົນຂອງພຣະອົງຫຼັງຈາກທີ່ພວກເຂົາໄດ້ກະທຳບາບ (ອົບພະຍົບ 32:7-14; ຈົດເຊັນບັນຊີ 14:10-25). ຄຳອະທິຖານຂອງເອລີຢາກໍໄດ້ເຮັດໃຫ້ພຣະເຈົ້ານັ້ນຖອກເທນ້ຳຝົນລົງມາໃສ່ດິນແດນທີ່ແຫ້ງແລ້ງ ຫຼັງຈາກທີ່ຝົນບໍ່ຕົກມາ 3ປີເຄິ່ງ. (1ກະສັດ ບົດທີ 18)

ດັ່ງນັ້ນ ພວກເຮົາຄວນອະທິຖານສຳລັບສະມາຊິກຄອບຄົວ, ໝູ່ເພື່ອນ ແລະຄົນອື່ນໆ. ຈົ່ງອະທິຖານເມື່ອທ່ານມີບັນຫາເຊັ່ນດຽວກັນ. ພຣະເຈົ້າຊົງໄດ້ຍິນຄຳ

ອະທິຖານຂອງພວກເຮົາ. ພຣະອົງສາມາດຊ່ວຍໄດ້. ບາງຄັ້ງພຣະເຈົ້າອາດຈະບໍ່ຕອບຄໍາອະທິຖານຂອງພວກເຮົາທັນທີ. ແຕ່ພວກເຮົາອາດຈະແນ່ໃຈໄດ້ວ່າ ພຣະເຈົ້າຈະຊົງຈົດຈໍາສິ່ງຕ່າງໆທີ່ບຸດຂອງພຣະອົງຕ້ອງການ ຫຼື ຂາດເຂີນ (ອ່ານຢາໂກໂບ 5:16).

## ວັນພຸດ 4 ມີນາ

<u>ວຽກງານຂອງພຣະຜູ້ຊ່ວຍໃຫ້ລອດ (ດານີເອນ 9:21-27)</u>

**ທູດສະຫວັນຄາບີເອນໄດ້ກ່າວວ່າສິ່ງໃດຈະເກີດຂຶ້ນໃນດານີເອນ 9:21-27? ວຽກງານອັນໃດຈະເກີດຂຶ້ນໃນຊ່ວງເວລາ 70 ອາທິດນີ້? ເປັນຫຍັງພຣະເຢຊູຈຶ່ງເປັນຜູ້ດຽວທີ່ຈະເຮັດສິ່ງນີ້?**

ໃນຕອນທ້າຍຂອງເວລາ 70 ອາທິດນີ້ ພຣະຜູ້ຊ່ວຍໃຫ້ລອດກໍຈະເຮັດ6ຢ່າງ. ພຣະອົງຈະ "ກໍານົດໃຫ້ປະຊາຊົນແລະເມືອງອັນສັກສິດ....ເລີກເຮັດບາບແລະເລີກເຮັດຊົ່ວ". (ດານີເອນ 9:24) ຄໍາທີ່ຂຽນບອກວ່າ "ເຮັດບາບ" ມາຈາກຄໍາສັບພາສາເຮັບເລີຄໍາວ່າ "pesha" ຄໍາວ່າ "pesha" ສະແດງໃຫ້ພວກເຮົາເຫັນຄວາມບາບທີ່ຄົນອ່ອນແອຄົນໜຶ່ງເຮັດຕໍ່ສູ້ອີກຄົນທີ່ເຂັ້ມແຂງກວ່າ (ສຸພາສິດ 28:24 ສະແດງໃຫ້ເຫັນຕົວຢ່າງໜຶ່ງ). ເອເຊກຽນໄດ້ໃຊ້ ຄໍາວ່າ "pesha" ເພື່ອສະແດງໃຫ້ເຫັນພວກເຮົາຜູ້ເປັນມະນຸດທີ່ຕໍ່ສູ້ເຮັດບາບຕໍ່ພຣະເຈົ້າ (ເອເສກຽນ 2:13). ຄວາມຕາຍຂອງພຣະເຢຊູກໍ່ເຮັດໃຫ້ມະນຸດຫັນໜີຈາກຄວາມບາບແລະກັບໄປຫາພຣະເຈົ້າ.

ພຣະເຢຊູຈະ "ກໍານົດໃຫ້...ເລີກເຮັດບາບ" (ດານີເອນ 9:24). ໃນພາສາເຮັບເລີ ຄໍາກໍາມະສໍາລັບຄໍາວ່າ "ວາງ" ກໍສະແດງໃຫ້ພວກເຮົາເຫັນວ່າພຣະເຈົ້າຊົງໃຫ້ອະໄພຄວາມຜິດບາບ. ພຣະເຢຊູຈະ "ເອົາຄວາມບາບອອກໄປ" (ດານີເອນ 9:24 ແລະ ໂກໂລຊາຍ 1:19,20). ມີພຽງພຣະເຢຊູເທົ່ານັ້ນທີ່ສາມາດເຮັດສິ່ງນີ້ໄດ້.

ພຣະເຢຊູຈະນໍາ "ຄວາມຍຸດຕິທໍາອັນຖາວອນ" ມາ (ດານີເອນ 9:24). ພຣະເຢຊູໄດ້ມາແທນທີ່ຂອງພວກເຮົາເທິງໄມ້ກາງແຂນ. ຄວາມຕາຍຂອງພຣະອົງໄດ້ເຮັດໃຫ້ພວກເຮົາຄືນດີກັບພຣະເຈົ້າ.

ພຣະເຢຊູຈະເຮັດໃຫ້ "ນິມິດ ແລະ ຖ້ອຍຄຳຂອງຜູ້ທຳນວາຍ...ກາຍເປັນຈິງ" (ດານິເອນ 9:24). ພຣະຄຳພີເດີມກໍເຕັມໄປດ້ວຍຂ່າວສານທີ່ພິເສດແລະຄຳສັນຍາກ່ຽວກັບວຽກງານຂອງພຣະຜູ້ຊ່ວຍໃຫ້ລອດເພື່ອຊ່ວຍມະນຸດໃຫ້ພົ້ນຈາກຄວາມບາບ. "ພຣະວິຫານອັນສັກສິດຈະໄດ້ຖືກຖວາຍຄືນໃໝ່ໃຫ້ແກ່ພຣະເຈົ້າ" (ດານິເອນ 9:24). ຂໍ້ພຣະຄຳພີນີ້ສະແດງໃຫ້ພວກເຮົາເຫັນການເລີ່ມຕົ້ນຂອງວຽກງານພຣະເຢຊູເພື່ອຊ່ວຍພວກເຮົາໃຫ້ໄປຢູ່ສະຫວັນ (ເຮັບເລີ 8:1).

**ວັນພະຫັດ** **5 ມີນາ**

**ເວລາ 2,300 ມື້ (ດານິເອນ 9:24-27)**

ເວລາ 70 ອາທິດ ກໍຖືກຫານອອກເປັນສາມພາກສ່ວນ (1). 7 ອາທິດ (2). 62 ອາທິດ ແລະ (3). ອາທິດທີ 70.

ເວລາ 70 ອາທິດກໍເທົ່າກັບ ເວລາ 49 ປີ. ເວລານີ້ສະແດງໃຫ້ພວກເຮົາເຫັນເວລາທີ່ຊາວຢິວຈະສ້າງເຢລູຊາເລັມຂຶ້ນໃໝ່. ຫຼັງຈາກເຈັດອາທິດນີ້ກໍຈະມີ 62 ອາທິດ (ຫຼື 434 ປີ ໃນເວລາຕົວຈິງ). ແລ້ວພຣະຜູ້ຊ່ວຍໃຫ້ລອດກໍຈະມາ (ດານິເອນ 9:25). ດັ່ງນັ້ນ 483 ປີ ຫຼັງຈາກຄຳສັ່ງຂອງກະສັດອາກຕາເຊເຊັດ ພຣະເຢຊູກໍໄດ້ຮັບສິນປັບຕິດສະມາ ໃນປີ ຄສ 27. ແລ້ວພຣະເຈົ້າກໍຈະຖອກເທພຣະວິນຍານຂອງພຣະອົງໃສ່ພຣະເຢຊູເພື່ອຊ່ວຍພຣະອົງໃນການປະຕິບັດວຽກງານຂອງພຣະອົງເທິງໂລກນີ້ຕະຫລອດໄລຍະເວລາ 70 "ອາທິດ".

ໃນຊ່ວງອາທິດທີ 70 ນັ້ນ ຫຼາຍໆຢ່າງທີ່ສຳຄັນໄດ້ເກີດຂຶ້ນ (1) "ຜູ້ນຳທີ່ພຣະເຈົ້າໄດ້ເລືອກຈະຖືກຂ້າຢ່າງບໍ່ຍຸດຕິທຳ (ດານິເອນ 9:26)". ຂໍ້ພຣະຄຳພີນີ້ສະແດງໃຫ້ເຫັນເຖິງຄວາມຕາຍຂອງພຣະເຢຊູ (2) ພຣະຜູ້ຊ່ວຍໃຫ້ລອດ "ຈະມີຂໍ້ຕົກລົງຢ່າງໜັກແໜ້ນກັບຄົນຈຳນວນຫຼາຍເປັນເວລາ 7 ປີ (1 ອາທິດ)" (ດານິເອນ 9:27). ຂໍ້ພຣະຄຳພີສະແດງໃຫ້ພວກເຮົາເຫັນວຽກງານອັນພິເສດເທິງໂລກນີ້ສຳລັບຊາວຢິວ. ນອກຈາກນັ້ນມັນຍັງສະແດງເຖິງວຽກງານທີ່ຜູ້ຕິດຕາມພຣະເຢຊູໄດ້ເຮັດຫຼັງຈາກທີ່ພຣະອົງໄດ້ສະເດັດກັບຄືນໄປສະຫວັນ. ວຽກງານນີ້ເກີດຂຶ້ນຈາກປີ ຄສ

27 ຫາ 34. "ພໍເມື່ອສາມປີເຄິ່ງຜ່ານໄປ ລາວຈະສັ່ງເລີກບໍ່ໃຫ້ມີເຄື່ອງເຜົາບູຊາ ແລະເຄື່ອງບູຊາ" (ດານີເອນ 9:27). ສາມປີເຄິ່ງຫຼັງຈາກທີ່ພຣະເຢຊູໄດ້ຮັບສິນປັບຕິດສະມາກໍໄດ້ມີການຍົກເລີກການຖວາຍສັດເປັນເຄື່ອງບູຊາຕະຫຼອດໄປ. ເປັນຫຍັງຈຶ່ງເປັນແບບນັ້ນ? ກໍເພາະວ່າພຣະເຢຊູໄດ້ຍອມມອບຖວາຍຕົວເອງຢູ່ເທິງໄມ້ກາງແຂນ.

**ວັນສຸກ** **6 ມີນາ**

## <u>ຂໍ້ຄິດເພີ່ມເຕີມ</u>

ທາງລຸ່ມນີ້ຄືໂຄງຮ່າງທີ່ສະແດງເຖິງຂ່າວສານເວລາ 70 ອາທິດໃນດານີເອນ 9:24-27. ໂຄງຮ່າງນີ້ຊ່ວຍໃຫ້ພວກເຮົາເຫັນວ່າ 70 ອາທິດນີ້ (ຫຼື 490 ປີໃນເວລາຈິງ) ເຊື່ອມຕໍ່ກັບເວລາ 2,300 ມື້ (ຫຼື 2,300 ປີ ໃນເວລາຈິງ) ແນວໃດ. ນອກຈາກນັ້ນ ພວກເຮົາກໍສາມາດເຫັນວ່າເວລາ 70 ອາທິດ ແລະ 2,300 ມື້ນັ້ນກໍ່ເລີ່ມຕົ້ນໃນເວລາອັນດຽວກັນ. ດັ່ງທີ່ພວກເຮົາໄດ້ເຫັນມື້ວານນີ້ວ່າ ເວລາ 2,300 ປີ ໄດ້ເລີ່ມຂຶ້ນໃນປີ 457 ກ່ອນ ຄ.ສ ທ່ານຈະມາຮອດປີ 1844 (ໃຫ້ທ່ານຈື່ວ່າຈະຕ້ອງບໍ່ນັບປີທີ 0) ຖ້າຫາກທ່ານລົບ 490 ປີ ອອກຈາກເວລາ 2,300 ປີ (ນັ້ນກໍຄື 2,300 – 490) ທ່ານກໍຈະມີເວລາເຫຼືອ 1810 ປີ. ຖ້າຫາກທ່ານເພີ່ມເວລາ 1810 ປີໃສ່ ປີ 34 (ເຊິ່ງເປັນປີທີ 490 ປີສິ້ນສຸດລົງ). ແລ້ວທ່ານກໍຈະມາຮອດປີ 1844 ເຊັ່ນດຽວກັນ. ດັ່ງນັ້ນ ວຽກງານການຊໍາລະລ້າງພຣະວິຫານຂອງສະຫວັນໃນດານີເອນ 8:14 ຈຶ່ງໄດ້ເລີ່ມຕົ້ນຂຶ້ນໃນປີ 1844.

**ຄໍາພະຍາກອນ ເວລາ 2,300 ປີ**

| | 490 ປີ | | 1,810 ປີ | |
|---|---|---|---|---|
| ປີ 457 ກ່ອນ ຄສ. | | ປີ ຄສ. 34 | | ປີ 1844 |

**<u>ຄຳຖາມຄົ້ນຄວ້າ:</u>**

1. ນັກຄົ້ນຄວ້າພຣະຄຳພີໄດ້ກ່າວໄວ້ວ່າ ຂ່າວສານຂອງເວລາ 2,300 ມື້ ແລະ 70 ອາທິດນັ້ນເປັນຄຳພະຍາກອນທີ່ໃຫຍ່ ຫຼື ພິເສດກ່ຽວກັບອະນາຄົດ. ທ່ານຄິດວ່າເປັນຫຍັງຄືເປັນແບບນັ້ນ? ທ່ານສາມາດພົບຫຼັກຖານອັນໃດທີ່ຈະສະແດງໃຫ້ເຫັນວ່າແນວຄິດນີ້ເປັນຄວາມຈິງ?

2. ພວກເຮົາສາມາດຮຽນຮູ້ສິ່ງໃດຈາກຄຳອະທິຖານຂອງດານີເອນ ສຳລັບປະຊາຊົນຂອງພຣະອົງ? ສິ່ງນີ້ສາມາດຊ່ວຍພວກເຮົາແນວໃດໃນຊີວິດການອະທິຖານຂອງເຮົາ?

# ບົດທີ 11

## ຈາກສົງຄາມໄປສູ່ໄຊຊະນະ

**(7-13 ມີນາ 2019)**

**ບ່າຍວັນສະບາໂຕ 7 ມີນາ**

**<u>ອ່ານສໍາລັບບົດຮຽນອາທິດນີ້</u>**

**ດານີເອນ 10:1-2; ເອຊະຣາ 4:1-5; ໄຊຊວຍ 5:13-15; ພຣະນິມິດ 1:12-18; ໂກໂລຊາຍ 2:15.**

**ຂໍ້ຄວນຈໍາ:** *"ເພິ່ນກ່າວວ່າ, ພຣະເຈົ້າຮັກສາເຈົ້າ. ດັ່ງນັ້ນ ຢ່າໃຫ້ສິ່ງໃດເຮັດໃຫ້ເຈົ້າອຸກໃຈ ຫຼື ຢ້ານກົວເລີຍ." (ດານີເອນ 10:19).*

ດານີເອນບົດທີ 10 ສະແດງໃຫ້ພວກເຮົາເຫັນຄວາມຝັນເລື່ອງສຸດທ້າຍ. ຄວາມຝັນນີ້ເລີ່ມຕົ້ນໃນບົດທີ10 ແລະສືບຕໍ່ໄປໃນ ບົດທີ11 ແລະ 12. ຕັ້ງແຕ່ຕອນຕົ້ນກໍໄດ້ບອກພວກເຮົາວ່າຄວາມຝັນນີ້ ແມ່ນກ່ຽວກັບສົງຄາມທີ່ຍິ່ງໃຫຍ່ (ດານີເອນ 10:1). ດານີເອນ ບົດທີ11 ໃຫ້ຂໍ້ມູນຫຼາຍຂຶ້ນກ່ຽວກັບສົງຄາມນີ້. ດານີເອນບົດທີ10 ສະແດງໃຫ້ພວກເຮົາເຫັນວ່າສົງຄາມກ່ຽວຂ້ອງກັບອັນໃດ. ມັນຄືສົງຄາມລະຫວ່າງຄວາມດີ ແລະ ຄວາມຊົ່ວຮ້າຍ. ແມ່ນແລ້ວສົງຄາມໃນດານີເອນ ບົດທີ 10 ກໍຖືກຈັດຢູ່ໃນໂລກນີ້. ແຕ່ມັນກໍ່ເປັນສົງຄາມດ້ານຈິດວິນຍານເຊັ່ນດຽວກັນ. ໃນຂະນະທີ່ພວກເຮົາສຶກສາພຣະທໍາດານີເອນ ບົດທີ 10 ນັ້ນພວກເຮົາຈະເຫັນວ່າຄໍາອະທິຖານຂອງພວກເຮົານັ້ນສໍາຄັນໃນສົງຄາມນີ້. ເມື່ອພວກເຮົາອະທິຖານ ຄໍາອະທິຖານຂອງພວກເຮົາກໍສາມາດປ່ຽນແປງສິ່ງທີ່ເກີດຂຶ້ນໄດ້. ພວກເຮົາບໍ່ໄດ້ຢູ່ຄົນດຽວໃນການຕໍ່ສູ້ກັບຄວາມຊົ່ວຮ້າຍ. ພຣະເຢຊູກໍຊົງຮ່ວມຕໍ່ສູ້ກັບພວກເຮົາ. ພຣະອົງຊົງສູ້ກັບຊາຕານເພື່ອພວກເຮົາໃນໂລກນີ້. ພວກເຮົາບໍ່ໄດ້ຕໍ່ສູ້ອໍານາດຂອງມະນຸດເທົ່ານັ້ນ. ພວກເຮົາຕໍ່ສູ້ກັບອໍານາດຂອງຄວາມມືດມົນ.

ເປົາໂລອະທິບາຍຄວາມຈິງອັນສຳຄັນໃນພຣະຄຳພີເລື່ອງນີ້ໃນເອເຟໂຊ 6:12. ໃນທີ່ສຸດແລ້ວ ຄວາມສຳເລັດໃນສົງຄາມນີ້ກໍ່ຂຶ້ນຢູ່ກັບພຣະເຢຊູ. ພຣະອົງເທົ່ານັ້ນທີ່ເອົາຊະນະຊາຕານເທິງໄມ້ກາງແຂນ.

**ວັນອາທິດ 8 ມີນາ**

**ການອະທິຖານ ແລະ ອົດອາຫານໃນໄລຍະສັ້ນ (ດານີເອນ 10:1-3)**

ອ່ານ ດານີເອນ 10:1-3. ດານີເອນໄດ້ເຮັດສິ່ງໃດໃນຂໍ້ພຣະຄຳພີເຫຼົ່ານີ້? ດານີເອນບໍ່ໄດ້ບອກວ່າເປັນຫຍັງເພິ່ນຈຶ່ງຮູ້ສຶກໂສກເສົ້າຢ່າງໜັກ. ແຕ່ແນ່ນອນວ່າດານີເອນກໍເສຍໃຈໃນເລື່ອງຂອງຊາວຢິວ. ຊາວຢິວໄດ້ພາກັນອອກຈາກບາບີໂລນ ແລະກັບໄປປະເທດປາເລສຕິນ.

ອ່ານ ເອຊະຣາ 4:1-5 ຊາວຢິວມີບັນຫາອັນໃດເມື່ອພວກເຂົາກັບໄປຮອດເຮືອນ? ເອຊະຣາ 4:1-5 ສະແດງໃຫ້ພວກເຮົາເຫັນວ່າຊາວຢິວໄດ້ເລີ່ມສ້າງພຣະວິຫານເມື່ອພວກເຂົາໄປຮອດບ້ານເມືອງຂອງເຂົາ. ແຕ່ສັດຕູກໍ່ພະຍາຍາມຢຸດພວກເຂົາ. ຊາວຊາມາເລຍໄດ້ສົ່ງບົດລາຍງານຈອມປອມຕໍ່ກະສັດເປີເຊຍ. ພວກເຂົາໄດ້ຕົວະກ່ຽວກັບຊາວຢິວ. ກະສັດໄດ້ເຊື່ອຄຳຫຼອກລວງເຫຼົ່ານີ້. ເພິ່ນໄດ້ຢຸດຕິວຽກການກໍ່ສ້າງພຣະວິຫານຂອງຊາວຢິວ ນັ້ນເປັນເຫດຜົນທີ່ດານີເອນອະທິຖານຕໍ່ພຣະເຈົ້າ. ເພິ່ນບໍ່ກິນເຂົ້າ ຫຼື ອາຫານໃດໆເປັນເວລາສາມອາທິດ. ເພິ່ນຂໍໃຫ້ພຣະເຈົ້ານັ້ນປ່ຽນແປງຈິດໃຈຂອງກະສັດໄຊຣັດ ເພາະວ່າກະສັດໄຊຣັດກໍສາມາດອະນຸຍາດໃຫ້ຊາວຢິວນັ້ນເລີ່ມຕົ້ນກໍ່ສ້າງໄດ້ອີກເທື່ອໜຶ່ງ.

ໃນເວລານີ້ ດານີເອນກໍອາຍຸປະມານ 90ປີແລ້ວ. ເມື່ອເຮົາເບິ່ງຊີວິດການອະທິຖານຂອງດານີເອນ ພວກເຮົາກໍສາມາດຮຽນຮູ້ບົດຮຽນທີ່ສຳຄັນບາງຢ່າງ. ກ່ອນອື່ນພວກເຮົາບໍ່ຄວນຢຸດການອະທິຖານຈັກເທື່ອ. ພຣະເຈົ້າອາດຈະບໍ່ຕອບພວກເຮົາໃນທັນທີ ແຕ່ພວກເຮົາກໍບໍ່ຄວນຍອມແພ້. ປະການທີສອງພວກເຮົາຄວນອະທິຖານເພື່ອຄົນອື່ນ. ໃຫ້ເຮົາຈື່ວ່າ “ຫຼັງຈາກໂຢບໄດ້ພາວັນນາອະທິຖານສຳລັບເພື່ອນທັງສາມຄົນແລ້ວ ພຣະເຈົ້າຢາເວໄດ້ເຮັດໃຫ້ໂຢບຈະເລີນຮຸ່ງເຮືອງຂຶ້ນໃໝ່”

(ໂຢບ 42:10). ປະການທີສາມຄື ການອະທິຖານເຮັດໃຫ້ພຣະເຈົ້ານັ້ນກະທຳສິ່ງທີ່ເປັນຈິງ ແລະ ສິ່ງທີ່ພວກເຮົາສາມາດເບິ່ງເຫັນໄດ້. ດັ່ງນັ້ນ ຈິ່ງໃຫ້ພວກເຮົາອະທິຖານຢູ່ສະເໝີ ໃຫ້ເຮົາໄດ້ນຳທຸກສິ່ງທຸກຢ່າງມາຫາພຣະເຈົ້າໃນຄຳອະທິຖານ (ເອເຟໂຊ 6:18).

**ວັນຈັນ 9 ມີນາ**

**ຄວາມຝັນກ່ຽວກັບຈອມກະສັດ (ດານີເອນ 10:4-9)**

ໃຫ້ທ່ານອ່ານດານີເອນ 10:4-9. ແມ່ນຫຍັງໄດ້ເກີດຂຶ້ນກັບດານີເອນໃນຂໍ້ພຣະຄຳພີເຫຼົ່ານີ້? ໃນດານີເອນ 10:5,6 ດານີເອນນັ້ນໄດ້ເຫັນຜູ້ໜຶ່ງທີ່ຄ້າຍຄືກັບບຸດມະນຸດ (ດານີເອນ 7:13). ຄົນຜູ້ນີ້ກໍໃສ່ເຄື່ອງນຸ່ງທີ່ເຮັດດ້ວຍຜ້າລີນິນ. ເພິ່ນໄດ້ແຕ່ງຕົວຄືກັບປະໂລຫິດ ຫຼື ຜູ້ນຳທາງສາດສະໜາ (ລະບຽບເລວີ 16:4 ນອກຈາກນັ້ນເພິ່ນຍັງເປັນຄືກັບ "ຈອມກະສັດຜູ້ຍິ່ງໃຫຍ່" (ດານີເອນ 8:25). ຊາຍຄົນນີ້ກໍເຮັດວຽກເພື່ອຊ່ວຍປະຊາຊົນຂອງພຣະເຈົ້າໃນພຣະວິຫານຢູ່ເທິງສະຫວັນ. ຜູ້ທີ່ດານີເອນເຫັນໃນດານີເອນ ບົດທີ 10:6,7 ກໍ່ໃສ່ຄຳຄືກັບກະສັດ ເພິ່ນມີຄວາມຮຸ່ງເຮືອງຄືກັບແສງຟ້າຜ່າ, ໄຟ ແລະ ທອງເຫຼືອງ. ເພິ່ນມີສຽງທີ່ມີພະລັງ. ເພິ່ນເປັນປະໂລຫິດ, ເປັນກະສັດ ແລະ ເປັນຜູ້ນຳກອງທັບ. ຄົນຜູ້ນີ້ຊ່ວຍພວກເຮົາໃຫ້ຈື່ຜູ້ຊາຍທີ່ປາກົດໂຕຕໍ່ໜ້າໂຢຊວຍ ກ່ອນທີ່ຈະມີສົງຄາມຕໍ່ຕ້ານເມືອງເຢຣີໂກ (ໂຢຊວຍ 5:13,14). ໃນຄວາມຝັນນັ້ນໂຢຊວຍໄດ້ເຫັນ "ຜູ້ບັນຊາການກອງທັບຂອງພຣະເຈົ້າຢາເວ" (ໂຢຊວຍ 5:14). ຄຳສັບພາສາເຮັບເລີ້ສຳລັບຄຳວ່າ "ຜູ້ບັນຊາການ" ຫຼື ກັບຕັນນັ້ນ ເປັນຄຳດຽວກັນກັບ "ຜູ້ພິທັກຮັກສາ" ໃນດານີເອນ 10:12.

**ອ່ານ ໂຢຊວຍ 5:13-15 ແລະ ພະນິມິດ 1:12-18 ຮູບພາບຂອງມະນຸດໃນພຣະທຳໂຢຊວຍ ແລະ ໃນພະນິມິດ ຄືກັນກັບຮູບພາບຂອງພຣະເຈົ້າໃນດານີເອນ ບົດທີ10 ແນວໃດ?**

ດານີເອນບອກພວກເຮົາກ່ຽວກັບສິ່ງທີ່ເກີດຂຶ້ນກັບປະຊາຊົນທີ່ຢູ່ກັບເພິ່ນ. ພວກເຂົາບໍ່ເຫັນໃນສິ່ງທີ່ດານີເອນເຫັນໃນຄວາມຝັນຂອງເພິ່ນ. ແຕ່ພວກເຂົາກໍຢ້ານ

ກົວ. ດານີເອນເອງກໍຮູ້ສຶກອ່ອນແອລົງ ແລ້ວເພິ່ນກໍລົ້ມລົງພື້ນ. ຄວາມຝັນຂອງດານີເອນກໍສະແດງໃຫ້ເຫັນວ່າ ພຣະເຈົ້າຊົງຄວບຄຸມປະຫວັດສາດ. ດັ່ງທີ່ພວກເຮົາຈະເຫັນຕໍ່ໄປ ພຣະເຈົ້າໄດ້ບອກດານີເອນເຖິງສິ່ງຕ່າງໆທີ່ຈະເກີດຂຶ້ນໃນປະຫວັດສາດຂອງມະນຸດ ຕັ້ງແຕ່ສະໄໝຂອງດານີເອນໄປຫາອານາຈັກຂອງພຣະເຈົ້າ (ດານີເອນ ບົດທີ11 ແລະ ດານີເອນ ບົດທີ12).

**ວັນອັງຄານ** **10 ມີນາ**

**<u>ທູດສະຫວັນສໍາພັດດານີເອນ (ດານີເອນ 10:10-19)</u>**

**ອ່ານກ່ຽວກັບດານີເອນ ແລະ ທູດສະຫວັນໃນ ດານີເອນ 10:10-19. ແມ່ນຫຍັງໄດ້ເກີດຂຶ້ນທຸກເທື່ອທີ່ທູດສະຫວັນສໍາພັດດານີເອນ?**

ແສງທີ່ມາຈາກພຣະເຈົ້ານັ້ນກໍເຮັດໃຫ້ດານີເອນນັ້ນລົ້ມລົງໄປພື້ນດິນ ແລ້ວທູດສະຫວັນອົງໜຶ່ງກໍສໍາພັດດານີເອນແລະປອບໃຈເພິ່ນ. ຕາມທີ່ເຮົາອ່ານເລື່ອງນີ້ ເຮົາເຫັນວ່າທູດສະຫວັນນັ້ນສໍາພັດດານີເອນສາມເທື່ອ.

ການສໍາພັດຄັ້ງທີໜຶ່ງນັ້ນຊ່ວຍໃຫ້ດານີເອນຢືນຂຶ້ນ ແລ້ວເພິ່ນກໍສາມາດໄດ້ຍິນຂ່າວສານຈາກສະຫວັນໄດ້ (ດານີເອນ 10:12). ຄໍາອະທິຖານຂອງດານີເອນກໍປ່ຽນແປງຈິດໃຈຂອງພຣະເຈົ້າໃນສະຫວັນ. ດັ່ງນັ້ນ ພວກເຮົາຈຶ່ງເຫັນໄດ້ວ່າ ພຣະເຈົ້າໄດ້ຍິນຄໍາອະທິຖານຂອງພວກເຮົາ. ພວກເຮົາສາມາດໄວ້ວາງໃຈໃຫ້ພຣະເຈົ້າຊ່ວຍພວກເຮົາໃນເວລາທີ່ມີບັນຫາເຊັ່ນດຽວກັນ.

ການສໍາພັດເທື່ອທີສອງຊ່ວຍໃຫ້ດານີເອນເວົ້າໄດ້. ເພິ່ນໄດ້ບອກອົງພຣະຜູ້ເປັນເຈົ້າເຖິງສິ່ງທີ່ຢູ່ໃນໃຈຂອງເພິ່ນ (ດານີເອນ 10:16,17). ສ່ວນນີ້ຂອງເລື່ອງດານີເອນນັ້ນສະແດງໃຫ້ພວກເຮົາເຮັດສິ່ງໃດ? ພຣະເຈົ້າຕ້ອງການທີ່ຈະລົມກັບພວກເຮົາ. ແມ່ນແລ້ວ ແຕ່ພຣະອົງຍັງຊົງຕ້ອງການໃຫ້ພວກເຮົາບອກພຣະອົງເຖິງຄວາມຮູ້ສຶກ, ຄວາມຕ້ອງການ ແລະ ຄວາມຫວັງຂອງພວກເຮົາ.

ການສຳພັດເທື່ອທີສາມເຮັດໃຫ້ດານີເອນມີກຳລັງ. ທູດສະຫວັນກໍໃຫ້ກຳລັງໃຈ ແລະ ສັນຕິສຸກແກ່ດານີເອນ (ດານີເອນ 10:19). ໃຫ້ທ່ານຈື່ວ່າພຣະເຈົ້າໄດ້ສົ່ງທູດສະຫວັນໄປຫາດານີເອນ ເພື່ອຕອບຄຳອະທິຖານຂອງດານີເອນ. ສະນັ້ນ ຄວາມຝັນຂອງດານີເອນ ບົດທີ11 ກໍຄືສ່ວນໜຶ່ງຂອງຄຳຕອບຂອງພຣະເຈົ້າສຳລັບຄຳອະທິຖານຂອງດານີເອນເຊັ່ນດຽວກັນ. ດານີເອນມີຄວາມໂສກເສົ້າຫຼາຍກ່ຽວກັບປະຊາຊົນຂອງພຣະອົງ. ເວລານີ້ ພຣະເຈົ້າຈຶ່ງປະທານສັນຕິສຸກໃຫ້ກັບເພິ່ນ. ພວກເຮົາເອງກໍສາມາດຮັບເອົາສັນຕິສຸກນີ້ ໃນເວລານີ້ທີ່ມີອຸປະສັກຫຼືບັນຫາອັນຫຍຸ້ງຍາກເຊັ່ນກັນ. ການສຳພັດທີ່ເຕັມໄປດ້ວຍຄວາມຮັກຂອງພຣະເຈົ້າກໍຊ່ວຍພວກເຮົາໃຫ້ເບິ່ງໄປຫາອະນາຄົດດ້ວຍຄວາມຫວັງ.

**ວັດພຸດ 11 ມີນາ**

**<u>ສົງຄາມໃຫຍ່ (ດານີເອນ 10:20,21)</u>**

ແມ່ນຫຍັງຖືກສະແດງໃຫ້ດານີເອນເຫັນໃນພຣະທຳດານີເອນ 10:20, 21? ທູດສະຫວັນໄດ້ສະແດງໃຫ້ດານີເອນເຫັນສົງຄາມລະຫວ່າງຄວາມດີ ແລະ ຄວາມຊົ່ວຮ້າຍທີ່ເກີດຂຶ້ນຕະຫຼອດໃນປະຫວັດສາດຂອງມະນຸດທັງໝົດ. ທັນທີທັນໃດທີ່ດານີເອນເລີ່ມອະທິຖານ ສົງຄາມດ້ານຈິດວິນຍານກໍເລີ່ມຕົ້ນຂຶ້ນລະຫວ່າງ ສະຫວັນ ແລະ ແຜ່ນດິນໂລກ. ທູດສະຫວັນຈາກສະຫວັນກໍທຳງານໃນໃຈຂອງກະສັດເປີເຊຍ ທູດສະຫວັນແຫ່ງສະຫວັນກໍພະຍາຍາມເກັຍກ່ອມກະສັດໃຫ້ປ່ອຍຊາວຢິວກໍ່ສ້າງພຣະວິຫານຄືນໃໝ່. ດານີເອນ ບົດທີ10 ສະແດງໃຫ້ພວກເຮົາເຫັນວ່າ ກະສັດແຫ່ງເປີເຊຍກໍຄືໄຊຣັດ. ເພິ່ນໄດ້ຕໍ່ສູ້ກັບທູດສະຫວັນ. ກະສັດທີ່ເປັນມະນຸດກໍ່ບໍ່ເຂັ້ມແຂງພໍທີ່ຈະຕໍ່ສູ້ເທວະດາທີ່ມາຈາກສະຫວັນ. ສະນັ້ນເຮົາຈຶ່ງຮູ້ວ່າທູດສະຫວັນທີ່ຊົ່ວຮ້າຍນັ້ນເປັນຜູ້ເຮັດໃຫ້ຫົວໃຈຂອງກະສັດນັ້ນແຂງກະດ້າງ. ນັ້ນເປັນເຫດຜົນທີ່ກະສັດໄຊຣັດນັ້ນຢຸດຊາວຢິວບໍ່ໃຫ້ສ້າງພຣະວິຫານຄືນໃໝ່.

ພວກເຮົາເຫັນສິ່ງດຽວກັນນີ້ເກີດຂຶ້ນກັບກະສັດຕີເຣ ໃນເອເຊກຽນ ບົດທີ 28. ກະສັດຕີເຣ ກໍ່ເປັນຮູບທີ່ພັນລະນາຊາຕານ. ຊາຕານກໍ່ຄືອຳນາດທີ່ຢູ່ເບື້ອງຫຼັງຂອງ

ກະສັດທີ່ເປັນມະນຸດໃນເມືອງຕີເຣ. ດັ່ງນັ້ນ ພວກເຮົາບໍ່ຄວນທີ່ຈະແປກໃຈທີ່ກະສັດແຫ່ງອານາຈັກເປີເຊຍກໍລວມເຖິງຊາຕານແລະເທວະດາຂອງມັນ. ມີຄາເອນ ຫຼື ພຣະເຢຊູກໍໄດ້ມາເພື່ອທີ່ຈະຕໍ່ສູ້ກັບອຳນາດທີ່ຊົ່ວຮ້າຍເຫຼົ່ານີ້.

**ອ່ານກ່ຽວກັບການຕໍ່ສູ້ກັນໃນດານີເອນ 10:13. ແມ່ນຫຍັງໄດ້ເກີດຂຶ້ນໃນການຕໍ່ສູ້ຄັ້ງນີ້?**

**ວັນພະຫັດ** **12 ມີນາ**

**<u>ຜູ້ພິທັກຮັກສາໄດ້ຮັບໄຊຊະນະ (ໂກໂລຊາຍ 2:15)</u>**

ຄົນທີ່ສຳຄັນທີ່ສຸດໃນພຣະທຳ ດານີເອນກໍຄື “ບຸດມະນຸດ” (ດານີເອນ 7:13). ນອກຈາກນັ້ນພຣະອົງຍັງຖືກເອີ້ນວ່າ “ຜູ້ບັນຊາການກອງທັບແຫ່ງຟ້າສະຫວັນ” (ດານີເອນ 8:11). ຕໍ່ມາພວກເຮົາຮຽນຮູ້ວ່າຊື່ຂອງເພິ່ນຄື ມີຄາເອນ (ດານີເອນ 10:12). ມີຄາເອນໝາຍເຖິງ “ແມ່ນໃຜຄືກັບພຣະເຈົ້າ?” ມີຄາເອນມາເພື່ອຈະຊ່ວຍ ກາບີເອນ ໃນສົງຄາມກັບກະສັດຂອງອານາຈັກເປີເຊຍ (ດານີເອນ 10:13). ຄາບີເອນ ບອກດານີເອນວ່າ ຄົນທີ່ມີຈາກສະຫວັນນັ້ນຊື່ວ່າ “ມີຄາເອນທີ່ພິທັກຮັກສາ” (ດານີເອນ 10:21). ດັ່ງນັ້ນ ມີຄາເອນຈຶ່ງເປັນຜູ້ພິທັກຮັກສາຂອງປະຊາຊົນຂອງພຣະເຈົ້າ. ຕໍ່ມາໃນພຣະທຳດານີເອນ ມີຄາເອນກໍ່ເປັນຜູ້ຢືນຂຶ້ນເພື່ອປະຊາຊົນຂອງພຣະເຈົ້າ (ດານີເອນ 12:1). ຢູດາ 1:9 ສະແດງໃຫ້ພວກເຮົາເຫັນວ່າ ມີຄາເອນຄືທູດສະຫວັນທີ່ສູງສຸດໃນສະຫວັນ. ເພິ່ນໄດ້ຕໍ່ສູ້ກັບຊາຕານແລະໄດ້ເຮັດໃຫ້ໂມເຊຟື້ນຄືນຈາກຄວາມຕາຍ. ພຣະທຳພະນິມິດ 12:7 ສະແດງໃຫ້ພວກເຮົາເຫັນວ່າ ມີຄາເອນ ຄືຜູ້ນຳຂອງກອງທັບສະຫວັນ. ມີຄາເອນ ແລະ ກອງທັບນີ້ກໍເອົາຊະນະຊາຕານແລະເທວະດາຜູ້ຊົ່ວຮ້າຍ. ດັ່ງນັ້ນ ມີຄາເອນ ກໍຄືພຣະເຢຊູນັ້ນເອງ. ອານາຈັກເປີເຊຍກໍມີຜູ້ນຳຂັ້ນສູງທີ່ຢູ່ເບື້ອງຫຼັງກະສັດ. ຜູ້ນຳຄົນນີ້ຄືອຳນາດທາງດ້ານຈິດວິນຍານ. ອຳນາດນີ້ຄືຊາຕານນັ້ນເອງ. ນອກນັ້ນ ປະຊາຊົນຂອງພຣະເຈົ້າກໍມີຜູ້ນຳສູງສຸດ. ຜູ້ນຳຜູ້ນີ້ກໍຄືມີຄາເອນ ຜູ້ເປັນກັບຕັນ ຫຼື ຜູ້ສັ່ງການ. ເພິ່ນໄດ້

ຕໍ່ສູ້ສຳລັບພວກເຂົາແລະກໍໄດ້ເອົາຊະນະສົງຄາມຕໍ່ສູ້ຄວາມຊົ່ວຮ້າຍ ສຳລັບພວກເຂົາເຊັ່ນດຽວກັນ.

**ອ່ານໂກໂລຊາຍ 2:15 ພຣະເຢຊູໄດ້ຊະນະສົງຄາມລະຫວ່າງຄວາມດີ ແລະຄວາມຊົ່ວ ສຳລັບພວກເຮົາໄດ້ແນວໃດ?**

ບາງເທື່ອ ພວກເຮົາຫຼຽວເບິ່ງຊີວິດທີ່ຢູ່ອ້ອມຂ້າງພວກເຮົາ ແລະເຫັນວ່າສິ່ງຕ່າງໆອາດຈະເບິ່ງຄືບໍ່ດີ. ແມ່ນແລ້ວ ເພາະວ່າມີສັດຕູທີ່ກຳລັງຕໍ່ສູ້ກັບພວກເຮົາ. ສັດຕູນີ້ບໍ່ໄດ້ມີເນື້ອໜັງແລະເລືອດເນື້ອຄືກັບເຮົາ. ແຕ່ພຣະເຢຊູກໍຕໍ່ສູ້ສຳລັບພວກເຮົາ ພຣະອົງຊົງຢືນຢູ່ສຳລັບພວກເຂົາໃນຖານະທີ່ເປັນກະສັດແລະເປັນຜູ້ນຳຜູ້ບໍລິສຸດ.

**ວັນສຸກ 13 ມີນາ**

**<u>ຂໍ້ຄິດເພີ່ມເຕີມ</u>**

"ຕະຫຼອດສາມອາທິດ ທູດສະຫວັນຄາບີເອນກໍໄດ້ຕໍ່ສູ້ກັບອຳນາດຂອງຄວາມມືດມົນ. ຄາບີເອນໄດ້ພະຍາຍາມທີ່ຈະຢຸດອຳນາດຄວາມຊົ່ວຮ້າຍທີ່ຢູ່ໃນໃຈຂອງໄຊຣັດ ....ສະຫວັນກໍກະທຳທຸກຢ່າງທີ່ເຮັດໄດ້ເພື່ອທີ່ຈະຊ່ວຍເຫຼືອປະຊາຊົນຂອງພຣະເຈົ້າ. ສະຫວັນກໍເອົາຊະນະສົງຄາມນີ້ ພຣະເຢຊູແລະທູດສະຫວັນຂອງພຣະອົງກໍຢຸດຕິຊາຕານແລະ ບໍລິວານຂອງມັນໃນຊ່ວງເວລາທີ່ໄຊຣັດເປັນກະສັດ ແລະໃນໄລຍະເວລາທີ່ລູກຊາຍຂອງກະສັດໄຊຣັດແຄມໄບຊັດປົກຄອງເຊັ່ນດຽວກັນ" (ປື້ມທ່ານນາງເອເລັນຈີໄວທ໌).

**<u>ຄຳຖາມຄົ້ນຄວ້າ:</u>**

1. ໃນຖານະທີ່ພວກເຮົາເປັນຄຣິສຕຽນຄະນະເຊເວັນເດແອັດເວັນຕິດ ພວກເຮົາເຊື່ອໃນສົງຄາມທີ່ເກີດຂຶ້ນທົ່ວໂລກລະຫວ່າງຄວາມດີແລະຄວາມຊົ່ວ. ພວກເຮົາເຊື່ອວ່າ ສະຫວັນທັງໝົດກໍເປັນສ່ວນໜຶ່ງຂອງສົງຄາມອັນຍິ່ງໃຫຍ່ລະຫວ່າງ ພຣະເຢຊູ ແລະ ຊາຕານ. ນອກຈາກ

ນັ້ນ ພວກເຮົາຍັງເຊື່ອວ່າມະນຸດທຸກໆຄົນກໍ່ເປັນສ່ວນໜຶ່ງຂອງສົງຄາມນີ້. ຫຼາຍຄົນທີ່ບໍ່ມີສາດສະໜາກໍບໍ່ໄດ້ເຊື່ອວ່າມີສົງຄາມເກີດຂຶ້ນລະຫວ່າງ ຄວາມດີ ແລະ ຄວາມຊົ່ວຮ້າຍໃນໂລກນີ້. ປະສົບການຂອງທ່ານໃນສົງຄາມນີ້ເປັນແນວໃດ? ມັນໄດ້ປ່ຽນແປງຊີວິດຂອງທ່ານແນວໃດ? ທ່ານໄດ້ຮຽນຮູ້ສິ່ງໃດ? ປະສົບການຂອງທ່ານສາມາດໃຫ້ກຳລັງໃຈຫຼືໜູນໃຈແລະຊ່ວຍຄົນອື່ນໆໃນສົງຄາມນີ້ແນວໃດ?

2. ທູດສະຫວັນໄດ້ກ່າວກັບດານີເອນສອງເທື່ອວ່າ “ພຣະເຈົ້າຊົງຮັກທ່ານຫຼາຍ” (ດານີເອນ 10:11 ແລະ ດານີເອນ 9:23). ຄຳເວົ້າຂອງທູດສະຫວັນບອກຫຍັງພວກເຮົາກ່ຽວກັບຄວາມເຊື່ອມໂຍງອັນໃກ້ຊິດລະຫວ່າງສະຫວັນ ແລະ ແຜ່ນດິນໂລກ? ມັນສະແດງໃຫ້ພວກເຮົາເຫັນວ່າພຣະເຈົ້າຊົງຮັກປະຊາຊົນຂອງພຣະອົງຫຼາຍແນວໃດ? ໃຫ້ທ່ານປຽບທຽບມຸມມອງ ຂອງພຣະຄຳພີກ່ຽວກັບມະນຸດ ກັບ ມຸມມອງຂອງຜູ້ທີ່ບໍ່ໄດ້ເຊື່ອພຣະເຈົ້າ. ທັງສອງມຸມມອງຫຼືແນວຄິດນັ້ນແຕກຕ່າງກັນແນວໃດ? ມຸມມອງຂອງພຣະຄຳພີນັ້ນໃຫ້ຄວາມຫວັງອັນໃດແກ່ເຮົາ?

# ບົດທີ 12

## ຈາກທິດເໜືອສູ່ທິດໃຕ້ໄປຫາດິນແດນອັນສວຍງາມ

**(14 – 20 ມີນາ 2019)**

**ບ່າຍວັນສະບາໂຕ** **14 ມີນາ**

**<u>ອ່ານສໍາລັບບົດຮຽນອາທິດນີ້</u>**

**ດານີເອນ 11:1-14; ດານີເອນ 8:3-8; 20-22; ເອຊາຢາ 46:9-10; ດານີເອນ 11:16-39; ດານີເອນ 11:40-45.**

**ຂໍ້ຄວນຈໍາ:** *"ຜູ້ນໍາທີ່ມີປັນຍາເຫຼົ່ານີ້ບາງຄົນຈະຖືກຂ້າ, ແຕ່ຜົນທີ່ຕາມມານັ້ນກໍເພື່ອປະຊາຊົນຈະໄດ້ຖືກຊໍາລະລ້າງໃຫ້ບໍລິສຸດ. ການນີ້ຈະມີສືບຕໍ່ໄປຈົນເຖິງເວລາແຫ່ງການສິ້ນສຸດທີ່ພຣະເຈົ້າໄດ້ກໍານົດໄວ້." (ດານີເອນ 11:35)*

ດານີເອນ ບົດທີ11 ເປັນບົດທີ່ເຂົ້າໃຈຍາກ ດັ່ງນັ້ນພວກເຮົາຈະຕ້ອງມີຄວາມຈະແຈ້ງກ່ຽວກັບບາງຢ່າງຕັ້ງແຕ່ເລີ່ມຕົ້ນ. ແລ້ວພວກເຮົາກໍຈະເຂົ້າໃຈບົດພຣະຄໍາພີນີ້ດີຂຶ້ນ. ດານີເອນ ບົດທີ11 ສະແດງຂ່າວສານອັນດຽວກັນທີ່ພວກເຮົາໄດ້ເຫັນມາແລ້ວໃນພຣະທໍາດານີເອນ ບົດທີ 2,7,8 ແລະ 9.

ດານີເອນ ບົດທີ11 ກໍມີ ສາມພາກສ່ວນທີ່ເປັນພື້ນຖານ. ຢ່າງທີໜຶ່ງຄື ພຣະທໍາບົດນີ້ເລີ່ມຕົ້ນດ້ວຍກະສັດເປີເຊຍທັງຫຼາຍແລະສິ່ງທີ່ເກີດຂຶ້ນກັບພວກເຂົາ. ແລ້ວບົດນີ້ກໍບອກພວກເຮົາກ່ຽວກັບວາລະສຸດທ້າຍເມື່ອກະສັດຂອງທິດເໜືອນັ້ນຕໍ່ສູ້ກັບພູເຂົາບໍລິສຸດຂອງພຣະເຈົ້າ. ຢ່າງທີສອງ ກະສັດແຫ່ງທິດເໜືອ ແລະ ກະສັດແຫ່ງທິດໃຕ້ ກໍໄດ້ຕໍ່ສູ້ກັນຫຼາຍເທື່ອ. ດານີເອນ ບົດທີ11 ສະແດງໃຫ້ພວກເຮົາເຫັນວ່າສົງຄາມເຫຼົ່ານີ້ກໍທໍາລາຍປະຊາຊົນຂອງພຣະເຈົ້າ. ປະການທີສາມ ດານີເອນ ບົດທີ 11 ສະແດງເຖິງຈຸດຈົບທີ່ມີຄວາມສຸກ: ພູເຂົາຂອງພຣະເຈົ້າທໍາລາຍກະສັດແຫ່ງ

ທິດເໜືອ. ພວກເຮົາເຫັນວ່າ ຄວາມຊົ່ວຮ້າຍຈະສິ້ນສຸດລົງຕະຫຼອດໄປ ແລ້ວພຣະເຈົ້າກໍຈັດຕັ້ງອານາຈັກອັນຕະຫຼອດໄປເປັນນິດຂອງພຣະອົງ.

**ວັນອາທິດ 15 ມີນາ**

**ຂ່າວສານພິເສດກ່ຽວກັບເປີເຊຍ ແລະ ກຣີກ (ດານີເອນ 11:1-4)**

**ອ່ານດານີເອນ 11:1-4. ແມ່ນຫຍັງໄດ້ເກີດຂຶ້ນໃນຂໍ້ພຣະຄຳພີເຫຼົ່ານີ້? ສິ່ງເຫຼົ່ານີ້ຊ່ວຍພວກເຮົາຈື່ເຫດການໃນອະນາຄົດອື່ນໆທີ່ພວກເຮົາໄດ້ຮຽນຮູ້ໃນພຣະທຳດານີເອນແນວໃດ?**

ທູດສະຫວັນກາບີເອນ ບອກດານີເອນວ່າ ກະສັດອີກສາມອົງຈະຄວບຄຸມປະເທດເປີເຊຍ. ກະສັດອົງທີສີ່ ຈະຂຶ້ນຄອງຫຼັງຈາກພວກເຂົາ. ກະສັດອົງທີສີ່ກໍ່ຄືກະສັດເຊເຊັດ. ເພິ່ນມີຊື່ວ່າ ອາຮາຊູຣັດ ໃນພຣະທຳເອສະເທີ. ກະສັດເອຮາຊູຣັດເປັນກະສັດທີ່ຈະເລີນຮັ່ງມີ (ເອສະເທີ 1:1-7). ກະສັດເຊເຊັດນັ້ນຈັດຕັ້ງກອງທັບໃຫຍ່ ແລ້ວເພິ່ນກໍເຄື່ອນທັບສູ່ອານາຈັກກຣີກ ດັ່ງທີ່ກາບີເອນໄດ້ກ່າວໄວ້ວ່າຈະເກີດ. ກະສັດຊາເຊັດມີພະລັງອຳນາດຢ່າງຫຼວງຫຼາຍ. ກອງທັບຂອງເພິ່ນກໍໃຫຍ່ກວ່າກອງທັບກຣີກ. ແຕ່ທະຫານຂອງກຣີກກໍໄດ້ໄລ່ກະສັດເຊເຊັດອອກຈາກປະເທດຂອງເຂົາ.

ແລ້ວໃນດານີເອນ 11:3 ກະສັດກຣີກຜູ້ຍິ່ງໃຫຍ່ກໍລຸກຂຶ້ນ. ມັນເປັນເລື່ອງງ່າຍທີ່ຈະເບິ່ງວ່າກະສັດຜູ້ນີ້ກໍຄືອາເລັກເຊັນເດີ້. ອາເລັກເຊັນເດີໄດ້ກາຍເປັນຜູ້ນຳຂອງໂລກນີ້. ເພິ່ນໄດ້ເສຍຊີວິດຕອນອາຍຸ 32 ປີ. ເພິ່ນບໍ່ມີລູກຊາຍເພື່ອຂຶ້ນຄອງອານາຈັກແທນ. ດັ່ງນັ້ນ ຜູ້ນຳທະຫານທັງສີ່ຂອງອາເລັກເຊັນເດີນັ້ນກໍໄດ້ແບ່ງອານຈັກອອກເປັນສີ່ສ່ວນ ແລະໄດ້ຂຶ້ນປົກຄອງຄົນລະສ່ວນ. ຊີລືກັດ ໄດ້ປົກຄອງຊີເຣຍ ແລະ ມີໂຊໂປເຕເມຍ. ໂຕເລມີ ໄດ້ປົກຄອງເອຢິບ. ລີຊີມາກັດ ກໍໄດ້ປົກຄອງເຂດເທຼສ ແລະ ສ່ວນໜຶ່ງຂອງເອເຊຍມາຍເນີ ຫຼື ປະເທດຕຸຣະກີໃນປະຈຸບັນ. ແລະກາເຊັນເດີ ກໍປົກຄອງມາຊຊີໂດເນຍ ແລະ ກຣີກ.

**ໃຫ້ທ່ານປຽບທຽບ ດານີເອນ 11:2-4 ກັບດານີເອນ 8:3-8, 20-22. ພວກເຮົາຮູ້ໄດ້ແນວໃດວ່າອາເລັກເຊັນເດີຄືກະສັດທີ່ຂໍ້ພຣະຄຳພີເຫຼົ່ານີ້ເວົ້າເຖິງ?**

**ວັນຈັນ 16 ມີນາ**

**ຂ່າວສານພິເສດກ່ຽວກັບຊີເຣຍ ແລະ ເອຢິບ (ດານີເອນ 11:5-14)**

ອ່ານດານີເອນ 11:5-14. ແມ່ນຫຍັງໄດ້ເກີດຂຶ້ນໃນຂໍ້ພຣະຄຳພີເຫຼົ່ານີ້. ອາເລັກເຊນເດີໄດ້ເສຍຊີວິດແລ້ວ. ຜູ້ບັນຊາການກອງທັບຂອງເພິ່ນທັງສີ່ຄົນກໍ່ໄດ້ແບ່ງອານາຈັກອອກເປັນສ່ວນໆ ແລະ ຜູ້ບັນຊາການແຕ່ລະຄົນກໍປົກຄອງຄົນລະສ່ວນຂອງອານາຈັກ. ຜູ້ບັນຊາການສອງຄົນໃນນັ້ນ ຄືຊີລືກັດ (ທິດເໜືອ) ແລະ ໂຕເລມີໃນເອຢິບ (ທິດໃຕ້). ລູກຫຼານຂອງຜູ້ບັນຊາການສອງຄົນນີ້ກໍຍາດຊິງກັນທີ່ຈະປົກຄອງດິນແດນນີ້.

ດານີເອນ 11:5-14 ສະແດງໃຫ້ເຫັນເຖິງສົງຄາມລະຫວ່າງກະສັດຢູ່ທິດເໜືອແລະກະສັດຢູ່ທິດໃຕ້. ນັກຮຽນພຣະຄຳພີສ່ວນຫຼາຍເຊື່ອວ່າສົງຄາມເຫຼົ່ານີ້ສະແດງໃຫ້ເຫັນວ່າການຕໍ່ສູ້ທີ່ຈະເກີດຂຶ້ນລະຫວ່າງລູກຫຼານຂອງ ຊີລືກັດແລະໂຕເລມີ ໃນອະນາຄົດ. ຂ່າວສານພິເສດໃນດານີເອນ ບົດທີ11 ສະແດງໃຫ້ພວກເຮົາເຫັນວ່າລູກສາວຂອງກະສັດທາງເໜືອຈະແຕ່ງງານກັບກະສັດທາງທິດໃຕ້. ປະຫວັດສາດກໍສະແດງໃຫ້ເຫັນວ່າ ອັນຕີໂອກັດ ຕີອົດຜູ້ທີສອງ (ປີ 261-246 ກ່ອນ ຄສ) ໄດ້ແຕ່ງງານກັບ ເບເຣນິສ. ອັນຕີໂອກັດ ຕີອົດຜູ້ທີສອງເປັນຫຼານຊາຍຂອງຊີລືກັດຜູ້ທີໜຶ່ງ. ເບເຣນິສ ແມ່ນລູກສາວຂອງໂຕໂລມີ ຟີລາເດວຟັສ ຜູ້ທີສອງ. ແຕ່ການແຕ່ງງານຂອງພວກເຂົາບໍ່ໄດ້ນຳຄວາມສະຫງົບສຸກມາໃຫ້ດົນປານໃດ. ຕໍ່ມາບໍ່ດົນອານາຈັກສອງອານາຈັກກໍໄດ້ເລີ່ມຕໍ່ສູ້ກັນອີກເທື່ອໜຶ່ງ. ປະຊາຊົນຂອງພຣະເຈົ້າກໍໄດ້ຮັບຄວາມເຈັບປວດໃນການຕໍ່ສູ້ນີ້ຫຼາຍເທື່ອ.

ເປັນຫຍັງພຣະເຈົ້າຈຶ່ງບອກຂໍ້ມູນເຫຼົ່ານີ້ກ່ຽວກັບອານາຈັກແລະສົງຄາມທັງຫຼາຍໄວ້ລ່ວງໜ້າ? ເຫດຜົນກໍລຽບງ່າຍ: ສົງຄາມເຫຼົ່ານີ້ຈະທຳຮ້າຍປະຊາຊົນຂອງພຣະເຈົ້າ. ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງປະກາດເຖິງສິ່ງທີ່ຈະເກີດຂຶ້ນໃນອະນາຄົດ. ແລ້ວ

ປະຊາຊົນຂອງພຣະອົງກໍຈະຮູ້ກ່ຽວກັບບັນຫາຄວາມຫຍຸ້ງຍາກທີ່ລໍຖ້າພວກເຂົາໃນຫຼາຍປີຕໍ່ໜ້າ.

**ວັນອັງຄານ 17 ມີນາ**

## <u>ໂຣມ ແລະ ຜູ້ພິທັກຄວາມສະຫງົບ (ດານີເອນ 11:16-28)</u>

**ອ່ານພຣະທຳ ດານີເອນ 11:16-28. ຂໍ້ພຣະຄຳພີເຫຼົ່ານີ້ກໍບໍ່ງ່າຍທີ່ຈະເຂົ້າໃຈ ແຕ່ທ່ານສາມາດເຫັນຮູບພາບທີ່ພັນລະນາ ຫຼື ສັນຍາລັກອັນໃດແດ່ໃນຂໍ້ພຣະຄຳພີເຫຼົ່ານີ້? ທ່ານອ່ານກ່ຽວກັບສັນຍາລັກເຫຼົ່ານີ້ຢູ່ໃສອີກໃນພຣະທຳດານີເອນ?**

ໃນດານີເອນ 11:16 ພວກເຮົາກໍເຫັນການປ່ຽນແປງໃນການກຳອຳນາດຈາກກະສັດຊາວກຣີກໄປເປັນກະສັດໂລມັນ. ກ່ອນອື່ນໝົດ ກະສັດທາງທິດເໜືອກໍເປັນຄຳທີພັນລະນາປະເທດກຣີກ. ແຕ່ເວລານີ້ ມັນໄດ້ກາຍເປັນຄຳທີ່ພັນລະນາກຸງໂຣມ: "ຊາວຊີເຣຍ (ກະສັດທິດເໜືອ) ຜູ້ບຸກຮຸກຈະເຮັດທຸກຢ່າງຕາມຄວາມພໍໃຈໂດຍບໍ່ມີການຕໍ່ຕ້ານ. ລາວຈະຢູ່ໃນດິນແດນແຫ່ງພຣະສັນຍາແລະຈະມີອຳນາດສົມບູນໃນດິນແດນນັ້ນ" (ດານີເອນ 11:16)

ດິນແດນອັນສວຍງາມນັ້ນກໍຄື ເຢລູຊາເລັມ. ກະສັດທາງທິດເໜືອທີ່ຄວບຄຸມຂອບເຂດນັ້ນ ກໍຄືອານາຈັກໂຣມັນ. ພວກເຮົາເຫັນສິ່ງດຽວກັນນີ້ເກີດຂຶ້ນໃນດານີເອນ ບົດທີ8 ເມື່ອເຂົານ້ອຍເຮັດໃຫ້ອານາຈັກຂອງມັນໃຫຍ່ຂຶ້ນ. ເຂົານ້ອຍນັ້ນກໍຂະຫຍາຍອານາຈັກອອກໄປຮອດເຢລູຊາເລັມ (ດານີເອນ 8:9). ດັ່ງນັ້ນ ມັນກໍຈະແຈ້ງທີ່ວ່າອຳນາດທີ່ຄອບຄອງໂລກໃນເວລານີ້ ກໍຄືອານາຈັກໂຣມັນ.

ດານີເອນ ບົດທີ11 ສະແດງໃຫ້ພວກເຮົາເຫັນວ່າ: "ຜູ້ໃດຜູ້ໜຶ່ງທີ່ຕໍ່ຕ້ານລາວຈະຖືກກວາດລ້າງແລະຖືກກຳຈັດ ແມ່ນແຕ່ມະຫາປະໂລຫິດ" (ດານີເອນ 11:22). ໃນຊ່ວງເວລາທີ່ ຕິເບຣີອຸດຂຶ້ນເປັນກະສັດນັ້ນ ສິ່ງນີ້ສະແດງໃຫ້ພວກເຮົາເຫັນສິ່ງໃດ? ມັນສະແດງໃຫ້ພວກເຮົາເຫັນວ່າ ພຣະເຢຊູຈະຕາຍເທິງໄມ້ກາງແຂນ ນອກຈາກນັ້ນພຣະເຢຊູຍັງຈະຖືກເອີ້ນວ່າ: "ຜູ້ນຳທີ່ພວກເຈົ້າເລືອກ" (ດານີເອນ 9:25).

## ອານາຈັກຕໍ່ໄປ (ດານີເອນ 11:29-39)

**ອ່ານດານີເອນ 11:29-39. ດັ່ງທີ່ຂໍ້ພຣະຄຳພີສະແດງໃຫ້ພວກເຮົາເຫັນ ອານາຈັກໃດໄດ້ລຸກຂຶ້ນກຳອຳນາດຫຼັງຈາກອານາຈັກໂຣມັນ?**

ດານີເອນ 11:29-39 ສະແດງໃຫ້ພວກເຮົາເຫັນອານາຈັກໜຶ່ງເທິງໂລກນີ້. ອານາຈັກນີ້ກໍເປັນສ່ວນໜຶ່ງຂອງອານາຈັກໂຣມັນເກົ່າ. ມັນໄດ້ເຮັດຫຼາຍຢ່າງຄືກັບອານາຈັກໂຣມັນ ແຕ່ອຳນາດໃໝ່ນີ້ກໍມີແຕ່ຄວາມແຕກຕ່າງ (ດານີເອນ 11:29). ນອກຈາກນັ້ນ ພວກເຮົາກໍຍັງເຫັນວ່າອານາຈັກໃໝ່ນີ້ປະພຶດແບບດຽວກັບອຳນາດຂອງສາດສະໜາ. ມັນໄດ້ມີການໂຈມຕີພຣະເຈົ້າແລະປະຊາຊົນຂອງພຣະອົງ. ໃຫ້ເຮົາມາເບິ່ງບາງຢ່າງທີ່ອຳນາດໃໝ່ນີ້ໄດ້ເຮັດ.

ກ່ອນອື່ນ ອຳນາດນີ້ຈະ "ວາງແຜນທຳລາຍພັນທະສັນຍາແຫ່ງໄພ່ພົນຂອງພຣະເຈົ້າ" (ດ້ວຍຄວາມຄຽດແຄ້ນ) (ດານີເອນ 11:30). ຢ່າງທີສອງ ອຳນາດໃໝ່ນີ້ "ໂຈມຕີແມ່ນແຕ່ກອງທັບແຫ່ງຟ້າສະຫວັນ ໂດຍຫ້າມປາມບໍ່ໃຫ້ຜູ້ໃດນຳເຄື່ອງເຜົາບູຊາປະຈຳວັນມາຖວາຍແກ່ກອງທັບ ແລະ ທັງທຳລາຍມ້າງເພພຣະວິຫານຂອງພຣະເຈົ້າດ້ວຍ" (ດານີເອນ 8:11). ຢ່າງທີສາມ ອຳນາດນີ້ "ເຮັດໃຫ້ພຣະວິຫານເສຍຄວາມສັກສິດ ພວກເຂົາຈະໃຫ້ເລີກການເຜົາບູຊາປະຈຳວັນ ແລະ ຕັ້ງສິ່ງແປກປະຫຼາດອັນໜ້າຢ້ານຂຶ້ນ (ດານີເອນ 11:31)". ຢ່າງທີສີ່ ອຳນາດນີ້ເຮັດສົງຄາມກັບປະຊາຊົນຂອງພຣະເຈົ້າ (ດານີເອນ 11:35). ຢ່າງທີຫ້າ ອຳນາດໃໝ່ນີ້ຈະຍົກຍ້ອງຕົນເອງ ແລະ ຄິດວ່າຕົນເອງດີກວ່າພະອົງໜຶ່ງ.

## ສິ່ງທີ່ເກີດຂຶ້ນໃນຍຸກສຸດທ້າຍ (ດານີເອນ 11:40-45)

### ແມ່ນຫຍັງໄດ້ເກີດຂຶ້ນໃນດານີເອນ 11:40-45?

1. ກະສັດທາງທິດໃຕ້ກໍ່ໄດ້ຕໍ່ສູ້ກະສັດທາງທິດເໜືອ. ສົງຄາມຂອງພວກເຂົາກໍເປັນຄໍາພັນລະນາສໍາລັບການປະຕິວັດຂອງປະເທດຝຣັ່ງ. ການປະຕິວັດຢູ່ຝຣັ່ງນັ້ນໄດ້ພະຍາຍາມຢຸດຕິສາດສະໜາ ແລະ ໂບດໂຣມັນກາໂຕລິກ. ແຕ່ມັນກໍລົ້ມເຫຼວ.

2. ກະສັດແຫ່ງທິດເໜືອກໍຕໍ່ສູ້ກະສັດທາງທິດໃຕ້ແລ້ວກໍ່ຊະນະ. ສົງຄາມນີ້ກໍສະແດງໃຫ້ພວກເຮົາເຫັນວ່າ ກອງທັບຂອງໂບດໂລມັນກາໂຕລິກແລະໝູ່ເພື່ອນຂອງມັນກໍຈະເອົາຊະນະກຸ່ມທີ່ບໍ່ມີຄວາມເຊື່ອ ແລະແລ້ວ ພວກເຂົາກໍຈະຮ່ວມເຂົ້າກັນ.

3. ເອໂດມ ໂມອາບ ແລະ ປະຊາຊົນຂອງອາໂມນຈະໜີຈາກອໍານາດຂອງໂຣມ. ເອໂດມ ໂມອາບ ແລະ ອາໂມນ ກໍເປັນຮູບທີ່ພັນລະນາສໍາລັບຄົນທີ່ບໍ່ໄດ້ເປັນສ່ວນໜຶ່ງຂອງຄຣິສຕະຈັກຂອງພຣະເຈົ້າ. ແຕ່ໃນເວລາອັນສຸດທ້າຍນັ້ນພວກເຂົາຈະຮ່ວມກັບປະຊາຊົນຂອງພຣະເຈົ້າ.

4. ກະສັດແຫ່ງທິດເໜືອກໍ່ກຽມພ້ອມທີ່ຈະຈູ່ໂຈມດິນແດນທີ່ສວຍງາມ. ພຣະເຈົ້າຊົງທໍາລາຍກະສັດທາງທິດເໜືອ ແລະອໍານາດຊົ່ວຮ້າຍທັງໝົດແລ້ວພຣະເຈົ້າກໍຈະເລີ່ມຈັດຕັ້ງອານາຈັກອັນນິລັນດອນຂອງພຣະອົງ.

## ຂໍ້ຄິດເພີ່ມເຕີມ

ທ່ານມາຕິນລູເທີ ໄດ້ເຊື່ອວ່າ "ສິ່ງແປກປະຫຼາດອັນໜ້າຢ້ານກ" ໃນດານີເອນ 11:31 ແມ່ນສະແດງໃຫ້ເຫັນໂບດໂຣມັນກາໂຕລິກແລະຄຳສອນຂອງໂບດນີ້. ດັ່ງນັ້ນ ພວກເຮົາສາມາດເຫັນຈາກລູເທີວ່າ ມັນມີການພົວພັນອັນຊັດເຈນລະຫວ່າງ ດານີເອນ ບົດທີ11 ແລະ ດານີເອນ ບົດທີ7 ແລະ 8. ບົດພຣະຄຳພີທັງໝົດນີ້ ກໍສະແດງໃຫ້ພວກເຮົາເຫັນວຽກງານແລະຄຳສັ່ງສອນຂອງໂບດໂຣມນກາໂຕລິກໃນປະຫວັດສາດ. ທ່ານນາງເອເລັນຈີໄວທ໌ກ່າວວ່າ: "ໂບດໂລມັນກາໂຕລິກບໍ່ໄດ້ປ່ອຍໃຫ້ໂບດອື່ນໆທີ່ຢູ່ພາຍໃຕ້ການຄວບຄຸມຂອງຕົນເອງໃຫ້ມີອິດສະຫຼະພາບ. ບໍ່ມີໂບດໃດໄດ້ຮັບອະນຸຍາດໃຫ້ຕັດສິນວ່າສິ່ງໃດດີຫຼືສິ່ງໃດບາບສຳລັບກຸ່ມຕົນເອງ. ທັນທີທັນໃດທີ່ໂບດໂລມັນກາໂຕລິກໄດ້ຮັບອຳນາດ ລາວກໍໃຊ້ອຳນາດຂອງລາວເພື່ອທຳລາຍຜູ້ໃດກໍ່ຕາມທີ່ບໍ່ຍອມຮັບເອົາການຄວບຄຸມຈາກລາວ. ເທື່ອລະໂບດ ແລະໂບດທັງໝົດກໍໄດ້ມາຢູ່ພາຍໃຕ້ການຄວບຄຸມແລະອຳນາດຂອງໂບດນີ້." (ປື້ມທ່ານນາງເອເລັນຈີໄວທ໌).

## ຄຳຖາມຄົ້ນຄ້ວາ:

1. ພວກເຮົາຕ້ອງສະແດງໃຫ້ເຫັນວ່າພວກເຮົາຫ່ວງໃຍໃນຄວາມຮູ້ສຶກຂອງຄົນອື່ນໆທີ່ບໍ່ໄດ້ເຊື່ອສິ່ງທີ່ພວກເຮົາເຮັດ. ດັ່ງນັ້ນ ພວກເຮົາຄວນຈະມີຄວາມເມດຕາແລະຄວາມສຸພາບຕໍ່ຄົນອື່ນໆ ເມື່ອພວກເຮົາເປັນພະຍານຕໍ່ເຂົາ. ພວກເຮົາສາມາດແບ່ງປັນຄວາມຈິງກ່ຽວກັບບົດບາດທີ່ໂບດໂຣມັນກາໂຕລິກຈະມີໃນຍຸກສຸດທ້າຍໃນທາງທີ່ສະແດງອອກເຖິງຄວາມຮັກໄດ້ແນວໃດ?.

2. ດານີເອນ 11:33 ໄດ້ກ່າວວ່າ "ພວກຜູ້ນຳທີ່ມີປັນຍາຈະແບ່ງປັນຄວາມຮູ້ໃຫ້ແກ່ຄົນອື່ນຫຼາຍຄົນ ແຕ່ໃນຊົ່ວເວລາໜຶ່ງ ພວກເຂົາບາງຄົນຈະຖືກຂ້າໃນສະໜາມຮົບ ແລະ ຖືກເຜົາໃຫ້ຕາຍ ບາງຄົນກໍຈະຖືກປຸ້ນ ແລະ ຖືກ

ຈັບໄປເປັນຊະເລີຍ”. ຂໍ້ພຣະຄຳພີນີ້ບອກພວກເຮົາວ່າຈະເກີດຫຍັງກັບປະຊາຊົນຂອງພຣະເຈົ້າ ຍ້ອນຄວາມເຊື່ອຂອງພວກເຂົາ? ຫຼາຍຄົນໃນນີ້ໄດ້ເຮັດສິ່ງໃດກ່ອນທີ່ພວກເຂົາຈະຖືກຂ້າ? ມັນສອນບົດຮຽນອັນໃດແກ່ເຮົາໃນທຸກມື້ນີ້?

# ບົດທີ 13

## ຈາກພື້ນດິນໄປສູ່ດວງດາວ

**21-27 ມີນາ**

**ບ່າຍວັນສະບາໂຕ 21 ມີນາ**

**<u>ອ່ານສຳລັບບົດຮຽນອາທິດນີ້</u>**

**ດານີເອນ ບົດທີ 12; ໂລມ 8:34; ເຮັບເລີ 7:25; ໂລມ 8:18; ເຮັບເລີ 2:14,15; ໂຢຮັນ 14:29.**

**ຂໍ້ຄວນຈຳ:** *"ພວກຜູ້ທີ່ມີປັນຍາຈະຮຸ່ງເຮືອງ ເໝືອນດວງດາວທີ່ສະຫວ່າງສະໄຫວທີ່ຢູ່ເທິງທ້ອງຟ້າ ຜູ້ທີ່ສັ່ງສອນຄົນທັງຫຼາຍໃຫ້ເຮັດໃນສິ່ງທີ່ຖືກຕ້ອງກໍຈະຮຸ່ງເຮືອງຕະຫຼອດໄປເໝືອນດວງດາວ" (ດານີເອນ 12:3).*

ພຣະທຳດານີເອນທັງໝົດສະແດງໃຫ້ພວກເຮົາເຫັນວ່າ ພຣະເຈົ້າຊົງກະທຳສິ່ງຕ່າງໆໃຫ້ດີສຳລັບປະຊາຊົນຂອງພຣະອົງໃນທີ່ສຸດ.

ດັ່ງທີ່ພວກເຮົາໄດ້ເຫັນໄປແລ້ວ ດານີເອນແລະໝູ່ຂອງລາວກໍໄດ້ຄົງມີຄວາມສັດຊື່ຕໍ່ພຣະເຈົ້າ. ພວກເຂົາໄດ້ສະແດງເຖິງສະຕິປັນຍາແລະຄວາມເຊື່ອໃນພຣະເຈົ້າໃນຊ່ວງເວລາທີ່ຍາກລຳບາກ. ໃນທາງດຽວກັນນັ້ນ ປະຊາຊົນຂອງພຣະເຈົ້າກໍຈະສະແດງອອກເຖິງຄວາມເຊື່ອຂອງພວກເຂົາໃນ "ຊ່ວງເວລາທີ່ຍາກລຳບາກ" (ດານີເອນ 12:1) ໃນຊ່ວງເວລານີ້ ປະຊາຊົນຂອງພຣະເຈົ້າຈະສະແດງໃຫ້ເຫັນເຖິງສະຕິປັນຍາ ແລະ ຄວາມເຂົ້າໃຈອັນດຽວກັນທີ່ດານີເອນ ແລະ ໝູ່ເພື່ອນຂອງລາວໄດ້ສະແດງໃຫ້ເຫັນໃນນະຄອນບາບີໂລນ. ແລ້ວປະຊາຊົນຂອງພຣະເຈົ້າຈະນຳພາຄົນອື່ນໆໄປຫາພຣະເຈົ້າ. ພວກເຂົາຈະສະແດງໃຫ້ຄົນເຫັນວ່າຈະຕ້ອງມີຊີວິດອັນບໍລິບູນຄືແນວໃດ. ຄົນຂອງພະເຈົ້າໃນຍຸກສຸດທ້າຍກໍຈະຕາຍຫຼືຖືກຂ້າ. ຮ່າງກາຍທີ່ຕາຍແລ້ວຂອງພວກເຂົາກໍຈະຖືກຝັງໄວ້ໃນໂລກນີ້. ແລ້ວພວກເຂົາກໍຈະ

ກາຍເປັນດິນ. ແຕ່ພຣະເຢຊູຈະປຸກພວກເຂົາຂຶ້ນມາຈາກຄວາມຕາຍ ແລະ ປະທານຊີວິດອັນຕະຫຼອດໄປເປັນນິດໃຫ້ແກ່ເຂົາ (ດານີເອນ 12:2).

## ວັນອາທິດ 22 ມີນາ

**<u>ມີຄາເອນ, ຜູ້ພິທັກຂອງເຮົາ (ດານີເອນ 12:1)</u>**

**ໃຫ້ເຮົາອ່ານກ່ຽວກັບຍຸກສຸດທ້າຍໃນດານີເອນ 12:1. ແມ່ນໃຜປ່ຽນແປງປະຫວັດສາດໄດ້ໃນຍຸກສຸດທ້າຍ? ພຣະທຳໂລມ 8:34 ແລະ ເຮັບເລີ 7:25 ນັ້ນຊ່ວຍໃຫ້ພວກເຮົາເຂົ້າໃຈ ດານີເອນ 12:1 ແນວໃດ?**

ມາຮອດຕອນນີ້ ເຮົາເຫັນວ່າທຸກໆບົດໃນດານີເອນກໍເລີ່ມຕົ້ນດວ້ຍຜູ້ນຳທີ່ນະມັດສະການພຣະປອມ. ດານີເອນ ບົດທີ12 ກໍ່ເລີ່ມດ້ວຍຜູ້ຄົນໜຶ່ງ ແຕ່ຜູ້ນຳຄົນນີ້ກໍແຕກຕ່າງຈາກຜູ້ນຳທີ່ພວກເຮົາໄດ້ເຫັນໃນບົດອື່ນໆ. ຜູ້ນຳຜູ້ນີ້ແມ່ນເຈົ້າຊາຍ ຫຼືຜູ້ພິທັກຈາກຟ້າສະຫວັນ. ເພິ່ນໄດ້ລຸກຂຶ້ນມາເພື່ອຊ່ວຍປະຊາຊົນຂອງພຣະອົງໃຫ້ພົ້ນຈາກສັດຕູຂອງພວກເຂົາ.

ດານີເອນ 12:1 ສະແດງໃຫ້ເຫັນສອງຢ່າງທີ່ສຳຄັນກ່ຽວກັບອຳນາດຂອງມີຄາເອນ. ຄຳກິລິຍາທີ່ຂຽນວ່າ “ຢືນ” ກໍເຮັດໃຫ້ເຮົາເຫັນວ່າມີຄາເອນກຳລັງເຮັດສິ່ງໃດ. ກ່ອນອື່ນຄຳວ່າ “ຢືນ” ກໍສະແດງໃຫ້ພວກເຮົາເຫັນກະສັດຜູ້ຢືນຂຶ້ນເພື່ອເອົາຊະນະແລະຄວບຄຸມ. ຄຳກິລິຍານີ້ຍັງສະແດງໃຫ້ເຮົາເຫັນຄົນຜູ້ໜຶ່ງທີ່ກຳລັງປະຕິບັດໂຕຄືກັບຜູ້ນຳກອງທັບ. ຜູ້ນຳນີ້ກໍປົກປ້ອງປະຊາຊົນຂອງຕົນເອງ. ເພິ່ນໄດ້ນຳພາພວກເຂົາເປັນພິເສດໃນຊ່ວງເວລາສຸດທ້າຍຂອງສົງຄາມລະຫວ່າງຄວາມດີ ແລະ ຄວາມຊົ່ວ.

ຢ່າງທີສອງ ຄຳກິລິຍາ “ຢືນ” ກໍຍັງສະແດງໃຫ້ພວກເຮົາເຫັນວຽກງານຂອງທະນາຍທີ່ຢູ່ໃນຫ້ອງພິພາກສາ. ມີຄາເອນ “ຢືນ” ເພື່ອເຮັດໜ້າທີ່ເປັນທະນາຍໃນຫ້ອງພິພາກສາຂອງສະຫວັນ. ພຣະອົງຊົງເປັນບຸດມະນຸດ ດັ່ງນັ້ນພຣະອົງຈຶ່ງໄດ້ມາຢູ່ຕໍ່ໜ້າພຣະພັກຂອງພຣະບິດາ. ມີຄາເອນໄດ້ຊ່ວຍປະຊາຊົນຂອງພຣະເຈົ້າໃນຊ່ວງເວລາທີ່ພຣະເຈົ້າໄດ້ປະຕິບັດວຽກງານໃນຖານະຜູ້ພິພາກສາ (ດານີເອນ 7:9-14).

ດັ່ງນັ້ນເມື່ອມີຄາເອນຍືນຂຶ້ນ ພວກເຮົາຈະເຫັນວ່າພຣະອົງຊົງເປັນທັງຜູ້ບັງຄັບບັນຊາແລະເປັນທະນາຍຄວາມ. ພຣະອົງມີອຳນາດທີ່ຈະເອົາຊະນະສັດຕູຂອງພຣະເຈົ້າ.

**ວັນຈັນ 23 ມີນາ**

**ຊຽນໄວ້ໃນໜັງສື (ດານີເອນ 12:1)**

**ດານີເອນ 12:1 ກ່າວວ່າ "ເມື່ອເຖິງເວລານັ້ນ ປະຊາຊົນທັງປວງຂອງພຣະເຈົ້າທີ່ມີຊື່ໃນໜັງສືຂອງພຣະເຈົ້າຈະໄດ້ພົ້ນ" (ປຶ້ມພຣະຄຳພີພາສາອັງກິດສະບັບ ERV ກໍຍັງເອີ້ນປຶ້ມນີ້ວ່າ "ປຶ້ມແຫ່ງຊີວິດ") ທູດສະຫວັນກຳລັງກ່າວສິ່ງໃດໃນຂໍ້ພຣະຄຳພີນີ້?**

ມີຄາເອນໄດ້ຢືນຂຶ້ນເພື່ອຊ່ວຍປະຊາຊົນຂອງພຣະອົງ. ໃນເວລານັ້ນໄດ້ມີຊ່ວງເວລາແຫ່ງຄວາມຍາກລຳບາກອັນຮ້າຍແຮງ. ປະຊາຊົນຂອງພຣະເຈົ້າຈະຖືກຊ່ວຍໃຫ້ພົ້ນໃນເວລານີ້. ໃນຫ້ອງພິພາກສາໃນສະຫວັນ ພຣະເຢຊູໄດ້ເຮັດວຽກເປັນທະນາຍຄວາມຂອງພວກເຂົາ. ພຣະອົງໄດ້ແກ້ຕົວໃຫ້ພວກເຂົາຕໍ່ຄຳກ່າວຫາຂອງຊາຕານ ພຣະອົງໄດ້ຊ່ວຍທຸກໆຄົນທີ່ມີຊື່ຊຽນໄວ້ໃນປຶ້ມໜັງສືທະບຽນແຫ່ງຊີວິດ.

ປຶ້ມໜັງສືນີ້ແມ່ນອັນໃດແທ້? ມີປຶ້ມໜັງສືສອງຫົວໃນສະຫວັນ. ຫົວໜຶ່ງແມ່ນປຶ້ມທີ່ສະແດງລາຍຊື່ຂອງຜູ້ເປັນຂອງພຣະເຈົ້າ. ປຶ້ມນີ້ຖືກເອີ້ນວ່າປຶ້ມໜັງສືແຫ່ງຊີວິດ (ອົບພະຍົບ 32:32; ລູກາ 10:10; ເພງສັນລະເສີນ 69:28; ຟີລິບປິນ 4:31; ພະນິມິດ 17:8.

ນອກຈາກນັ້ນ ພຣະຄຳພີຍັງກ່າວເຖິງປຶ້ມບັນທຶກ. ປຶ້ມເຫຼົ່ານີ້ກໍສະແດງໃຫ້ເຫັນວຽກງານຫຼືການກະທຳຂອງມະນຸດ (ເພງສັນລະເສີນ 56:8; ມາລະກີ 3:16; ເອຊາຢາ 65:6). ພຣະເຈົ້າຊົງໃຊ້ປຶ້ມເຫຼົ່ານີ້ໃນວຽກງານຂອງພຣະອົງໃນຖານະເປັນຜູ້ພິພາກສາ. ປຶ້ມເຫຼົ່ານີ້ສະແດງໃຫ້ເຫັນວຽກງານຂອງທຸກຄົນສຳລັບພຣະຜູ້ເປັນເຈົ້າດັ່ງນັ້ນປຶ້ມເຫຼົ່ານີ້ກໍສະແດງເຖິງຊື່ແລະວຽກງານຂອງມະນຸດທຸກໆຄົນ.

<u>ຕື່ນຂື້ນຈາກຄວາມຕາຍ (ດານີເອນ 12: 2,3)</u>

**ໃຫ້ອ່ານດານີເອນ 12:2,3 ແມ່ນຫຍັງກຳລັງເກີດຂື້ນໃນຂໍ້ພຣະຄຳພີເຫຼົ່ານີ້? ເປັນຫຍັງມັນຈຶ່ງເປັນເລື່ອງສຳຄັນຢ່າງແຮງຕໍ່ພວກເຮົາ?**

ກ່ອນອື່ນນັ້ນ ຂໍ້ພຣະຄຳພີຕອນນີ້ກ່າວເຖິງຜູ້ທີ່ "ຕາຍໄປແລ້ວ (ນອນຫຼັບໃນດິນ)" (ດານີເອນ 12:2,3) "ການນອນ" ກໍຄືພາບທີ່ພັນລະນາເຖິງຄວາມຕາຍ. ມັນສະແດງໃຫ້ພວກເຮົາເຫັນວ່າຮ່າງກາຍຂອງມະນຸດນັ້ນບໍ່ໄດ້ມີຈິດວິນຍານທີ່ຕາຍບໍ່ໄດ້. ເມື່ອຄົນໆໜຶ່ງຕາຍ ຈິດວິນຍານຂອງລາວບໍ່ໄດ້ຄົງຢູ່. ຄົນໆນັ້ນກໍຢຸດທີ່ຈະມີຊີວິດ ລາວກໍຄືກັບຄົນທີ່ນອນຫຼັບຈົນກວ່າການຟື້ນຄືນຊີວິດເກີດຂື້ນເວລາທີ່ພຣະເຈົ້າຊົງເອີ້ນເອົາປະຊາຊົນຂອງພຣະອົງອອກຈາກຄວາມຕາຍ. ຢ່າງທີສອງຄື ພຣະທຳດານີເອນ 12:2,3 ສະແດງໃຫ້ພວກເຮົາເຫັນວ່າ ການຟື້ນຄືນຊີບນັ້ນປ່ຽນແປງສິ່ງທີ່ເກີດຂື້ນຕໍ່ຮ່າງກາຍຍ້ອນຄວາມບາບ. ດານີເອນ 12:2 ກໍກ່າວວ່າ: "ຫຼາຍຄົນໃນພວກເຫຼົ່ານີ້ທີ່ຕາຍໄປແລ້ວ (ນອນຢູ່ໃນດິນ) ຈະມີຊີວິດອີກ". ທ່ານເຫັນຄຳເວົ້າທີ່ຂຽນບອກວ່າ "ຕາຍໄປແລ້ວ" ຫຼືໃນພາສາອັງກິດວ່າ "ເປັນຝຸ່ນໃນດິນ" ຫຼືບໍ່? ໃນພາສາເຮັບເລີ ຄຳເວົ້າເຫຼົ່ານີ້ກໍຖືກຂຽນວ່າເປັນ "ໂລກແຫ່ງຂີ້ຝຸ່ນ" ການໃຊ້ຄຳເວົ້າທີ່ແປກນີ້ກໍຊ່ວຍໃຫ້ເຮົາຈື່ປະຖົມມະການ 3:19. ພຣະທຳຕອນນີ້ແມ່ນບ່ອນທີ່ຄຳວ່າ "ໂລກ" ມາຈາກຄຳວ່າ "ພື້ງຂີ້ດິນ". ນັ້ນສະແດງໃຫ້ພວກເຮົາເຫັນບາງຢ່າງທີ່ສຳຄັນ. ພວກເຮົາຮູ້ວ່າຄວາມບາບຂອງອາດາມນັ້ນນຳຄວາມຕາຍມາສູ່ພວກເຮົາທັງໝົດ. ແຕ່ໃນການສະເດັດຄັ້ງທີສອງນັ້ນ ຄວາມຕາຍຈະບໍ່ສາມາດທຳລາຍເຮົາໄດ້ອີກຕໍ່ໄປ. ດັ່ງທີ່ທ່ານເປົາໂລໄດ້ກ່າວວ່າ: "ຄວາມຕາຍໄດ້ຖືກທຳລາຍສາແລ້ວ" (1ໂກລິນໂທ 15:54).

**ອ່ານໂລມ 8:18 ແລະ ເຮັບເລີ 2:14,15 ຂໍ້ພຣະຄຳພີເຫຼົ່ານີ້ໃຫ້ເຫດຜົນອັນໃດແກ່ເຮົາເພື່ອບໍ່ໃຫ້ເຮົາຕ້ອງຢ້ານກົວຄວາມຕາຍ?.**

## ປື້ມທີ່ຖືກຕີຕາປະທັບໄວ້ (ດານີເອນ 12:4)

ອ່ານດານີເອນ 12:4 ແລະ ໂຢຮັນ 14:29. ອີງຕາມຂໍ້ພຣະຄຳພີເຫຼົ່ານີ້ ເປັນຫຍັງພຣະທຳດານີເອນຈຶ່ງຖືກ ຕີຕາປະທັບໄວ້ຈົນຮອດວາລະສຸດທ້າຍ? ທ່ານນາງເອເລນຈີໄວທ໌ຂຽນວ່າ "ຕັ້ງແຕ່ປີ 1798 ພຣະທຳດານີເອນບໍ່ໄດ້ຖືກປິດໄວ້ອີກຕໍ່ໄປ. ຕັ້ງແຕ່ເວລານັ້ນມາ ຄວາມຮູ້ຂອງເຮົາກ່ຽວກັບຂ່າວສານພິເສດໃນພຣະທຳດານີເອນນັ້ນກໍໄດ້ເພີ່ມທະວີຂຶ້ນ. ນັ້ນເປັນເຫດຜົນທີ່ຫຼາຍຄົນໄດ້ປະກາດວ່າ ເວລາສຳລັບວຽກງານຂອງພຣະເຈົ້າໃນຖານະເປັນຜູ້ພິພາກສານັ້ນໄດ້ໃກ້ເຂົ້າມາແລ້ວ" (ປື້ມສົງຄາມແຫ່ງປະຫວັດສາດ). "ຄົນໄດ້ເລີ່ມສົນໃຈໃນພຣະທຳດານີເອນ. ເລື່ອງນີ້ໄດ້ເກີດຂຶ້ນໃນຕອນທ້າຍສະຕະຫວັດທີ 18 ແລະ ໃນເບື້ອງຕົນຂອງສະຕະຫວັດທີ 19.... ການສຶກສາຂອງພວກເຂົາໄດ້ນຳໄປສູ່ຄວາມເຊື່ອໄປທົ່ວໂລກວ່າ ການສະເດັດມາຄັ້ງທີສອງນັ້ນໃກ້ເຂົ້າມາແລ້ວ. ຄົນບາງສ່ວນທີ່ໄດ້ປະກາດຂ່າວສານນີ້ກໍເປັນນັກຮຽນພຣະຄຳພີໃນປະເທດອັງກິດເຊັ່ນໂຢເຊບວອຟ ໃນພາກຕາເວັນອອກກາງ, ມານີເອນ ເລກັນຊາ ໃນອາເມລິກາໃຕ້ ແລະ ວິລຽມ ມິນເລີ້ ໃນປະເທດສະຫະລັດອາເມລິກາ. ຊາຍເຫຼົ່ານີ້ ແລະ ນັກຮຽນນັກສຶກສາຂ່າວສານຍຸກສຸດທ້າຍກໍໄດ້ສຶກສາຄົ້ນຄວ້າພຣະທຳດານີເອນ. ພວກເຂົາໄດ້ກ່າວວ່າ ການສະເດັດກັບມາຂອງພຣະເຢຊູນັ້ນໃກ້ເຂົ້າມາແລ້ວ. ຄວາມເຊື່ອນີ້ກໍເປັນເຫດຜົນສຳລັບວຽກງານທີ່ຄຣິດສຈັກຄະນະວັນເສົາເຮັດຢູ່ໃນທຸກມື້ນີ້." (ຄັດມາຈາກປື້ມ SDA Bible Commentary, Vol 4).

## ຊ່ວງເວລາການລໍຄອຍ (ດານີເອນ 12:5-13)

**ໃຫ້ທ່ານອ່ານຕອນຈົບຂອງພຣະທໍາ ດານີເອນ 12:5-13. ພຣະທໍາເຫຼັ້ມນີ້ໄດ້ຈົບລົງແນວໃດ?**

ໃນຕອນທ້າຍຂອງພຣະທໍາດານີເອນນັ້ນ ພວກເຮົາອ່ານກ່ຽວກັບຂ່າວສານພິເສດກ່ຽວກັບເວລາ (1) ຂ່າວສານອັນທີໜຶ່ງແມ່ນ “ຈະເປັນເວລາສາມປີເຄິ່ງ”. ນັ້ນກໍຄືຄໍາຕອບສໍາລັບຄໍາຖາມທີ່ວ່າ “ຍັງອີກດົນປານໃດ ສິ່ງອັດສະຈັນເຫຼົ່ານີ້ ຈະໝົດສິ້ນໄປ?” (ດານີເອນ 12:6). “ສິ່ງອັດສະຈັນ” ກໍຄືສິ່ງທີ່ພວກເຮົາອ່ານເຖິງໃນດານີເອນ ບົດທີ 7,8 ແລະ 11.

ຂ່າວສານອີກສອງຢ່າງຄື ເວລາ 1290 ມື້ ແລະ 1335 ມື້. ພວກມັນຄືຄໍາຕອບຂອງທູດສະຫວັນທີ່ໃຫ້ແກ່ຄໍາຖາມຂອງດານີເອນໃນດານີເອນ 12:8 “ນາຍເອີຍ, ສິ່ງນີ້ຈະສິ້ນສຸດລົງໄດ້ຢ່າງໃດ?” ຂ່າວສານເວລາທັງສອງຢ່າງຄືເວລາ 1290 ມື້ ແລະ 1335 ມື້ ກໍ່ເລີ່ມຕົ້ນດ້ວຍວຽກງານເຂົານ້ອຍ. ເຂົານ້ອຍໄດ້ນໍາເອົາວຽກງານປະຈໍາວັນທີ່ພຣະເຢຊູໄດ້ເຮັດສໍາລັບຄົນບາບທັງຫຼາຍໃນພຣະວິຫານໃນສະຫວັນໄປ (ອ່ານດານີເອນ 8:13). ທັງຊ່ວງເວລາ 1290 ມື້ ແລະ 1335 ມື້ ກໍໄດ້ເລີ່ມຕົ້ນໃນປີ ຄສ 508. ໃນຊ່ວງເວລານີ້ ກະສັດໂຄຼວິດໄດ້ກາຍເປັນຄາໂຕລິກ. ໃນການສຶກສາພຣະທໍາດານີເອນ ບົດທີ8 ພວກເຮົາກໍ່ເຫັນວ່າ ວ່າເວລາ 1290 ມື້ໄດ້ສິ້ນສຸດລົງໃນປີ 1798 ເມື່ອກອງທັບຂອງນາໂປເລອອນໄດ້ຈັບສັນຕະປະປາ. ເວລາ 1335 ມື້ ໄດ້ຈົບລົງໃນປີ 1843. ໃນເວລານີ້ນັກຮຽນຂອງວິລຽມ ມິນເລີ ກໍໄດ້ເລີ່ມສຶກສາຄົ້ນຄວ້າຂ່າວສານທີ່ຢູ່ໃນພຣະທໍາດານີເອນ. ພວກເຂົາໄດ້ລໍຖ້າແລະຫວັງໃນການສະເດັດກັບມາຂອງພຣະເຢຊູ.

## ຂໍ້ຄິດເພີ່ມເຕີມ

"ອາຈານເປົາໂລໄດ້ເຕືອນຄຣິດສຕະຈັກບໍ່ໃຫ້ຊອກຫາວ່າພຣະເຢຊູຈະກັບມາໃນຍຸກຂອງເພິ່ນ. 'ຢ່າໃຫ້ຜູ້ໃດຫຼອກລວງພວກເຈົ້າໃນທາງໃດທາງໜຶ່ງເລີຍ. ດ້ວຍວ່າວັນນັ້ນຈະບໍ່ມາເຖິງຈົນກວ່າ ການທໍລະຍົດຄັ້ງສຸດທ້າຍຈະເກີດຂຶ້ນກ່ອນ ແລະຜູ້ຊົ່ວຮ້າຍຈະປະກົດຕົວຂຶ້ນ ຄືຜູ້ທີ່ຖືກໝາຍໄວ້ສໍາລັບນະຣົກ' (2 ເທລະໂລນີກ 2:3). ຄໍາເວົ້າຂອງອາຈານເປົາໂລນັ້ນ ບອກພວກເຮົາກ່ຽວກັບສິ່ງຕ່າງໆທີ່ຈະຕ້ອງເກີດຂຶ້ນກ່ອນທີ່ພຣະເຢຊູຈະສາມາດກັບມາ. ກ່ອນອື່ນ ຜູ້ຊົ່ວຮ້າຍຈະຕ້ອງມີອໍານາດເປັນເວລາດົນ. 'ຜູ້ຊົ່ວຮ້າຍ' ຄືຄໍາພັນລະນາພາບສໍາລັບຜູ້ນໍາຂອງໂບດໂຣມັນກາໂຕລິກ. ພຣະຄໍາພີໄດ້ສະແດງໃຫ້ພວກເຮົາເຫັນວ່າໂບດໂຣມັນກາໂຕລິກຈະມີອໍານາດເໜືອກະສັດແລະລັດຖະບານຕ່າງໆໃນໄລຍະເວລາ 1260 ປີ. ແຕ່ແລ້ວອໍານາດຂອງໂບດນີ້ກໍສິ້ນສຸດລົງ ໃນປີ 1798. ພຣະເຢຊູບໍ່ສາມາດກັບມາກ່ອນເວລານັ້ນ ນັ້ນເປັນເຫດຜົນທີ່ຂ່າວສານກ່ຽວກັບການສະເດັດກັບມາຂອງພຣະເຢຊູນັ້ນບໍ່ສາມາດຖືກປະກາດອອກໄປຈົນກວ່າປີ 1798." (ປື້ມຂອງທ່ານນາງເອເລັນຈີໄວທ໌)

## ຄໍາຖາມຄົ້ນຄວ້າ:

1. ພວກເຮົາກໍາລັງສ່ຽງອັນໃດໂດຍການຕັ້ງມື້ ຫຼື ວັນເວລາສໍາລັບເຫດການທີ່ຈະເກີດຂຶ້ນໃນອະນາຄົດ? ແມ່ນຫຍັງໄດ້ເກີດຂຶ້ນກັບຄວາມເຊື່ອຂອງຫຼາຍຄົນເມື່ອສິ່ງເຫຼົ່ານີ້ບໍ່ເກີດຂຶ້ນຕາມທີ່ໄດ້ຄາດຫວັງເອົາໄວ້? ພຣະເຢຊູດໄດ້ກ່າວສິ່ງໃດໃນ ໂຢຮັນ 14:29 ເຊິ່ງຄວນຊ່ວຍພວກເຮົາໃຫ້ເຂົ້າໃຈຄໍາພະຍາກອນ ຫຼື ຂ່າວສານພິເສດກ່ຽວກັບອະນາຄົດ? ຄໍາເວົ້າຂອງພຣະເຢຊູຍັງສາມາດຊ່ວຍໃຫ້ພວກເຮົາບໍ່ຕົກຢູ່ໃນກັບດັກຂອງການສ້າງຄໍາພະຍາກອນທີ່ປອມແລະເຊື່ອໃນຄໍາພະຍາກອນຕ່າງໆໄດ້ແນວໃດ?

2. ເປັນຫຍັງຂ່າວປະເສີດກ່ຽວກັບພຣະເຢຊູຈຶ່ງເປັນຄວາມຫວັງອັນດຽວທີ່ຈະເຮັດໃຫ້ເຮົາມີຊື່ຂຽນໄວ້ໃນໜັງສືແຫ່ງຊີວິດໃນສະຫວັນໄວ້? ຖ້າປາດສະຈາກຄຳສັນຍານີ້ແລ້ວ ພວກເຮົາຈະມີຄວາມຫວັງອັນໃດ?